ARISE+

ASEAN Intellectual Property Rights

# ອານຸສັນຍາ ມາດຣິດ



ຄູ່ມືໃນການປົກປ້ອງ
ເຄື່ອງໝາຍການຄ້າສາກົນ
ສຳລັບຜູ້ປະກອບການລາວ

ເສັ້ນທາງສູ່ການປົກປ້ອງ
ເຄື່ອງຫມາຍການຄ້າ-ການສ້າງຍີ່ຫໍ້
ລະດັບໂລກ

Funded by the European Union

EUIPO
EUROPEAN UNION
INTELLECTUAL PROPERTY OFFICE

ARISE+
ASEAN Intellectual Property Rights

ອານຸສັນຍາ
ມາດຣິດ


**ສຳນັກງານຜູ້ຕາງໜ້າສະຫະພາບເອີຣົບ**
**ປະຈຳສາທາລະນະລັດປະຊາທິປະໄຕປະຊາຊົນລາວ**
ອາຄານເອີຣົບ
ຫນ່ວຍ 19, ຮ່ອມ 2, ຖະຫນົນເສດຖາທິລາດ, ບ້ານຫາຍໂສກ,ເມືອງຈັນທະບູລີ
ຕູ້ ປ.ນ 9325, ນະຄອນຫລວງວຽງຈັນ, ສປປ. ລາວ
+856 (21) 255 575
delegation-laos@eeas.europa.eu
facebook.com/EUinlaos
@euinlaos

**ກົມຊັບສິນທາງປັນຍາ**
ກະຊວງອຸດສາຫະກຳ ແລະ ການຄ້າ
ຖະຫນົນໂພນໄຊ ຕູ້ປ.ນ 4107, ນະຄອນຫລວງວຽງຈັນ, ສປປ. ລາວ
www.dip.gov.la
+856 (21) 253111
dip.laopdr@gmail.com
facebook.com/DIPLaos

**ໂຄງການ ARISE+ IPR**
www.ariseplusipr.eu
Arise+IPR@euipo.europa.eu
facebook.com/EUIPcooperation
@EUIPcooperation



ຄູ່ມືເຫລັ້ມນີ້ ຂຽນຂຶ້ນໂດຍໂຄງການ ARISE+IPR ຮ່ວມກັບ ກົມຊັບສິນທາງປັນຍາ, ກະຊວງ ອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ແລະ ດ້ວຍການຊ່ວຍເຫຼືອ ຂອງທ່ານ ເອເນັດສ໌ໂຕ ຣູບີໂອ, ທີ່ປຶກສາຂອງໂຄງການ. ໂຄງການ ARISE+IPR ຮັບຜິດຊອບທາງດ້ານເນື້ອໃນຂອງຄູ່ມືເຫລັ້ມນີ້ ພຽງແຕ່ຜູ້ດຽວ ແລະ ບໍ່ສາມາດນຳມາໃຊ້ເນື້ອໃນດັ່ງກ່າວ ເພື່ອສະທ້ອນເຖິງມູມມອງຂອງສຳນັກງານຊັບສິນທາງປັນຍາຂອງສະຫະພາບເອີຣົບ (EUIPO) ແຕ່ຢ່າງໃດ. ນະຄອນຫຼວງວຽງຈັນ, ມັງກອນ 2021

# ສາລະບານ


ກ່ຽວກັບໂຄງການ ARISE+IPR 5

ຄຳນຳ ຂອງສຳນັກງານຕາງໜ້າ ສະຫະພາບ ເອີຣົບ ປະຈຳ ສປປ ລາວ 6

ຄຳເຫັນຂອງທ່ານຫົວໜ້າກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ 7

**1. ຍີ່ຫໍ້ສິນຄ້າຂອງທ່ານ - ຊັບສິນທີ່ມີມູນຄ່າສູງທີ່ສຸດຂອງທ່ານ 9**

1.1. ຍຸດທະສາດການສ້າງຫຍີ່ຫໍ້ ແລະ ຄວາມສຳເລັດຂອງທຸລະກິດ 9

1.2. ການສ້າງຫຍີ່ຫໍ້, ການຄຸ້ມຄອງ ແລະ ການຄ້າ 9

1.3. ການປົກປ້ອງຍີ່ຫໍ້ ສິນຄ້າຂອງທ່ານຢູ່ໃນຕະຫລາດຕ່າງປະເທດ 9

**2. ອານຸສັນຍາມາດຣິດ - ການປົກປ້ອງຍີ່ຫໍ້ສິນຄ້າຂອງທ່ານຢູ່ໃນຕະຫລາດ ຕ່າງປະເທດ ໂດຍຜ່ານລະບົບປະຕູດຽວ 10**

2.1. ສະມາຊິກສະຫະພາບມາດຣິດ – ຕະຫລາດທີ່ໜ້າດຶງດູດໃຈ ສຳລັບທຸລະກິດສົ່ງອອກຂອງລາວ 10

2.2. ອານຸສັນຍາມາດຣິດ – ຂັ້ນຕອນທີ່ງ່າຍດາຍສຳລັບຜູ້ນຳໃຊ້ 11

2.2.1. ການຍື່ນຄຳຮ້ອງແບບລວມສູນ ເພື່ອຂໍການປົກປ້ອງຢູ່ຫລາຍປະເທດ 11

2.2.2. ການຄຸ້ມຄອງເຄື່ອງໝາຍການຄ້າແບບລວມສູນ 11

2.3. ຜົນດີ – ປະຢັດຕົ້ນທຶນ, ການຄ້າ ແລະ ການຄຸ້ມຄອງຍີ່ຫໍ້ ທີ່ມີປະສິດທິຜົນ 11

**3. ການເລືອກເຄື່ອງໝາຍການຄ້າ - ການປະຕິບັດທີ່ໄດ້ຮັບຜົນດີ 13**

3.1. ການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ຢູ່ໃນ ສປປ ລາວ 14

3.2. ການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າຢູ່ຕ່າງປະເທດ – ຖານຂໍ້ມູນອອນລາຍ (ASEAN TMview, TMview, Global Brand) 14

**4. ການກະກຽມ ການຍື່ນຄຳຮ້ອງຂໍຈົດທະບຽນສາກົນກ່ຽວກັບເຄື່ອງໝາຍການຄ້າ ການປະຕິບັດທີ່ໄດ້ຮັບຜົນດີ 15**

4.1. ເງື່ອນໄຂ – ການໃຫ້ສິດ + ເຄື່ອງໝາຍເບື້ອງຕົ້ນ ໃນ ສປປ ລາວ 15

4.2. ການຍື່ນຄຳຮ້ອງຂໍຈົດທະບຽນສາກົນຂອງທ່ານ ຢູ່ ກົມຊັບສິນທາງປັນຍາ (DIP) 15

4.3. ເນື້ອໃນຄຳຮ້ອງຂໍຈົດທະບຽນສາກົນຂອງທ່ານ – ຂໍ້ມູນທີ່ຈຳເປັນ ແລະ ຂໍ້ມູນເພີ່ມເຕີມ 16

4.4. ການຈັດໝວດສິນຄ້າ ແລະ ການບໍລິການ – ການນຳໃຊ້ເຄື່ອງມືການຈັດໝວດ (TMclass, ASEAN TMCLASS, MGS) 16

4.5. ການລະບຸຂໍການປົກປ້ອງຢູ່ແຕ່ລະປະເທດ 17

4.6. ການປະເມີນຄ່າໃຊ້ຈ່າຍ ແລະ ຈ່າຍຄ່າທຳນຽມ – ເຄື່ອງມືຄິດໄລ່ຄ່າທຳນຽມມາດຣິດ, ວິທີການຊຳລະ 18

4.7. ການຢັ້ງຢືນ ແລະ ຮັບຮອງຄຳຮ້ອງສາກົນຈາກກົມຊັບສິນທາງປັນຍາ ແລະ ການດັດແກ້ຂໍ້ມູນທີ່ຜິດພາດ 19

ARISE+
ASEAN Intellectual Property Rights


5. ການຈົດທະບຽນສິນຂອງເຄື່ອງໝາຍການຄ້າ (IR) 20

5.1. ວັນທີ ແລະ ຜົນສັກສິດຂອງການຈົດທະບຽນສາກົນ 20

5.1.1. ວັນທີຂອງການຈົດທະບຽນສາກົນ 20

5.1.2. ຜົນສັກສິດຂອງການຈົດທະບຽນສາກົນ 20

5.2. ການຄຸ້ມຄອງການຈົດທະບຽນສາກົນຂອງທ່ານ – ການປະຕິບັດທີ່ໄດ້ຮັບຜົນດີ 21

5.2.1. ການຂະຫຍາຍການປົກປ້ອງໃນອານາເຂດໃໝ່ (ການລະບຸເພີ່ມປະເທດທີ່ຕ້ອງການປົກປ້ອງ) 21

5.2.2. ການບັນທຶກການດັດແກ້ຂໍ້ມູນແບບລວມສູນຂອງການຈົດທະບຽນສາກົນຂອງທ່ານ 22

5.2.3. ການຕໍ່ອາຍຸຂອງການຈົດທະບຽນສາກົນຂອງທ່ານ 23

5.3. ການເພິ່ງພາເຄື່ອງໝາຍເບື້ອງຕົ້ນ ແລະ ການປ່ຽນສະຖານະພາບ ພາຍໃນຫ້າປີ – ຄວາມເປັນເອກະລາດ 24

5.4. ເຄື່ອງມືອອນລາຍເພື່ອການຕິດຕາມ ແລະ ຄຸ້ມຄອງເຄື່ອງໝາຍການຄ້າພາຍຫຼັງການຈົດທະບຽນສາກົນ 24

5.4.1. ລະບົບຕິດຕາມການຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ 25

5.4.2. ເຄື່ອງມືຄຸ້ມຄອງເອກະສານການຈົດທະບຽນເຄື່ອງໝາຍການຄ້າຜ່ານລະບົບມາດຣິດ (MPM) 26

6. ການປົກປ້ອງເຄື່ອງໝາຍການຄ້າຂອງທ່ານ ຢູ່ໃນສະຫະພາບເອີຣົບ 27

6.1. ການຍື່ນຄໍາຮ້ອງໂດຍກົງທີ່ສໍານັກງານຊັບສິນທາງປັນຍາສະຫະພາບເອີຣົບ (EUIPO) (ເສັ້ນທາງເອີຣົບ) 27

6.2. ການລະບຸ ສະຫະພາບເອີຣົບ (EU) ຜ່ານລະບົບມາດຣິດ (ເສັ້ນທາງສາກົນ) – ການປະຕິບັດທີ່ໄດ້ຮັບຜົນດີ 28

6.2.1. ການລະບຸ ສະຫະພາບ ເອີຣົບ (EU) – ເງື່ອນໄຂສະເພາະ 28

6.2.2. ການແຕ່ງຕັ້ງຜູ້ຕາງໜ້າເພື່ອຕິດຕໍ່ພົວພັນກັບສໍານັກງານ EUIPO 29

6.2.3. ການພິມເຜີຍແຜ່ຄັ້ງທໍາອິດ, ການກວດຄົ້ນຂໍ້ມູນ ແລະ ການກວດສອບເບື້ອງຕົ້ນ 30

6.2.4. ການກວດສອບຕາມຫຼັກການປະຕິເສດບົນພື້ນຖານຂອງກົດໝາຍ 32

6.2.5. ການຄັດຄ້ານການຈົດທະບຽນ 33

6.2.6. ການຕັດສິນຂັ້ນສຸດທ້າຍ 33

6.2.7. ການພິມເຜີຍແຜ່ການຈົດທະບຽນສາກົນຄັ້ງທີສອງ ແລະ ການປົກປ້ອງຢູ່ໃນສະຫະພາບເອີຣົບ (EU) 33

6.2.8. ການປ່ຽນສະຖານະພາບເປັນການຈົດທະບຽນເຄື່ອງໝາຍການຄ້າຂອງສະຫະພາບເອີຣົບ (EUTM) 33

6.2.9. ການປ່ຽນແປງການຈົດທະບຽນສາກົນເປັນການຈົດທະບຽນພາຍໃນປະເທດ 34

6.2.10. ການປ່ຽນແທນການຈົດທະບຽນໃນສະຫະພາບ ເອີຣົບ (EU) 34

7. ສະຫຼຸບ 34

ເອກະສານຊ້ອນທ້າຍ

ສະມາຊິກສະຫະພາບ ມາດຣິດ 35

ຄໍາສັບຫຍໍ້ 36

ການອະທິບາຍຄໍາສັບ 36

ເຄື່ອງມືອອນລາຍ ແລະ ການບໍລິການແບບບໍ່ເສຍຄ່າ ສໍາລັບຜູ້ນໍາໃຊ້ລະບົບມາດຣິດ 37

## ໂຄງການສະໜັບສະໜູນການເຊື່ອມໂຍງໃນພາກພື້ນອາຊຽນຈາກ ສະຫະພາບ ເອີຣົບ ເພື່ອການປົກປ້ອງສິດຕໍ່ຊັບສິນທາງປັນຍາ (ARISE+IPR)

ໂຄງການ ARISE+IPR ແມ່ນອົງປະກອບໜຶ່ງໃນແຜນງານການສະໜັບສະໜູນການເຊື່ອມໂຍງໃນພາກພື້ນອາຊຽນຈາກສະຫະພາບ ເອີຣົບ ຫຼື ARISE Plus. ໄລຍະເວລາຂອງໂຄງການ ARISE+IPR ແມ່ນ 5 ປີ, ຊຶ່ງມີງົບປະມານທັງໝົດ ແມ່ນ 5.5 ລ້ານ ເອີໂຣ ເພື່ອຈັດຕັ້ງປະຕິບັດໂຄງການສະໜັບສະໜູນການເຊື່ອມໂຍງໃນລະດັບພາກພື້ນໂດຍຜ່ານການຮ່ວມມືທາງດ້ານຊັບສິນທາງປັນຍາ (IP) ແລະ ແນໃສ່ປັບປຸງລະບົບຊັບສິນທາງປັນຍາ ເພື່ອການສ້າງ, ການປົກປ້ອງ, ການນໍາໃຊ້, ການຄຸ້ມຄອງ ແລະ ການບັງຄັບໃຊ້ສິດ ຕາມແນວທາງການປະຕິບັດ ແລະ ມາດຕະຖານສາກົນ ແລະ ເປົ້າໝາຍຍຸດທະສາດຂອງແຜນປະຕິບັດງານທາງດ້ານຊັບສິນທາງປັນຍາອາຊຽນ ປີ 2016-2025.

ເປົ້າໝາຍຂອງໂຄງການ ARISE+IPR ແມ່ນເພື່ອ:

- ສົ່ງເສີມໃຫ້ປະເທດສະມາຊິກອາຊຽນໃນການເຂົ້າເປັນພາຄີຂອງສົນທິສັນຍາສາກົນ ແລະ ລະບົບການປົກປ້ອງຊັບສິນທາງປັນຍາຂອງສາກົນ;
- ປະກອບສ່ວນໃນການສ້າງຄວາມອາດສາມາດທາງດ້ານສະຖາບັນຂອງສໍານັກງານຊັບສິນທາງປັນຍາຂອງປະເທດສະມາຊິກອາຊຽນ;
- ເພີ່ມຄວາມຮັບຮູ້ທາງດ້ານການເມືອງ ແລະ ການສ້າງຈິດສໍານຶກໃຫ້ສາທະລະນະກ່ຽວກັບຄວາມສໍາຄັນຂອງການບັງຄັບໃຊ້ສິດ ແລະ ການປົກປ້ອງຊັບສິນທາງປັນຍາ;
- ເສີມສ້າງຂີດຄວາມສາມາດຂອງພາກທຸລະກິດຂອງອາຊຽນ ໃນການດໍາເນີນທຸລະກິດ ແລະ ການປົກປ້ອງສິດໃນຊັບສິນທາງປັນຍາ.
- ໃຫ້ການສະໜັບສະໜູນສະເພາະ ປະເທດ ກໍາປູເຈຍ, ສປປ ລາວ ແລະ ມຽນມາ.

ໂຄງການ ARISE+IPR ໄດ້ເຮັດວຽກຢ່າງໃກ້ຊິດກັບ ບັນດາປະເທດສະມາຊິກອາຊຽນ ແລະ ກອງເລຂາອາຊຽນ ເພື່ອເພີ່ມການປົກປ້ອງຊັບສິນທາງປັນຍາໃນພາກພື້ນໃຫ້ເຂັ້ມແຂງຂຶ້ນ ໂດຍຜ່ານບັນດາຂໍ້ລິເລີ່ມໃນການສ້າງຂີດຄວາມສາມາດ, ການພັດທະນາຖານຂໍ້ມູນ, ການແລກປ່ຽນບົດຮຽນຈາກພາກປະຕິບັດທີ່ໄດ້ຮັບຜົນດີ, ການຮັບຮອງເອົາມາດຕະຖານສາກົນ, ການໂຄສະນາກ່ຽວກັບການສ້າງຈິດສໍານຶກ ເພື່ອສົ່ງເສີມການນໍາໃຊ້, ການປົກປ້ອງ ແລະ ການບັງຄັບປະຕິບັດສິດໃນຊັບສິນທາງປັນຍາ. ໂຄງການໄດ້ເຫັນຄວາມເປັນໄປໄດ້ໃນການປັບປຸງຜົນຂອງການຄຸ້ມຄອງຊັບສິນທາງປັນຍາສໍາລັບສະຫະພາບເອີຣົບ ແລະ ອາຊຽນ, ໜ່ວຍງານບັງຄັບປະຕິບັດສິດ, ຫົວໜ່ວຍທຸລະກິດພາຍໃນ ແລະ ຕ່າງປະເທດ ແລະ ສາທາລະນະຊົນ.

ໂຄງການ ARISE+IPR ມຸ່ງຫວັງໃນການສ້າງລະບົບຊັບສິນທາງປັນຍາໃຫ້ໄດ້ຮັບການພັດທະນາໃນລະດັບສູງໃນບັນດາປະເທດສະມາຊິກອາຊຽນທີ່ສົ່ງເສີມນະວັດຕະກໍາ, ການຄ້າ ແລະ ການລົງທຶນ ຢູ່ໃນພາກພື້ນ.

ARISE+
ASEAN Intellectual Property Rights

## ຄຳນຳຈາກ ຫົວໜ້າສຳນັກງານ ຜູ້ຕາງໜ້າສະຫະພາບເອີຣົບ ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໃນເດືອນທັນວາ ປີ 2020, ຫຼັງຈາກການຮ່ວມມືຢ່າງເປັນທາງການເປັນເວລາ 44 ປີ, ສະຫະພາບເອີຣົບ (EU) ແລະ ປະຊາຄົມອາຊຽນ (ASEAN) ໄດ້ຕັດສິນໃຈຍົກລະດັບການພົວພັນໄປສູ່ການເປັນຄູ່ຮ່ວມມືທາງຍຸດທະສາດ. ພາຍໃຕ້ຂອບຂອງການຮ່ວມມືທາງຍຸດທະສາດໃໝ່ນີ້, ສະຫະພາບເອີຣົບ ຍັງຄົງມີຄວາມມຸ້ງໝັ້ນຢ່າງຫຼວງຫຼາຍໃນການຊຸກຍູ້ ການເຊື່ອມໂຍງເສດຖະກິດພາຍໃນອາຊຽນໃຫ້ຫຼາຍຂຶ້ນ ໂດຍສອດຄ່ອງກັບແຜນງານຂອງປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2025.

ໜຶ່ງໃນບັນດາໂຄງການຫຼັກທີ່ໄດ້ຮັບການສະໜັບສະໜູນທາງດ້ານການເງິນຈາກສະຫະພາບເອີຣົບ ເພື່ອນຳໄປສູ່ວັດຖຸປະສົງດັ່ງກ່າວ ແມ່ນ “ການສະໜັບສະໜູນການເຊື່ອມໂຍງໃນພາກພື້ນອາຊຽນ ຈາກສະຫະພາບເອີຣົບ” (ARISE Plus) ດ້ວຍທຶນທັງໝົດ ຈຳນວນ 40ລ້ານເອີໂຣ. ໂຄງການ ARISE Plus ໄດ້ວາງໂຄງສ້າງເພື່ອສະທ້ອນເຖິງລຳດັບວຽກບູລິມະສິດຂອງ AEC ລວມທັງການປົກປ້ອງສິດຊັບສິນທາງປັນຍາ (IPR).

ສະຫະພາບເອີຣົບ ມຸ່ງໝັ້ນທີ່ຈະໃຫ້ການປົກປ້ອງ ແລະ ບັງຄັບໃຊ້ ສິດຊັບສິນທາງປັນຍາໃນທົ່ວໂລກ, ລວມທັງປົກປ້ອງຜ່ານເຄື່ອງໝາຍການຄ້າ. ລະບົບການປົກປ້ອງສິດຊັບສິນທາງປັນຍາ ແມ່ນຮາກຖານຂອງນະໂຍບາຍເສດຖະກິດສະໄໝໃໝ່ ແລະ ເປັນແຮງຊຸກຍູ້ການພັດທະນາ. ສິ່ງນີ້ຈະສາມາດພັດທະນາຄວາມອາດສາມາດ ທາງດ້ານເຕັກໂນໂລຊີຂອງຊຸມຊົນທ້ອງຖິ່ນ ແລະ ສ້າງໂອກາດໃນການສົ່ງອອກ ຊຶ່ງເປັນການສົ່ງເສີມການແຂ່ງຂັນທຸລະກິດ.

ດ້ວຍເຫດນີ້, ສະຫະພາບເອີຣົບ ຈຶ່ງສະໜັບສະໜູນ ການເຊື່ອມໂຍງ ແນວທາງປະຕິບັດ ແລະ ມາດຕະຖານ ທາງດ້ານຊັບສິນທາງປັນຍາ ລະຫວ່າງປະເທດສະມາຊິກອາຊຽນ ຜ່ານໂຄງການ “ARISE Plus IPR” ຊຶ່ງຈັດຕັ້ງປະຕິບັດໂດຍສຳນັກງານຊັບສິນທາງປັນຍາ ແຫ່ງສະຫະພາບເອີຣົບ (EUIPO).

ການປົກປ້ອງສິດຊັບສິນທາງປັນຍາ ລວມທັງ ເຄື່ອງໝາຍການຄ້າ, ແມ່ນກະແຈສຳຄັນໃນການສ້າງການຮ່ວມມືສອງຝ່າຍດ້ານການຄ້າສິນຄ້າລະຫວ່າງ ສະຫະພາບເອີຣົບ-ອາຊຽນ ທີ່ມີມູນຄ່າເຖິງ 237.3 ຕື້ເອີໂຣ ໃນປີ 2018. ລະບົບການປົກປ້ອງຊັບສິນທາງປັນຍາທີ່ເຂັ້ມແຂງ ຈະຊ່ວຍສົ່ງເສີມ ນະວັດຕະກຳ, ຮັບປະກັນໃຫ້ນັກປະດິດສ້າງໄດ້ຮັບແຮງຈູງໃຈທາງເສດຖະກິດ, ເຮັດໃຫ້ນັກລົງທຶນມີຄວາມເຊື່ອໝັ້ນ ຊຶ່ງເປັນການເຮັດໃຫ້ເສດຖະກິດຂະຫຍາຍຕົວ ແລະ ມີການຈ້າງງານເພີ່ມຂຶ້ນ. ໃນຄວາມເປັນຈິງ, ມາດຕະຖານລະດັບສູງໃນການປົກປ້ອງ ແລະ ບັງຄັບໃຊ້ຊັບສິນທາງປັນຍານັ້ນ ສາມາດດຶງດູດການລົງທຶນພາຍໃນ ແລະ ເປັນສິ່ງອຳນວຍຄວາມສະດວກໃນການຜະລິດ ທີ່ສາມາດເຮັດໃຫ້ເຂົ້າເຖິງເຕັກໂນໂລຊີຈາກຕ່າງປະເທດໄດ້ຫຼາຍຂຶ້ນ ແລະ ໄວຂຶ້ນ ຊຶ່ງຈະສົ່ງຜົນກະທົບຕໍ່ກຳລັງການຜະລິດຂອງຫຼາຍປະເທດ ໃນພາກພື້ນ. ນອກນັ້ນ, ຍັງເຮັດໃຫ້ນັກລົງທຶນຕ່າງປະເທດ ແລະ ບໍລິສັດຕ່າງໆ ຫຼີກລ່ຽງຕະຫຼາດທີ່ບໍ່ສາມາດຮອງຮັບ ສິນຄ້າ, ການບໍລິການ ແລະ ການປະດິດສ້າງຂອງພວກເຂົາ ດ້ວຍລະບົບຊັບສິນທາງປັນຍາ ທີ່ເຂັ້ມແຂງ.

ສິ່ງທີ່ສຳຄັນທີ່ຄວນພິຈາລະນາສຳລັບເຈົ້າຂອງເຄື່ອງໝາຍການຄ້າ, ໂດຍສະເພາະແມ່ນຈຸນລະວິສາຫະກິດ, ທຸລະກິດ ຂະໜາດນ້ອຍ ແລະ ກາງ (MSMEs), ແມ່ນການຈົດທະບຽນ ແລະ ປົກປ້ອງເຄື່ອງໝາຍການຄ້າຂອງຕົນ ຢູ່ຕ່າງປະເທດ ດ້ວຍວິທີທີ່ປະຢັດຕົ້ນທຶນທີ່ສຸດ. ດ້ວຍເຫດນີ້, ສປປ ລາວ ໄດ້ເຂົ້າເປັນພາຄີຂອງອະນຸສັນຍາທີ່ຕິດພັນກັບສັນຍາມາດຣິດ ວ່າດ້ວຍການຈົດທະບຽນສາກົນ ກ່ຽວກັບ ເຄື່ອງໝາຍ ໃນວັນທີ 7 ທັນວາ 2015. ການຈົດທະບຽນສາກົນ ກ່ຽວກັບ ເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ ເປັນວິທີງ່າຍ, ສະດວກ ແລະ ປະຢັດຄ່າໃຊ້ຈ່າຍໃນການຈົດທະບຽນ ແລະ ຄຸ້ມຄອງ ເຄື່ອງໝາຍການຄ້າ ຢູ່ໃນ 123 ປະເທດ ໂດຍໃຊ້ຄຳຮ້ອງສະບັບດຽວ, ພາສາດຽວສຳລັບຫຼາຍປະເທດ ແລະ ຈ່າຍຄ່າທຳນຽມຊຸດດຽວ.

ລະບົບມາດຣິດ ສົ່ງເສີມການລົງທຶນຕ່າງປະເທດເຂົ້າມາໃນປະເທດ ໂດຍເຮັດໃຫ້ທຸລະກິດຕ່າງໆປົກປ້ອງຍີ່ຫໍ້ຂອງພວກເຂົາໄດ້ສະດວກສະບາຍຂຶ້ນຜ່ານລະບົບດັ່ງກ່າວ, ທັງເພີ່ມຄວາມໝັ້ນໃຈ ໃນການຄ້າ ໃຫ້ແກ່ນັກລົງທຶນ. ເຊັ່ນດຽວກັນ,ລະບົບມາດຣິດ ຍັງຊ່ວຍໃຫ້ທຸລະກິດຂອງລາວ ຂະຫຍາຍການປົກປ້ອງຍີ່ຫໍ້ຂອງພວກເຂົາຢູ່ຕ່າງປະເທດ ໄດ້ງ່າຍຂຶ້ນ ແລະ ເປີດໂອກາດໃນການສົ່ງອອກອີກດ້ວຍ.

ຄູ່ມືເຫຼັ້ມນີ້ “ອະນຸສັນຍາມາດຣິດ: ເສັ້ນທາງສູ່ການສ້າງຍີ່ຫໍ້ລະດັບໂລກ” ແມ່ນຄູ່ມືແນະນຳທີ່ມີຂໍ້ມູນຄົບຖ້ວນສຳລັບທຸລະກິດ ຢູ່ໃນ ສປປ ລາວ ທີ່ຕ້ອງການປົກປ້ອງເຄື່ອງໝາຍການຄ້າຢູ່ຕ່າງປະເທດ ໂດຍມີລາຍລະອຽດກ່ຽວກັບ ຂໍ້ດີຂອງລະບົບມາດຣິດ, ຂັ້ນຕອນຕ່າງໆ, ຄ່າທຳນຽມ, ເງື່ອນໄຂພາຍໃນປະເທດ, ຄຳແນະນຳສຳລັບການພັດທະນາຍີ່ຫໍ້ ແລະ ຂໍ້ມູນອື່ນໆທີ່ເປັນປະໂຫຍດຕໍ່ການຈົດທະບຽນເຄື່ອງໝາຍການຄ້າ.

ນອກຈາກນີ້, ຍັງມີຂໍ້ມູນສະເພາະ ກ່ຽວກັບ ການປົກປ້ອງເຄື່ອງໝາຍການຄ້າຢູ່ໃນສະຫະພາບເອີຣົບ ຊຶ່ງສະຫຼຸບຫຍໍ້ ກ່ຽວກັບ ຜົນປະໂຫຍດຂອງການຈົດທະບຽນເຄື່ອງໝາຍການຄ້າສະຫະພາບເອີຣົບ (EUTM) ທີ່ໃຫ້ການປົກປ້ອງຢູ່ໃນ 27 ປະເທດສະມາຊິກຂອງສະຫະພາບເອີຣົບ.

ສະຫະພາບເອີຣົບ ມຸ່ງຫວັງທີ່ຈະສືບຕໍ່ການຮ່ວມມືທີ່ໄດ້ຮັບໝາກຜົນນີ້ກັບ ສປປ ລາວ ແລະ ອາຊຽນ ເພື່ອປັບປຸງສະພາບແວດລ້ອມທຸລະກິດໃຫ້ດີຂຶ້ນ ແລະ ສົ່ງເສີມການປົກປ້ອງ, ຮັບປະກັນ ແລະ ສ້າງແຮງຈູງໃຈ ໃຫ້ແກ່ທຸລະກິດ ແລະ ນັກປະດິດສ້າງ.

**ອີນາ ມາຈູລໍນີແຕ**
ເອກອັກຄະລັດຖະທູດ/ຫົວໜ້າສຳນັກງານ
ສຳນັກງານ ຜູ້ຕາງໜ້າສະຫະພາບເອີຣົບ ປະຈຳສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ຄຳເຫັນຂອງທ່ານຫົວໜ້າກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ

ສປປ ລາວ ໄດ້ເຂົ້າເປັນພາຄີຂອງອານຸສັນຍາມາດຣິດ ວ່າດ້ວຍການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍ ໃນ ວັນທີ 7 ທັນວາ 2015 ແລະ ມີຜົນບັງຄັບໃຊ້ເລີ່ມແຕ່ ວັນທີ 7 ມີນາ 2016 ເປັນຕົ້ນມາ.

ປຶ້ມເຫຼັ້ມນີ້ ສ້າງຂຶ້ນເພື່ອໃຫ້ເປັນຄູ່ມືການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍ ພາຍໃຕ້ອານຸສັນຍາມາດຣິດ ສຳລັບຜູ້ປະກອບການ ແລະ ທຸລະກິດຢູ່ໃນ ສປປ ລາວ ທີ່ມີຈຸດປະສົງຢາກປົກປ້ອງເຄື່ອງໝາຍການຄ້າຂອງຕົນ ຢູ່ຕ່າງປະເທດ ຊຶ່ງຄູ່ມືປະກອບດ້ວຍລາຍລະອຽດກ່ຽວກັບລະບົບມາດຣິດ ເຊັ່ນ: ຂັ້ນຕອນການຈົດທະບຽນສາກົນ, ຄ່າທຳນຽມ, ເງື່ອນໄຂພາຍໃນປະເທດ, ຄຳແນະນຳໃນການສ້າງເຄື່ອງໝາຍການຄ້າ, ການພັດທະນາຍີ່ຫໍ້ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ.

ລະບົບມາດຣິດ ເປັນລະບົບການບໍລິການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍແບບຄົບວົງຈອນ ສຳລັບຜູ້ຖືສິດເຄື່ອງໝາຍການຄ້າ ເພື່ອຂໍການປົກປ້ອງ ແລະ ຮັກສາສິດໃນການປົກປ້ອງເຄື່ອງໝາຍການຄ້າຂອງຕົນຢູ່ຕ່າງປະເທດ. ຜົນປະໂຫຍດຂອງການຈົດທະບຽນເຄື່ອງໝາຍການຄ້າໂດຍຜ່ານອານຸສັນຍາ ມາດຣິດ ແມ່ນຊ່ວຍໃຫ້ການຄຸ້ມຄອງ ແລະ ການຈົດທະບຽນເຄື່ອງໝາຍການຄ້າ ງ່າຍດາຍ, ປະຢັດເວລາ ແລະ ຄ່າໃຊ້ຈ່າຍ, ວ່ອງໄວ ແລະ ສະດວກສະບາຍຂຶ້ນ. ເມື່ອຍື່ນຄຳຮ້ອງສະບັບດຽວຢູ່ສຳນັກງານຕົ້ນທາງ (ສຳນັກງານຊັບສິນທາງປັນຍາ) ກໍສາມາດລະບຸຂໍປົກປ້ອງເຄື່ອງໝາຍການຄ້າຂອງທ່ານ ຢູ່ໃນບັນດາປະເທດທີ່ເປັນພາຄີຂອງອານຸສັນຍາມາດຣິດ ຕາມທີ່ທ່ານຕ້ອງການ ໂດຍຊຳລະຄ່າທຳນຽມເປັນເງິນສະກຸນດຽວ (ສະວິດຟຣັ່ງ) ແລະ ສາມາດຍື່ນຄຳຮ້ອງເປັນພາສາດຽວ(ພາສາທາງການຂອງລະບົບມາດຣິດ) ຊຶ່ງບໍ່ຈຳເປັນຕ້ອງສິ້ນເປືອງຈ່າຍຄ່າແປເອກະສານເປັນຫຼາຍພາສາ.

ທ້າຍສຸດນີ້ ຂໍສະແດງຄວາມຂອບໃຈ ມາຍັງສະຫະພາບ ເອີຣົບ ແລະ ສຳນັກງານຊັບສິນທາງປັນຍາຂອງສະຫະພາບ ເອີຣົບ ໂດຍສະເພາະ ໂຄງການ ARISE+IPR ທີ່ໃຫ້ການສະໜັບສະໜູນ, ການຮ່ວມມື ແລະ ຊ່ວຍເຫຼືອ ສປປ ລາວ ໃນການພັດທະນາລະບົບຊັບສິນທາງປັນຍາ ໃຫ້ເຊື່ອມໂຍງເຂົ້າກັບລະບົບຊັບສິນທາງປັນຍາຂອງພາກພື້ນອາຊຽນ ແລະ ສາກົນ.

**ຫົວໜ້າກົມຊັບສິນທາງປັນຍາ**
ປອ. ຂັນລາສີ ແກ້ວບຸນພັນ

# 1. ຍີ່ຫໍ້ສິນຄ້າຂອງທ່ານ - ຊັບສິນທີ່ມີມູນຄ່າສູງທີ່ສຸດຂອງທ່ານ

ຍີ່ຫໍ້ສິນຄ້າຂອງທ່ານແມ່ນພາບພົດທີ່ສ້າງຄວາມແຕກຕ່າງຈາກຄູ່ແຂ່ງທາງທຸລະກິດຂອງທ່ານ ຊຶ່ງລະບຸຜະລິດຕະພັນ, ການບໍລິການ ແລະ ບໍລິສັດຂອງທ່ານ. ຍີ່ຫໍ້ ອາດເປັນສັນຍາລັກ, ການອອກແບບ, ສີ ຫຼື ການລວມກັນຂອງສິ່ງດັ່ງກ່າວ ຊຶ່ງບົ່ງບອກເຖິງຄວາມຮູ້ສຶກເຖິງຄຸນນະພາບ, ຄວາມໜ້າເຊື່ອຖື, ຄວາມພຶງພໍໃຈຂອງລູກຄ້າ. ຍີ່ຫໍ້ ມີບົດບາດສໍາຄັນໃນຍຸດທະສາດການຕະຫຼາດຂອງທ່ານ ແລະ ເປັນຫົວໃຈສໍາຄັນຂອງການແຂ່ງຂັນທາງທຸລະກິດ ຊຶ່ງມີຄຸນຄ່າ ແລະ ເມື່ອລູກຄ້າມີຄວາມຈົງຮັກພັກດີ ໃນທີ່ສຸດກໍອາດກາຍເປັນຊັບສິນທີ່ມີມູນຄ່າສູງທີ່ສຸດຂອງທ່ານ.

## 1.1. ຍຸດທະສາດການສ້າງຫຍີ່ຫໍ້ ແລະ ຄວາມສໍາເລັດຂອງທຸລະກິດ

ການສ້າງຍີ່ຫໍ້ ມີເປົ້າໝາຍເພື່ອເຮັດໃຫ້ທຸລະກິດມີສະຖານະທີ່ໂດດເດັ່ນ ແລະ ໜ້າດຶງດູດໃນຕະຫຼາດ ທີ່ຊ່ວຍໃຫ້ໄດ້ຮັບ ແລະ ຮັກສາລູກຄ້າທີ່ມີຄວາມຈົງຮັກພັກດີ. ການສ້າງຍີ່ຫໍ້ ທີ່ມີປະສິດທິພາບ ແມ່ນກ່ຽວຂ້ອງກັບການສ້າງພາບພົດທາງດ້ານຄຸນນະພາບຂອງຜະລິດຕະພັນ ຫຼື ການບໍລິການໃຫ້ຢູ່ໃນໃຈຂອງຜູ້ບໍລິໂພກ ເປັນຕົ້ນແມ່ນຜ່ານການໂຄສະນາ ຊຶ່ງເນັ້ນໃສ່ຕົວຍີ່ຫໍ້ ເປັນຫຼັກ. ນອກນີ້ ຍັງຕ້ອງການຄວາມໝັ້ນໃຈໃນການປົກປ້ອງທາງດ້ານກົດໝາຍຈາກຄູ່ແຂ່ງໃນຕະຫຼາດທີ່ກ່ຽວຂ້ອງ. ຍຸດທະສາດການສ້າງຍີ່ຫໍ້ ຄືຫົວໃຈສໍາຄັນຂອງການແຂ່ງຂັນໃນຕະຫຼາດ ແລະ ຄວາມສໍາເລັດຂອງທຸລະກິດ ແບບຍືນຍົງ.

## 1.2. ການສ້າງຫຍີ່ຫໍ້, ການຄຸ້ມຄອງ ແລະ ການຄ້າ

ການສ້າງຍີ່ຫໍ້ ໝາຍເຖິງການເລືອກສັນຍາລັກທີ່ຈະເຮັດໃຫ້ຜະລິດຕະພັນ ຫຼື ການບໍລິການຂອງທ່ານ ແຕກຕ່າງຈາກຄູ່ແຂ່ງ ແລະ ເຮັດໃຫ້ສັນຍາລັກດັ່ງກ່າວໄດ້ຮັບການປົກປ້ອງຕາມກົດໝາຍ. ການສະແດງອອກທາງດ້ານກົດໝາຍຂອງຍີ່ຫໍ້ຂອງທ່ານ ເປັນເຄື່ອງໝາຍການຄ້າ, ຊຶ່ງເຄື່ອງໝາຍການຄ້ານັ້ນ ພາໃຫ້ທ່ານມີສິດແຕ່ພຽງຜູ້ດຽວ ໃນການປ້ອງກັນບໍ່ໃຫ້ບຸກຄົນທີ່ສາມ ໃຊ້ສັນຍາລັກທີ່ເຮັດໃຫ້ຍີ່ຫໍ້ ຂອງທ່ານແຕກຕ່າງໃນການຄ້າສໍາລັບສິນຄ້າ ຫຼື ການບໍລິການ ທີ່ຄືກັນ ຫຼື ຄ້າຍຄືກັນ.

ທ່ານສາມາດຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ຢູ່ ສປປ ລາວ ໂດຍຍື່ນຄໍາຮ້ອງ ນໍາ**ກົມຊັບສິນທາງປັນຍາ**, ກະຊວງອຸດສາຫະກໍາ ແລະ ການຄ້າ. ການຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ໃນ ສປປ ລາວ ມີອາຍຸ 10 ປີ ແລະ ສາມາດຕໍ່ອາຍຸໄດ້ທຸກໆ 10 ປີ ຕະຫຼອດໄປ. ການຄຸ້ມຄອງຍີ່ຫໍ້ ຂອງທ່ານ ໝາຍເຖິງການຕໍ່ອາຍຸທະບຽນເຄື່ອງໝາຍການຄ້າຂອງທ່ານຢ່າງສະໝໍ່າສະເໝີ ແລະ ບັງຄັບໃຊ້ສິດຂອງທ່ານຈາກຜູ້ລະເມີດ ແລະ ຜູ້ທີ່ຮຽນແບບປອມແປງເຄື່ອງໝາຍການຄ້າຂອງທ່ານ. ການໂອນສິດ ແລະ ການອະນຸຍາດໃຫ້ສິດນໍາໃຊ້ເຄື່ອງໝາຍການຄ້າອາດມີບົດບາດສໍາຄັນໃນການຄ້າກັບຍີ່ຫໍ້ ຜ່ານການເປັນຫຸ້ນສ່ວນ, ການຮວມກິດຈະການ ແລະ ການໃຫ້ສິດໃນການເປັນຜູ້ແທນຈໍາໜ່າຍ.

## 1.3. ການປົກປ້ອງຍີ່ຫໍ້ສິນຄ້າຂອງທ່ານຢູ່ໃນຕະຫລາດຕ່າງປະເທດ

ການປົກປ້ອງຍີ່ຫໍ້ ຂອງທ່ານ ຢູ່ນອກ ສປປ ລາວ ໝາຍເຖິງ ການໄດ້ຮັບສິດຕໍ່ເຄື່ອງໝາຍການຄ້າ ໃນຕະຫຼາດສົ່ງອອກແຕ່ລະແຫ່ງທີ່ທ່ານຕ້ອງການຈໍາໜ່າຍສິນຄ້າ ຫຼື ການບໍລິການ. ສິດຕໍ່ເຄື່ອງໝາຍການຄ້າແມ່ນໄດ້ກໍານົດຢູ່ໃນອານາເຂດ ແລະ ໃຊ້ໄດ້ສະເພາະອານາເຂດພາຍໃນຂອງປະເທດໃດໜຶ່ງເທົ່ານັ້ນ (ເຄື່ອງໝາຍການຄ້າພາຍໃນປະເທດ) ຫຼື ກຸ່ມປະເທດ ທີ່ມີການຈັດຕັ້ງລະບົບເຄື່ອງໝາຍການຄ້າໃນລະດັບພາກພື້ນ (ຕົວຢ່າງ: ສະຫະພາບ ເອີຣົບ). ຕາມຫຼັກການແລ້ວ, ໃນການໄດ້ຮັບສິດຕໍ່ເຄື່ອງໝາຍການຄ້າໃນຕ່າງປະເທດ, ທ່ານຕ້ອງໄດ້ຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ນໍາສໍານັກງານເຄື່ອງໝາຍການຄ້າຂອງປະເທດທີ່ຕ້ອງການໃຫ້ເຄື່ອງໝາຍການຄ້າຂ້ອງທ່ານໄດ້ຮັບການປົກປ້ອງຕ່າງຫາກ. ເມື່ອທ່ານໄດ້ຮັບສິດໃນບັນດາປະເທດເຫຼົ່ານັ້ນແລ້ວ, ທ່ານຈະຕ້ອງປະຕິບັດຕາມຂັ້ນຕອນແຍກຕ່າງຫາກທີ່ສໍານັກງານເຫຼົ່ານັ້ນ ເພື່ອຄຸ້ມຄອງສິດ (ຕໍ່ອາຍຸ, ອະນຸຍາດໃຫ້ໃຊ້ສິດ ຫຼື ໂອນສິດ). ແຕ່ເຖິງຢ່າງໃດກໍຕາມ, ການມີສັນຊາດລາວ ຫຼື ມີພູມລໍາເນົາ ຫຼື ມີການສ້າງຕັ້ງທຸລະກິດ ຫຼື ອຸດສາຫະກໍາ ຢູ່ໃນ ສປປ ລາວ, ທ່ານຈະໄດ້ຮັບປະໂຫຍດຈາກການປົກປ້ອງສິດຕໍ່ເຄື່ອງໝາຍການຄ້າຂອງທ່ານຊຶ່ງເປັນທາງເລືອກທີ່ໜ້າດຶງດູດໃຈ, ປະຢັດຕົ້ນທຶນ ແລະ ມີຂັ້ນຕອນທີ່ງ່າຍດາຍ ໂດຍການນໍາໃຊ້ອານຸສັນຍາມາດຣິດ ຊຶ່ງເປັນສົນທິສັນຍາສາກົນ ທີ່ ສປປ ລາວ ໄດ້ເຂົ້າເປັນພາຄີ ແລະ ມີຜົນບັງຄັບໃຊ້ ນັບແຕ່ ວັນທີ 07 ມີນາ 2016 ເປັນຕົ້ນມາ.

## 2. ອານຸສັນຍາມາດຣິດ ການປົກປ້ອງຍີ່ຫໍ້ ສິນຄ້າຂອງທ່ານຢູ່ໃນຕະຫລາດຕ່າງປະເທດ ໂດຍຜ່ານລະບົບປະຕູດຽວ

ຖ້າຫາກທ່ານມີບໍລິສັດຢູ່ພາຍໃນປະເທດລາວ, ສັງຄົມລາວ, ເປັນເຈົ້າຂອງກິດຈະການ ຫຼື ເປັນຜູ້ປະກອບການ ທ່ານຈະໄດ້ຮັບປະໂຫຍດຈາກການນໍາໃຊ້ອານຸສັນຍາມາດຣິດ ເພື່ອປົກປ້ອງຍີ່ຫໍ້ຂອງທ່ານ ໃນຫຼາຍກ່ວາ 120 ປະເທດ ທົ່ວໂລກ ໂດຍປະຕິບັດຕາມຂັ້ນຕອນທີ່ສະດວກ, ວ່ອງໄວ, ງ່າຍດາຍ ແລະ ປະຢັດຕົ້ນທຶນ ໃນການຍື່ນຄໍາຮ້ອງຂໍຈົດທະບຽນ ແລະ ຄຸ້ມຄອງການຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ຢູ່ຕ່າງປະເທດ.

### 2.1. ສະມາຊິກສະຫະພາບມາດຣິດ ຕະຫລາດທີ່ໜ້າດຶງດູດໃຈສໍາລັບທຸລະກິດສົ່ງອອກຂອງລາວ

ສະຫະພາບມາດຣິດ (Madrid), ໄດ້ຮັບການສ້າງຕັ້ງຂຶ້ນໂດຍບັນດາປະເທດພາຄີຂອງ ອະນຸສັນຍາມາດຣິດ, ມີ ສະມາຊິກ 107 ປະເທດ (ໃນວັນທີ 12 ມັງກອນ 2021), ເຊິ່ງລວມມີ 105 ປະເທດ ແລະ ສອງອົງການຈັດຕັ້ງລະຫວ່າງລັດຖະບານ (ສະຫະພາບເອີຣົບ ແລະ ອົງການຊັບສິນທາງປັນຍາອາຟຣິກາ - OAPI), ແລະ ກວມເອົາອານາເຂດ ຂອງ 123 ປະເທດ. ຊຶ່ງເປັນຕົວແທນຂອງກະແສການຄ້າໂລກ ຫລາຍກວ່າ 80% ແລະເປັນຕະຫຼາດທີ່ໜ້າດຶງດູດຕໍ່ການລົງທຶນສໍາລັບທຸລະກິດສົ່ງອອກຂອງລາວ.

ຫຸ້ນສ່ວນການຄ້າຊັ້ນນໍາຂອງ ສປປ ລາວ ສ່ວນໃຫຍ່ແມ່ນສະມາຊິກສະຫະພາບມາດຣິດ; ຜູ້ນໍາເຂົ້າຜະລິດຕະພັນລາວ 15 ອັນດັບທໍາອິດໃນປີ 2018 ໄດ້ກວມເອົາ 96% ຂອງການສົ່ງອອກຂອງລາວ, ຊຶ່ງປະກອບມີສະມາຊິກສະຫະພາບມາດຣິດ 14 ປະເທດ ຄື: (ໂດຍຈັດຮຽງຕາມມູນຄ່າການສົ່ງອອກ): ໄທ, ຈີນ, ຍີ່ປຸ່ນ, ສະຫະລັດອາເມລິກາ, ເຢຍລະມັນ, ຝຣັ່ງ, ເມັກຊິໂກ , ສະວິດເຊີແລນດ໌, ສາທາລະນະລັດເກົາຫຼີ, ອິນໂດເນເຊຍ, ອັງກິດ, ດານມາຣ໌ກ, ອີຕາລີ ແລະ ການາດາ. ສະມາຊິກອື່ນໆຂອງສະຫະພັນມາດຣິດທີ່ມີມູນຄ່າຂອງການສົ່ງອອກທີ່ສໍາຄັນຂອງລາວໄດ້ແກ່ ກໍາປູເຈຍ, ຫວຽດນາມ, ອົດສະຕາລີ, ສວີເດນ, ແບນຊິກ, ສະຫະພັນລັດເຊຍ, ອິນເດຍ, ຟີລິບປິນ, ສິງກະໂປ, ຕຸລະກີ, ແລະ ມາເລເຊຍ.

**ສະມາຊິກ ສະຫະພາບ ມາດຣິດ**

**ສະມາຊິກ 107 ປະເທດ (ລວມທັງສະຫະພາບເອີຣົບແລະອົງການຊັບສິນທາງປັນຍາອາຟຣິກາ)**
**ກວມເອົາ 123 ປະເທດ ໃນເດືອນ ມັງກອນ 2021**



## 2.2. ອານຸສັນຍາມາດຣິດ ຂັ້ນຕອນທີ່ງ່າຍດາຍສຳລັບຜູ້ນຳໃຊ້

ອານຸສັນຍາມາດຣິດ ແມ່ນຄຸ້ມຄອງໂດຍອົງການຊັບສິນທາງປັນຍາໂລກ (**WIPO**) ຊຶ່ງເປັນອົງການສະເພາະຂອງອົງການ ສະຫະປະຊາຊາດ ປະຈຳຢູ່ ເຈນີວາ, ປະເທດ ສະວິດເຊີແລນ. ອານຸສັນຍາດັ່ງກ່າວ ຊ່ວຍໃຫ້ທ່ານ ໄດ້ຮັບ ແລະ ຮັກສາການປົກປ້ອງຍີ່ຫໍ້ຂອງທ່ານໃນທົ່ວໂລກ ໂດຍມີຂັ້ນຕອນທີ່ງ່າຍດາຍ, ວ່ອງໄວ ແລະ ປະຢັດຕົ້ນທຶນ ໃນການຍື່ນຄຳຮ້ອງຂໍຈົດທະບຽນ ແລະ ຄຸ້ມຄອງການຈົດທະບຽນເຄື່ອງໝາຍການຄ້າແບບລວມສູນ ແລະ ມີຜົນສັກສິດ ຢູ່ຫລາຍປະເທດ.

### 2.2.1. ການຍື່ນຄຳຮ້ອງແບບລວມສູນ ເພື່ອຂໍການປົກປ້ອງຢູ່ຫລາຍອານາເຂດ

ໂດຍອີງຕາມເຄື່ອງໝາຍການຄ້າທີ່ໄດ້ຮັບການປົກປ້ອງຢູ່ໃນ ສປປ ລາວ, ທ່ານສາມາດຍື່ນ **ຄຳຮ້ອງສາກົນ** ທີ່ກົມຊັບສິນທາງປັນຍາ (DIP) ແລະ ລະບຸເອົາສະມາຊິກທັງໝົດຂອງສະຫະພາບ ມາດຣິດ ທີ່ທ່ານຕ້ອງການໃຫ້ເຄື່ອງໝາຍການຄ້າຂອງທ່ານໄດ້ຮັບການປົກປ້ອງ. ຄຳຮ້ອງຂອງທ່ານຈະຖືກສົ່ງໄປຍັງອົງການ WIPO ເພື່ອດຳເນີນການກວດສອບ, ຈົດທະບຽນ ແລະ ພິມເຜີຍແຜ່. ເມື່ອເຄື່ອງໝາຍການຄ້າຂອງທ່ານ ໄດ້ຮັບການບັນທຶກໂດຍລະບົບການຈົດທະບຽນສາກົນຂອງອົງການ WIPO ແລ້ວ, ເຄື່ອງໝາຍການຄ້າຂອງທ່ານ ຈະຖືກແຈ້ງໄປຍັງແຕ່ລະສະມາຊິກສະຫະພາບ ມາດຣິດ ທີ່ໄດ້ຖືກລະບຸຂໍປົກປ້ອງ. ສະມາຊິກເຫຼົ່ານັ້ນ ຕ້ອງຕັດສິນໃຈວ່າຈະໃຫ້ການປົກປ້ອງເຄື່ອງໝາຍຂອງທ່ານ ໃນປະເທດຂອງຕົນພາຍໃນເວລາທີ່ກຳນົດຢ່າງເຄັ່ງຄັດ. ໃນກໍລະນີ ປະເທດສະມາຊິກໃດໜຶ່ງ ທີ່ຖືກລະບຸໃຫ້ດຳເນີນການກວດສອບ ຫາກບໍ່ແຈ້ງກ່ຽວກັບການຄັດຄ້ານພາຍໃນເວລາທີ່ກຳນົດໄວ້ ຈາກວັນທີໄດ້ຮັບແຈ້ງການ (ພາຍໃນ 12 ເດືອນ, 18 ເດືອນ ຫຼື ຫລາຍກວ່າ 18 ເດືອນ ໃນກໍລະນີທີ່ມີການຄັດຄ້ານ), ຈະຖືວ່າເຄື່ອງໝາຍການຄ້າທີ່ຢູ່ພາຍໃຕ້ການຈົດທະບຽນສາກົນໄດ້ຮັບການປົກປ້ອງຢູ່ໃນປະເທດສະມາຊິກນັ້ນ ເພາະຈະຖືວ່າ ຄືກັບການຈົດທະບຽນໂດຍກົງກັບສຳນັກງານຊັບສິນທາງປັນຍາຂອງປະເທດສະມາຊິກນັ້ນ.

### 2.2.2. ການຄຸ້ມຄອງເຄື່ອງໝາຍການຄ້າແບບລວມສູນ

ເມື່ອໄດ້ຮັບ**ການຈົດທະບຽນສາກົນ** (IR) ແລະ ເຄື່ອງໝາຍຂອງທ່ານໄດ້ຮັບການປົກປ້ອງ ໂດຍ ໜຶ່ງ ຫຼື ຫຼາຍປະເທດສະມາຊິກສະຫະພາບມາດຣິດ ທີ່ຖືກລະບຸຂໍການປົກປ້ອງ, ທ່ານສາມາດບໍລິຫານຈັດການສິດຂອງທ່ານໄດ້ຢ່າງງ່າຍດາຍ ໂດຍປະຕິບັດຕາມຂັ້ນຕອນທາງອອນລາຍຂອງອົງການ WIPO ເພື່ອ: (i) ຕໍ່ອາຍຸການຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ທຸກໆ 10 ປີ; (ii) ຂະຫຍາຍການປົກປ້ອງສູ່ຕະຫຼາດໃໝ່ໄດ້ທຸກເວລາ; ແລະ (iii) ສະເໜີຂໍການບັນທຶກແບບລວມສູນຂອງການດັດແກ້ປະເພດຕ່າງໆຕໍ່ການຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ເຊັ່ນ: (ການໂອນສິດ, ການປ່ຽນແປງຊື່ ຫຼື ທີ່ຢູ່, ການຈຳກັດສິດ, ການເພີກຖອນ ເປັນຕົ້ນ).

## 2.3. ຜົນດີ ປະຢັດຕົ້ນທຶນ, ການຄ້າ ແລະ ການຄຸ້ມຄອງຍີ່ຫໍ້ ທີ່ມີປະສິດທິຜົນ

**ການຍື່ນຄຳຮ້ອງແບບລວມສູນ** ເພື່ອຂໍຈົດທະບຽນເຄື່ອງໝາຍການຄ້າຂອງທ່ານ ພາຍໃຕ້ອານຸສັນຍາມາດຣິດ ມີຂໍ້ດີຫຼາຍຢ່າງ ເຊັ່ນ: ທ່ານບໍ່ຕ້ອງຍື່ນຄຳຮ້ອງຂອງຈົດທະບຽນເຄື່ອງໝາຍການຄ້າ ຢູ່ຫຼາຍປະເທດ, ຍື່ນເປັນຫຼາຍພາສາ, ຈ່າຍຄ່າທຳນຽມເປັນຫຼາຍສະກຸນເງິນ, ວ່າຈ້າງຜູ້ຕາງໜ້າຢູ່ໃນແຕ່ລະປະເທດ ແລະ ປະຕິບັດຕາມລະບຽບການ ແລະ ຫຼາຍຂັ້ນຕອນທີ່ແຕກຕ່າງກັນໃນແຕ່ລະປະເທດ. ທ່ານສາມາດຍື່ນຄຳຮ້ອງສາກົນພຽງແຕ່ສະບັບດຽວ ທີ່ກົມຊັບສິນທາງປັນຍາ (DIP), ເປັນພາສາດຽວ (ອັງກິດ), ຈ່າຍຄ່າທຳນຽມເປັນສະກຸນເງິນດຽວ (ສະວິດຟຣັ່ງ), ຄຳຮ້ອງຂອງທ່ານກໍຈະມີຜົນຢູ່ໃນທຸກປະເທດສະມາຊິກຂອງສະຫະພາບມາດຣິດ ຕາມທີ່ທ່ານຕ້ອງການ. ຂັ້ນຕອນແມ່ນງ່າຍດາຍຫຼາຍ, ສະດວກ, ວ່ອງໄວ ແລະ ຄຸ້ມຄ່າ. ທ່ານຍັງສາມາດປະຢັດຄ່າໃຊ້ຈ່າຍໃນການແປພາສາ ແລະ ຄ່າທຳນຽມປະເພດຕ່າງໆຕື່ມອີກ (ຜູ້ຕາງໜ້າຢູ່ທ້ອງຖິ່ນ ແລະ ການແລກປ່ຽນເງິນຕາ). ການຈຳກັດເວລາທີ່ເຂັ້ມງວດຂອງສະມາຊິກສະຫະພາບ ມາດຣິດ ໃນການຕັດສິນໃຈກ່ຽວກັບການຮັບຮູ້ເຖິງສິດໃນທ້ອງຖິ່ນ ຕາມການຈົດທະບຽນສາກົນຂອງທ່ານ ມີສ່ວນຊ່ວຍໃຫ້ຂະບວນການປົກປ້ອງໄວຂຶ້ນຫຼາຍ.

ຜົນປະໂຫຍດຂອງ**ການຄຸ້ມຄອງແບບລວມສູນ** ມີຄວາມສຳຄັນຫຼາຍກວ່າການຍື່ນຄຳຮ້ອງແບບລວມສູນ: ເມື່ອທ່ານໄດ້ຮັບການຈົດທະບຽນສາກົນແລ້ວ, ທ່ານຈະຕ້ອງຕິດຕາມກວດກາ ແລະ ຈັດການ ພຽງວັນທີຕໍ່ອາຍຸ ແລະ ຂັ້ນຕອນຢູ່ຈຸດດຽວ (WIPO), ແທນທີ່ຈະເປັນວັນທີ ແລະ ຂັ້ນຕອນທີ່ແຕກຕ່າງກັນຢູ່ສຳນັກງານເຄື່ອງໝາຍການຄ້າຫຼາຍແຫ່ງຕ່າງຫາກ; ທ່ານສາມາດຂະຫຍາຍການປົກປ້ອງເຄື່ອງໝາຍການຄ້າຂອງທ່ານສູ່

ຕະຫຼາດໃໝ່ໄດ້ຕະຫຼອດເວລາໂດຍງ່າຍດາຍ (ຜ່ານການລະບຸເພີ່ມປະເທດ) ແລະ ທ່ານຍັງສາມາດປ່ຽນແປງການຈົດທະບຽນເຄື່ອງໝາຍການຄ້າ (ເຊັ່ນ: ການໂອນສິດ, ການປ່ຽນແປງຊື່ ຫຼື ທີ່ຢູ່ຂອງຜູ້ຖືສິດ ຫຼື ຜູ້ຕາງໜ້າ, ການຈຳກັດສິດ, ການເພີກຖອນ ເປັນຕົ້ນ) ບັນທຶກໄວ້ຢູ່ຈຸດດຽວ (ລະບົບການຈົດທະບຽນສາກົນທີ່ຄຸ້ມຄອງໂດຍອົງການ WIPO ດ້ວຍຕົ້ນທຶນທີ່ຕ່ຳຫຼາຍ.

ການປະຢັດຕົ້ນທຶນ ຊຶ່ງເປັນຜົນມາຈາກການນຳໃຊ້ລະບົບມາດຣິດ ມີຄວາມສຳຄັນຫຼາຍສຳລັບວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs). ຜູ້ນຳໃຊ້ລະບົບມາດຣິດ 80% ແມ່ນຈັດຢູ່ໃນປະເພດ SMEs ໂດຍມີການຈົດທະບຽນສາກົນ ໜຶ່ງ ຫຼື ສອງຄຳຮ້ອງ.

ແຕ່ເຖິງຢ່າງໃດກໍຕາມ, **ຜົນດີ**ຂອງອານຸສັນຍາມາດຣິດ ບໍ່ພຽງແຕ່ຫຼຸດຜ່ອນຄ່າໃຊ້ຈ່າຍ ແລະ ມີຂັ້ນຕອນທີ່ວ່ອງໄວ ຍ້ອນການຍື່ນຄຳຮ້ອງ ແລະ ການຄຸ້ມຄອງການຈົດທະບຽນສາກົນແບບລວມສູນເທົ່ານັ້ນ, ອານຸສັນຍາດັ່ງກ່າວ ຍັງເຮັດໃຫ້ຍີ່ຫໍ້ ຂອງທ່ານປະກົດຕົວຢູ່ຕ່າງປະເທດ ຊຶ່ງເປັນຫົນທາງທີ່ຈະໄດ້ຮັບຊື່ສຽງໃນລະດັບສາກົນຢ່າງໄວວາ ແລະ ສ້າງຄວາມນິຍົມຊົມຊອບໃຫ້ແກ່ເຄື່ອງໝາຍການຄ້າຂອງທ່ານໃນທົ່ວໂລກ. ຈາກມູມມອງທາງດ້ານຍຸດທະສາດຂອງບໍລິສັດ ການມີຍີ່ຫໍ້ ໃນລະດັບໂລກ ກໍ່ໃຫ້ເກີດມີຜົນປະໂຫຍດທາງດ້ານເສດຖະກິດເພີ່ມເຕີມ ລວມທັງ ການເພີ່ມໂອກາດການໃຫ້ສິດໃນການເປັນຜູ້ແທນຈຳໜ່າຍ, ຄວາມເປັນໄປໄດ້ໃນການຮ່ວມມືກັບຜູ້ປະກອບການລະຫວ່າງປະເທດ ເພື່ອເພີ່ມປະສິດທິພາບການພັດທະນາວົງວອນຊີວິດຂອງຜະລິດຕະພັນ ແລະ ການເຊື່ອມໂຍງຕ່ອງໂສ້ການສະໜອງໃນລະດັບໂລກ.

## ເປັນຫຍັງຈິ່ງຕ້ອງໃຊ້ອະນຸສັນຍາມາດຣິດ?

### ຫລຸດຜ່ອນຄ່າໃຊ້ຈ່າຍແລະເຮັດໃຫ້ຂັ້ນຕອນການດຳເນີນການທີ່ໄວກວ່າເພື່ອປົກປ້ອງເຄື່ອງຫມາຍຂອງທ່ານ

- ເອກະສານຄຳຮ້ອງສະໝັກຊຸດດຽວ (ທີ່ກົມຊັບສິນທາງປັນຍາ)
- ໃຊ້ພາສາດຽວ (ພາສາອັງກິດ)
- ໃຊ້ສະກຸນເງິນດຽວສຳລັບຈ່າຍຄ່າທຳນຽມ (ສະກຸນເງິນຟຣັງສະວິດສ໌)
- ບໍ່ຈຳເປັນຕ້ອງມີຕົວແທນຫຼາຍຄົນໄວ້ລ່ວງໜ້າ.
- ວັນທີຕໍ່ອາຍຸແລະຄຳຮ້ອງຂໍຄັ້ງດຽວ
- ຂັ້ນຕອນດຽວສຳລັບການປັບປ່ຽນແກ້ໄຂ
- ສາມາດຂະຫຍາຍການປົກປ້ອງໄປທີ່ປະເທດໃໝ່ໆໄດ້ທຸກເວລາ.

### ທ່ານໄດ້ຮັບ

- ການນຳໃຊ້ຍີ່ຫໍ້ຢູ່ຕ່າງປະເທດທີ່ໄວຂຶ້ນ
- ມີຊື່ສຽງ ແລະ ເຈດຕະນາດີຂອງຍີ່ຫໍ້ ລະດັບສາກົນ
- ໂອກາດໃນການເຮັດແຟຣນຊາຍສ໌ ແລະ ການເປັນຮຸ້ນສ່ວນຄູ່ຮ່ວມງານ

## 3. ການເລືອກເຄື່ອງໝາຍການຄ້າ - ການປະຕິບັດທີ່ໄດ້ຮັບຜົນດີ

ການສ້າງຍີ່ຫໍ້ ໝາຍເຖິງການເລືອກສັນຍາລັກ (ເຄື່ອງໝາຍການຄ້າ) ທີ່ເຮັດໃຫ້ສິນຄ້າ ຫຼື ການບໍລິການຂອງທ່ານແຕກຕ່າງຈາກຄູ່ແຂ່ງທາງທຸລະກິດຂອງທ່ານ.

ຕາມຫຼັກການແລ້ວ ສັນຍາລັກໃດໆກໍ່ຕາມທີ່ສາມາດຈຳແນກຄວາມແຕກຕ່າງຂອງສິນຄ້າ ຫຼື ການບໍລິການຂອງທ່ານ ຈາກສິນຄ້າ ຫຼື ການບໍລິການຂອງຜູ້ອື່ນ ຢູ່ໃນຕະຫຼາດ ສາມາດສ້າງເປັນເຄື່ອງໝາຍການຄ້າໄດ້. ດັ່ງນັ້ນ, ເຄື່ອງໝາຍການຄ້າຂອງທ່ານອາດຈະປະກອບດ້ວຍສັນຍາລັກ, ການອອກແບບ, ຄຳສັບ, ສີ, ສັນຍາລັກໃດໆກໍຕາມ ຫຼື ການລວມກັນຂອງສິ່ງທີ່ກ່າວມານັ້ນ. ແຕ່ເຖິງຢ່າງໃດກໍຕາມ, ເມື່ອເລືອກເຄື່ອງໝາຍການຄ້າຂອງທ່ານ ກໍມີເງື່ອນໄຂ ຫຼື ຂໍ້ຈຳກັດບາງປະການທີ່ຄວນພິຈາລະນາ.

- ເຄື່ອງໝາຍຂອງທ່ານຕ້ອງມີລັກສະນະສະເພາະ, ໝາຍຄວາມວ່າ ຄວນປະກອບດ້ວຍສັນຍາລັກໃດໜຶ່ງທີ່ໃຊ້ເພື່ອລະບຸຜະລິດຕະພັນ ຫຼື ການບໍລິການຂອງທ່ານ ແລະ ແຕກຕ່າງຈາກຜະລິດຕະພັນຂອງຜູ້ອື່ນ. ການອອກແບບທາງດ້ານເລຂາຄະນິດທົ່ວໄປ (ເຊັ່ນ: ຮູບສີ່ແຈກສາກ, ຮູບວົງມົນ, ຮູບສີ່ຫຼ່ຽມ ເປັນຕົ້ນ), ສັນຍາລັກທົ່ວໄປ (ເຊັ່ນ: ຕົວອັກສອນທຳມະດາ ຫຼື ຕົວເລກບໍ່ເກີນສອງຫຼັກ), ນາມສະກຸນທົ່ວໄປ, ຊື່ຂອງສະຖານທີ່ທີ່ມີຊື່ສຽງ ຖືວ່າເປັນສັນຍາລັກທີ່ບໍ່ໂດດເດັ່ນ.
- ເຄື່ອງໝາຍຂອງທ່ານ ບໍ່ຄວນໃຊ້ເປັນຄຳຍົກຍ້ອງ (ເຊັ່ນ: "ດີທີ່ສຸດ", "ດີເລີດ") ຫຼື ເປັນການອະທິບາຍກ່ຽວກັບສິນຄ້າ ຫຼື ບໍລິການ ສະເພາະທີ່ທ່ານຕ້ອງການເຮັດການຄ້າ (ເຊັ່ນ: "Apple" ສຳລັບໝາກແອັບເປີ້ນ; ຫຼື "Pharma" ສຳລັບການຂາຍຜະລິດຕະພັນຢາ), ຍ້ອນວ່າການໃຊ້ຄຳສັບທີ່ມີລັກສະນະນີ້ ຈະນຳໄປສູ່ການປະຕິເສດການຈົດທະບຽນ.
- ເຄື່ອງໝາຍຂອງທ່ານ ຕ້ອງສາມາດເປັນຕົວແທນແຫ່ງສັນຍາລັກຂອງຜະລິດຕະພັນຂອງທ່ານ. ສຳນັກງານເຄື່ອງໝາຍການຄ້າສ່ວນໃຫຍ່ຕ້ອງການໃຫ້ມີການສະແດງເປັນແຜນພາບກຣາບຟິກ ຫຼື ເຄື່ອງໝາຍ (ເຄື່ອງໝາຍທີ່ສາມາດສຳເນົາລົງໃນແຜ່ນເຈ້ຍ). ບາງສຳນັກງານກໍຮັບວິທີການສະແດງເຄື່ອງໝາຍທີ່ມີລັກສະນະພິເສດ (ເຊັ່ນ: ການບັນທຶກສຽງໃນຮູບແບບຟາຍ MP3 ສຳລັບເຄື່ອງໝາຍປະເພດສຽງ). ແຕ່ເຖິງຢ່າງໃດກໍຕາມ, ລະບົບມາດຣິດ ຕ້ອງການໃຫ້ເຄື່ອງໝາຍຂອງທ່ານສະແດງເປັນລັກສະນະແຜນພາບກຣາບຟິກ.
- ເຄື່ອງໝາຍຂອງທ່ານ ບໍ່ຄວນມີລັກສະນະສະແດງອອກຕາມໜ້າທີ່, ໝາຍຄວາມວ່າ ສັນຍາລັກທີ່ປະກອບເປັນເຄື່ອງໝາຍການຄ້າຂອງທ່ານບໍ່ຄວນປະກອບດ້ວຍລັກສະນະສະເພາະຂອງຕົວສິນຄ້າເອງເທົ່ານັ້ນ ຫຼື ເພື່ອໃຫ້ໄດ້ຜົນຮັບທາງດ້ານເຕັກນິກ. ໂດຍສະເພາະ ໃນກໍລະນີທີ່ກ່ຽວຂ້ອງກັບເຄື່ອງໝາຍປະເພດສາມມິຕິ.
- ເຄື່ອງໝາຍຂອງທ່ານບໍ່ຄວນມີລັກສະນະຫຼອກລວງ. ເຄື່ອງໝາຍທີ່ສະແດງໃຫ້ເຫັນເຖິງແຫຼ່ງກຳເນີດທີ່ຜິດ ຫຼື ລັກສະນະທີ່ຜິດພາດຂອງຜະລິດຕະພັນທີ່ສາມາດຖືກປະຕິເສດຈາກການປົກປ້ອງຍ້ອນເຫດຜົນທີ່ມີລັກສະນະຫຼອກລວງ.
- ສັນຍາລັກທີ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສິນລະທຳ ( ເຊັ່ນ: ສັນຍາລັກທີ່ທຳລາຍສາສະໜາຂອງສັງຄົມ ຫຼື ສັນຍາລັກທີ່ປະກອບດ້ວຍສື່ລາມົກອານາຈານ) ອາດຈະຖືກປະຕິເສດຈາກການປົກປ້ອງເຄື່ອງໝາຍການຄ້າ.
- ທຸງຊາດ, ກາໝາຍແຫ່ງຊາດ, ຊື່ປະເທດ ແລະ ກາໝາຍຂອງອົງການຈັດຕັ້ງລະຫວ່າງລັດຖະບານ ກໍບໍ່ສາມາດໄດ້ຮັບການປົກປ້ອງ ໃນຖານະເຄື່ອງໝາຍການຄ້າ ຢູ່ໃນຫຼາຍປະເທດທົ່ວໂລກ.
- ສິ່ງທີ່ສຳຄັນທີ່ສຸດ ທ່ານຕ້ອງແນ່ໃຈວ່າ ສັນຍາລັກທີ່ທ່ານຕ້ອງການໃຊ້ເປັນເຄື່ອງໝາຍການຄ້າຂອງທ່ານນັ້ນ ຍັງສາມາດໃຊ້ໄດ້ໃນຕະຫຼາດ ແລະ ບໍ່ມີຄວາມຄ້າຍຄື ຫຼື ຄືກັບເຄື່ອງໝາຍທີ່ມີຊື່ສຽງ ຫຼື ເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ຫຼື ໄດ້ຍື່ນຂໍຈົດທະບຽນໂດຍບຸກຄົນອື່ນແລ້ວ ສຳລັບສິນຄ້າ ຫຼື ການບໍລິການປະເພດດຽວກັນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນທີ່ທ່ານຕ້ອງກວດຄົ້ນຂໍ້ມູນຢ່າງລະອຽດກ່ຽວກັບຄວາມພ້ອມທີ່ຈະນຳໃຊ້ເຄື່ອງໝາຍກາຄ້າຂອງທ່ານທີ່ຕ້ອງການປົກປ້ອງໃນຕະຫຼາດເຫຼົ່ານັ້ນ.

### ຄຳແນະນຳ

- *ເລືອກເຄື່ອງໝາຍຂອງທ່ານດ້ວຍຄວາມລະມັດລະວັງ.*
- *ກວດເບິ່ງໃຫ້ແນ່ໃຈວ່າ ບໍ່ມີສິ່ງໃດທີ່ເປັນຂໍ້ຫ້າມກັບກົດໝາຍ*
- *ກວດເບິ່ງໃຫ້ແນ່ໃຈວ່າ ມັນບໍ່ໄດ້ເປັນຂອງຜູ້ອື່ນ. (ຄົ້ນຫາຢູ່ພາຍໃນແລະຕ່າງປະເທດ)*

## 3.1. ການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ຢູ່ໃນ ສປປ ລາວ

ກ່ອນການຍື່ນຄຳຮ້ອງພາຍໃນ ທີ່ກົມຊັບສິນທາງປັນຍາ ເພື່ອຂໍການປົກປ້ອງເຄື່ອງໝາຍຂອງທ່ານ ໃນ ສປປ ລາວ, ທ່ານຄວນແນ່ໃຈວ່າ ສັນຍາລັກທີ່ທ່ານຈະໃຊ້ເພື່ອເປັນເຄື່ອງໝາຍ ຢູ່ໃນ ສປປ ລາວ ບໍ່ຂັດກັບກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ.38/ສພຊ, ລົງວັນທີ 15 ພະຈິກ 2017 ແລະ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍເຄື່ອງໝາຍການຄ້າ ແລະ ຊື່ການຄ້າ.




ທ່ານຄວນກວດຄົ້ນຂໍ້ມູນຕື່ມອີກວ່າ ເຄື່ອງໝາຍດັ່ງກ່າວຍັງບໍ່ໄດ້ຮັບການຈົດທະບຽນ ຫຼື ຍັງບໍ່ໄດ້ຍື່ນຄຳຮ້ອງຂໍການຈົດທະບຽນໂດຍບຸກຄົນອື່ນ ສຳລັບສິນຄ້າ ຫຼື ການບໍລິການປະເພດດຽວກັນ. ທ່ານສາມາດ ກວດຄົ້ນເຄື່ອງໝາຍດັ່ງກ່າວໄດ້ ທີ່ສູນບໍລິການຊັບສິນທາງປັນຍາຂອງ ກົມຊັບສິນທາງປັນຍາ ຫຼື ກວດຄົ້ນອອນລາຍທີ່ ຖານຂໍ້ມູນຊັບສິນທາງປັນຍາ ຂອງ ສປປ ລາວ (https://dip.gov.la/online-ip-search/).

## 3.2. ການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າຢູ່ຕ່າງປະເທດຖານຂໍ້ມູນອອນລາຍ (ASEAN TMVIEW, TMVIEW, GLOBAL BRAND)

ກ່ອນຍື່ນຄຳຮ້ອງສາກົນ ເພື່ອປົກປ້ອງເຄື່ອງໝາຍຂອງທ່ານຢູ່ຕ່າງປະເທດ, ທ່ານຄວນກວດຄົ້ນຂໍ້ມູນວ່າ ສັນຍາລັກທີ່ທ່ານຈະໃຊ້ເພື່ອເປັນເຄື່ອງໝາຍການຄ້າ ຢູ່ໃນຕະຫຼາດຂອງປະເທດທີ່ທ່ານຈະສົ່ງອອກນັ້ນ ບໍ່ທັນມີໃຜເປັນເຈົ້າຂອງໃນປະເທດນັ້ນ.

ໝາຍວ່າ ການກວດຄົ້ນຂໍ້ມູນວ່າ ເຄື່ອງໝາຍດັ່ງກ່າວມີຄວາມຄ້າຍຄື ຫຼື ຄືກັບເຄື່ອງໝາຍອື່ນທີ່ໄດ້ຮັບການຈົດທະບຽນແລ້ວ ສຳລັບສິນຄ້າ ຫຼື ການບໍລິການປະເພດດຽວກັນ ໃນຕະຫຼາດທີ່ທ່ານຕ້ອງການສົ່ງອອກ ຫຼືບໍ່. ສຳນັກງານເຄື່ອງໝາຍການຄ້າຫຼາຍແຫ່ງຂອງສະມາຊິກ ສະຫະພາບ ມາດຣິດ ໄດ້ສະເໜີຄວາມເປັນໄປໄດ້ໃນການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ໂດຍຜ່ານຖານຂໍ້ມູນອອນລາຍ ໃນເວັບໄຊທ໌ຂອງຕົນ. ແຕ່ເຖິງຢ່າງໃດກໍຕາມ, ວິທີດີທີ່ສຸດ ໃນການກວດຄົ້ນຂໍ້ມູນດັ່ງກ່າວ ແມ່ນນຳໃຊ້ເຄື່ອງມື TMview, ASEAN TMview ແລະ the WIPO Global Brand Database.

**TMview** (https://www.tmdn.org/tmview/welcome) ແມ່ນຖານຂໍ້ມູນເຄື່ອງໝາຍການຄ້າທີ່ຖືກສ້າງຂຶ້ນໂດຍສຳນັກງານເຄື່ອງໝາຍການຄ້າ 74 ແຫ່ງ. ໃນທົ່ວໂລກ (ສຳນັກງານແຫ່ງຊາດ, ພາກພື້ນ ແລະ ສາກົນ) ທີ່ແນ່ໃສ່ສະໜອງຂໍ້ມູນຢ່າງກວ້າງຂວາງກ່ຽວກັບເຄື່ອງໝາຍການຄ້າ ແລະ ເຮັດໃຫ້ສາທາລະນະ ເຂົ້າເຖິງຂໍ້ມູນດັ່ງກ່າວໄດ້ຢ່າງງ່າຍດາຍ ໂດຍບໍ່ເສຍຄ່າ. **ອາຊຽນ TMview** (http://www.asean-tmview.org/tmview/welcome) ແມ່ນຖານຂໍ້ມູນທີ່ມີຄວາມຄ້າຍຄືກັບ TMview ຊຶ່ງສ້າງຂຶ້ນໂດຍ 9 ປະເທດສະມາຊິກອາຊຽນ ໂດຍການຮ່ວມມືກັບ TMview. TMview ແລະ ASEAN TMview ສະເໜີຄວາມເປັນໄປໄດ້ ໃນການກວດຄົ້ນຂໍ້ມູນທົ່ວໄປກ່ຽວກັບເຄື່ອງໝາຍການຄ້າໃນຫລາຍກວ່າ 100 ປະເທດທົ່ວໂລກ (ລວມທັງບັນດາປະເທດໃນອາຊີ ແລະ ປາຊີຟິກ, ເອີຣົບ, ອາຟຣິກາ ແລະ ອາເມລິກາ). ຖານຂໍ້ມູນເຫຼົ່ານີ້ສະໜອງຂໍ້ມູນກ່ຽວກັບຄຳຮ້ອງແລະ ຈົດທະບຽນເຄື່ອງໝາຍການຄ້າ ຫຼາຍກວ່າ 60 ລ້ານ ເຄື່ອງໝາຍ ທີ່ມີຜົນ ໃນ 82 ປະເທດ ບວກກັບການຈົດທະບຽນສາກົນພາຍໃຕ້ລະບົບ ມາດຣິດ ລວມທັງຂໍ້ມູນກ່ຽວກັບ ຊື່ເຄື່ອງໝາຍການຄ້າ, ຊື່ຜູ້ຍື່ນຄຳຮ້ອງ, ປະເພດເຄື່ອງໝາຍການຄ້າ, ການສະແດງຮູບພາບກຣາຟິກຂອງເຄື່ອງໝາຍ, ສະຖານະທາງດ້ານກົດໝາຍ, ລາຍການສິນຄ້າ ແລະ ການບໍລິການ, ລະຫັດໝວດສິນຄ້າ ແລະ ອື່ນໆ. TMview ແລະ ASEAN TMview ຊ່ວຍໃຫ້ທ່ານກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ຢ່າງສະດວກສະບາຍ ຕະຫຼອດ 24 ຊົ່ວໂມງຕໍ່ວັນ, 7 ວັນຕໍ່ອາທິດ. ຄວາມຖືກຕ້ອງຂອງຂໍ້ມູນທີ່ສະໜອງໃຫ້ໃນຖານຂໍ້ມູນເຫຼົ່ານັ້ນ ລ້ວນແຕ່ເປັນຄວາມຮັບຜິດຊອບຂອງສຳນັກງານເຄື່ອງໝາຍການຄ້າ. ເລີ່ມແຕ່ ເດືອນ ເມສາ ປີ 2010 ຈົນເຖິງ ເດືອນເມສາ ປີ 2020 TMview ໄດ້ໃຫ້ບໍລິການກວດຄົ້ນຂໍ້ມູນ ຫລາຍກວ່າ 70 ລ້ານການຄົ້ນຫາຈາກ 169 ປະເທດ.

ເພື່ອຄົ້ນຫາຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າຢູ່ຕ່າງປະເທດ, ທ່ານສາມາດໃຊ້ຖານຂໍ້ມູນ **Global Brand Database** (http://www.wipo.int/branddb/en/index.jsp), ຊຶ່ງເປັນຖານຂໍ້ມູນອອນລາຍ ທີ່ຄຸ້ມຄອງໂດຍອົງການ WIPO ທີ່ໄດ້ເກັບກຳ ແລະ ບັນທຶກຂໍ້ມູນສຳນວນຄຳຮ້ອງຫຼາຍກວ່າ 44 ລ້ານສະບັບ ຈາກ 67 ສຳນັກງານແຫ່ງຊາດ ແລະ ສາກົນ ລວມທັງຂໍ້ມູນກ່ຽວກັບ ເຄື່ອງໝາຍການຄ້າ, ຊື່ຖິ່ນກຳເນີດ ແລະ ກາໝາຍສັນຍາລັກປະຈຳຕະກຸນ, ທຸງຊາດ ແລະ ກາໝາຍແຫ່ງຊາດ ທີ່ໄດ້ຮັບການປົກປ້ອງແລ້ວຢູ່ໃນຫຼາຍປະເທດທົ່ວໂລກ ລວມທັງ ຊື່, ຕົວອັກສອນຫຍໍ້ ແລະ ກາໝາຍສັນຍາລັກຂອງອົງການຈັດຕັ້ງລະຫວ່າງລັດຖະບານ.

## 4. ການກະກຽມ ການຍື່ນຄໍາຮ້ອງຂໍຈົດທະບຽນສາກົນກ່ຽວກັບເຄື່ອງໝາຍການຄ້າ ການປະຕິບັດທີ່ໄດ້ຮັບຜົນດີ

ເມື່ອທ່ານເລືອກເຄື່ອງໝາຍການຄ້າທີ່ຕ້ອງການປົກປ້ອງຢູ່ຕ່າງປະເທດໄດ້ແລ້ວ, ແລະ ຕອບສະໜອງຕາມເງື່ອນໄຂທີ່ຈໍາເປັນ ທ່ານສາມາດກຽມຄວາມພ້ອມ ແລະ ຍື່ນຄໍາຮ້ອງສາກົນ ໄດ້ເລີຍ.

**ສູນກາງການປະກອບແລະຍື່ນໃບສະໝັກສາກົນ**




### 4.1. ເງື່ອນໄຂ ການໃຫ້ສິດ + ເຄື່ອງໝາຍເບື້ອງຕົ້ນ ຢູ່ໃນ ສປປ ລາວ

ກົມຊັບສິນທາງປັນຍາ ດໍາເນີນການກ່ຽວກັບຄໍາຮ້ອງສາກົນພາຍໃຕ້ອານຸສັນຍາມາດຣິດ ທີ່ມີຕົ້ນກໍາເນີດຢູ່ ສປປ ລາວ. ທ່ານມີສິດຍື່ນຄໍາຮ້ອງສາກົນ ນໍາກົມຊັບສິນທາງປັນຍາ ຖ້າຫາກ: (i) ທ່ານມີສັນຊາດລາວ ຫຼື ທ່ານແມ່ນບຸກຄົນທົ່ວໄປ ຫຼື ນິຕິບຸກຄົນທີ່ມີພູມລໍາເນົາຢູ່ໃນ ສປປ ລາວ ຫຼື ທ່ານໄດ້ສ້າງຕັ້ງ ແລະ ດໍາເນີນທຸລະກິດທີ່ມີຕົວຕົນແທ້ຢູ່ໃນ ສປປ ລາວ ແລະ (ii) ທ່ານມີ "ເຄື່ອງໝາຍເບື້ອງຕົ້ນ" ຢູ່ໃນ ສປປ ລາວ, ຊຶ່ງໝາຍຄວາມວ່າ ເຄື່ອງໝາຍຂອງທ່ານໄດ້ຮັບການຈົດທະບຽນແລ້ວ ຫຼື ໄດ້ຂໍການປົກປ້ອງຢູ່ພາຍໃນປະເທດ ນໍາກົມຊັບສິນທາງປັນຍາແລ້ວ.

### 4.2. ການຍື່ນຄໍາຮ້ອງຂໍຈົດທະບຽນສາກົນ ຢູ່ນໍາກົມຊັບສິນທາງປັນຍາ (DIP)

ຖ້າທ່ານຕ້ອງ ການຍື່ນຄໍາຮ້ອງສາກົນພາຍໃຕ້ອານຸສັນຍາມາດຣິດ ທີ່ DIP, ທ່ານຕ້ອງປະກອບແບບຟອມທາງການ (**MM2**) ເປັນພາສາອັງກິດ, ຊຶ່ງທ່ານສາມາດດາວນ໌ໂຫລດໄດ້ຈາກເວັບໄຊທ໌ຂອງ WIPO ທີ່ http://www.wipo.int/madrid/en/. ທ່ານສາມາດນໍາໃຊ້ ຕົວຊ່ວຍສໍາລັບການປະກອບຄໍາຮ້ອງພາຍໃຕ້ອານຸສັນຍາມາດຣິດ (https://www.wipo.int/madrid/application-assistant/) ເພື່ອຊ່ວຍທ່ານໃນການປະກອບຄໍາຮ້ອງ.ເມື່ອທ່ານໄດ້ປະກອບຄໍາຮ້ອງສາກົນ ຕາມແບບພິມ MM2 ແລ້ວ ກໍສາມາດຍື່ນຄໍາຮ້ອງ ແລະ ຈ່າຍຄ່າບໍລິການ ຈໍານວນ 400.000 ກີບຕໍ່ຄໍາຮ້ອງ ຢູ່ທີ່ກົມຊັບສິນທາງປັນຍາ.

## 4.3. ເນື້ອໃນຄຳຮ້ອງຂໍຈົດທະບຽນສາກົນຂອງທ່ານ ຂໍ້ມູນທີ່ຈຳເປັນ ແລະ ຂໍ້ມູນເພີ່ມເຕີມ

ຄຳຮ້ອງສາກົນຂອງທ່ານ (MM2) ຕ້ອງປະກອບດ້ວຍ: (i) ຊື່, ທີ່ຢູ່ ແລະ ທີ່ຢູ່ຂອງທ່ານທີ່ໃຊ້ເພື່ອຕິດຕໍ່ທາງອອນໄລນ໌; (ii) ສຳເນົາເຄື່ອງໝາຍຂອງທ່ານ, ຊຶ່ງຕ້ອງຄືກັບເຄື່ອງໝາຍເບື້ອງຕົ້ນຂອງທ່ານ ຢູ່ໃນ ສປປ ລາວ; (iii) ລາຍການສິນຄ້າ ແລະ ການບໍລິການ ທີ່ຕ້ອງການປົກປ້ອງ, ຊຶ່ງຕ້ອງໄດ້ລະບຸໄວ້ໃນເຄື່ອງໝາຍເບື້ອງຕົ້ນຂອງທ່ານ; ແລະ (iv) ລາຍຊື່ຂອງປະເທດສະມາຊິກສະຫະພາບມາດຣິດ ທີ່ທ່ານຕ້ອງການໃຫ້ເຄື່ອງໝາຍຂອງທ່ານໄດ້ຮັບການປົກປ້ອງ (ປະເທດພາຄີທີ່ຖືກລະບຸຂໍຮັບການປົກປ້ອງ ຫຼື DCPs). ເງື່ອນໄຂເຫຼົ່ານີ້ ແມ່ນຂໍ້ມູນຈຳເປັນທີ່ຕ້ອງມີ ແລະ ຖ້າເງື່ອນໄຂໃດໜຶ່ງຫາກບໍ່ຄົບຖ້ວນ ຈະມີຜົນກະທົບຕໍ່ວັນທີຂອງຄຳຮ້ອງສາກົນ.

ຄຳຮ້ອງສາກົນ (MM2) ຍັງຕ້ອງປະກອບດ້ວຍ: (i) ການລະບຸສິດຂອງທ່ານໃນການຍື່ນຄຳຮ້ອງ (ສ້າງຕັ້ງ ແລະ ດຳເນີນທຸລະກິດ ຫຼື ມີພູມລຳເນົາຢູ່ໃນ ສປປ ລາວ ຫຼື ມີສັນຊາດລາວ); (ii) ການຮຽກຮ້ອງເອົາບູລິມະສິດ ຖ້າມີ; (iii) ຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຖ້າໄດ້ແຕ່ງຕັ້ງ; (iv) ເລກທີ ແລະ ວັນທີຂອງເຄື່ອງໝາຍເບື້ອງຕົ້ນຂອງທ່ານ ຢູ່ໃນ ສປປ ລາວ; (v) ການລະບຸເຄື່ອງໝາຍ (ປະເພດຂອງເຄື່ອງໝາຍ, ສີຂອງເຄື່ອງໝາຍ ຖ້າມີ); (vi) ຄຳອະທິບາຍກ່ຽວກັບເຄື່ອງໝາຍ ຖ້າກຳນົດໂດຍກົມຊັບສິນທາງປັນຍາ; (vii) ການອອກສຽງຂອງເຄື່ອງໝາຍ, ຖ້າມີ [1]; (viii) ຈຳນວນຄ່າທຳນຽມທີ່ຕ້ອງຈ່າຍ ແລະວິທີການຈ່າຍເງິນ.

ເນື້ອໃນເພີ່ມເຕີມ (ເຊັ່ນ: ການແຈ້ງເຈດຈຳນົງໃນການນຳໃຊ້ເຄື່ອງໝາຍ) ອາດມີຄວາມຈຳເປັນລະບຸຢູ່ໃນຄຳຮ້ອງທີ່ເລືອກເອົາບາງປະເທດສະມາຊິກສະຫະພາບມາດຣິດ (ເບິ່ງລາຍລະອຽດ ຂໍ້ 4.5 ລຸ່ມນີ້).

ຄຳຮ້ອງສາກົນ ອາດປະກອບດ້ວຍ (ຂໍ້ມູນທີ່ບໍ່ບັງຄັບ): (i) ການລະບຸສັນຊາດຂອງທ່ານ ຫຼື ຖ້າເປັນນິຕິບຸກຄົນ ອາດລະບຸລັກສະນະທາງດ້ານກົດໝາຍ ແລະ ລັດພາຍໃຕ້ກົດໝາຍທີ່ທ່ານສ້າງຕັ້ງທຸລະກິດໃນຖານະນິຕິບຸກຄົນ; (ii) ການແປເຄື່ອງໝາຍ; (iii) ການອະທິບາຍກ່ຽວກັບເຄື່ອງໝາຍໂດຍສະໝັກໃຈ; (iv) ໃນກໍລະນີ ຮຽກຮ້ອງສິດກ່ຽວກັບສີຂອງເຄື່ອງໝາຍ ອາດມີການອະທິບາຍເປັນຄຳເວົ້າທີ່ເປັນສ່ວນຫຼັກຂອງເຄື່ອງໝາຍທີ່ເປັນສີ (v) ການບໍ່ຮຽກຮ້ອງສິດ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການປະກອບແບບຟອມຄຳຮ້ອງສາກົນ (MM2) ຂອງທ່ານນັ້ນ, ທ່ານສາມາດເຂົ້າເບິ່ງ "ຂໍ້ມູນການຍື່ນເອກະສານ MM2 ແລະ MM4 ເຖິງ MM12" ໄດ້ທີ່ http://www.wipo.int/madrid/en/forms/, ຫຼື ຄູ່ມືການຈົດທະບຽນສາກົນ ກ່ຽວກັບ ເຄື່ອງໝາຍ ຂອງ WIPO, ໜ້າ B.II. 6 ເຖິງ ຫນ້າ B.II.2 5, ຈາກເວັບໄຊທ໌: http://www.wipo.int/madrid/en/guide/

**ຄຳແນະນຳ**

***ເພື່ອຊ່ວຍທ່ານໃນການປະກອບເອກະສານ IA ຂອງທ່ານ, ໃຫ້ໃຊ້ຕົວຊ່ວຍສຳລັບການປະກອບຄຳຮ້ອງພາຍໃຕ້ອານຸສັນຍາມາດຣິດທີ່ https://www.wipo.int/madrid/application-assistant/ ແລະໃຫ້ກວດເບິ່ງ ຂໍ້ມູນການຍື່ນເອກະສານ MM2 ແລະ MM4 ເຖິງ MM12 ທີ່ http://www.wipo.int/madrid/en/forms/***

## 4.4. ການຈັດໝວດສິນຄ້າ ແລະ ການບໍລິການ ການນຳໃຊ້ເຄື່ອງມືການຈັດໝວດ (TMCLASS, ASEAN TMCLASS, MGS)

ເມື່ອທ່ານຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ (ທັງພາຍໃນ ຫຼື ສາກົນ), ທ່ານຕ້ອງລະບຸລາຍການສິນຄ້າ ແລະ ການບໍລິການທີ່ເຄື່ອງໝາຍການຄ້າຕ້ອງການໄດ້ຮັບການປົກປ້ອງ (ຄຳສັບທີ່ຄຸມເຄືອເກີນໄປ, ໃຊ້ພາສາບໍ່ຖືກຕ້ອງ ຫຼື ບໍ່ສາມາດເຂົ້າໃຈໄດ້ ຈະຖືກປະຕິເສດ); ແລະ ລາຍການສິນຄ້າ ແລະ ການບໍລິການ ເຫຼົ່ານີ້ ຕ້ອງຖືກຕ້ອງຕາມການຈັດໝວດ ລາຍການສິນຄ້າ ແລະ ການບໍລິການຂອງສາກົນ ເພື່ອຈຸດປະສົງຂອງການຈົດທະບຽນເຄື່ອງໝາຍ (Nice Classification).

ເພື່ອໃຫ້ແນ່ໃຈວ່າລາຍການສິນຄ້າ ແລະ ການບໍລິການຂອງທ່ານ ສອດຄ່ອງກັບເງື່ອນໄຂທີ່ກຳນົດໃນລະດັບພາຍໃນປະເທດ ແລະ ສາກົນ, ຂໍແນະນຳໃຫ້ໃຊ້ລະບົບຄົ້ນຫາຂໍ້ມູນ **TMclass** (http://euipo.europa.eu/ec2/) ແລະ ລະບົບຄົ້ນຫາຂໍ້ມູນລະບົບຄົ້ນຫາຂໍ້ມູນ **TMclass ຂອງອາຊຽນ** (http://www.asean-tmclass.org/ec2/). ເຄື່ອງມືກວດຄົ້ນຂໍ້ມູນ ແລະ ຈັດໝວດ ອອນລາຍໂດຍບໍ່ເສຍຄ່າເຫຼົ່ານີ້ ທ່ານສາມາດເລືອກຄຳສັບສຳລັບ ລາຍການສິນຄ້າ ແລະ ການບໍລິການ ຢ່າງຖືກຕ້ອງ ແລະ ຖືກຍອມຮັບໂດຍສຳນັກງານເຄື່ອງໝາຍການຄ້າ (ໃນລະດັບປະເທດ, ພາກພື້ນ ແລະ ສາກົນ) 84 ແຫ່ງທົ່ວໂລກ ລວມທັງ ສປປ ລາວ, ສະຫະພາບເອີຣົບ, ສປ. ຈີນ, ຍີ່ປຸ່ນ, ສະຫະລັດອາເມລິກາ ແລະ ປະເທດ ອື່ນໆ. ສຳນັກງານ ຊັບສິນທາງປັນຍາທັງໝົດໃນພາກພື້ນອາຊຽນ ແມ່ນນຳໃຊ້ ASEAN TMclass.

---

[1] *ຖ້າຫາກເຄື່ອງໝາຍປະກອບດ້ວຍ ຫຼື ມີຕົວອັກສອນທີ່ບໍ່ແມ່ນອັກສອນລາແຕັງ ຫຼື ຕົວເລກທີ່ບໍ່ແມ່ນຕົວເລກອາຣັບ, ຕ້ອງໄດ້ອອກສຽງທັບສັບເປັນອັກສອນລາແຕັງ ຫຼື ຕົວເລກອາຣັບ.*

ເມື່ອທ່ານກະກຽມຄຳຮ້ອງສາກົນ, ທ່ານອາດນຳໃຊ້ເຄື່ອງມື ການຈັດໝວດລາຍການສິນຄ້າ ແລະ ການບໍລິການຂອງລະບົບມາດຣິດ Madrid Goods & Services Manager (**MGS**) (https://webaccess.wipo.int/mgs/), ເຄື່ອງມືຈັດໝວດອອນລາຍທີ່ບໍ່ເສຍຄ່າໃຊ້ຈ່າຍຂອງ WIPO ຊຶ່ງຈະຊ່ວຍທ່ານສັງລວມລາຍການສິນຄ້າ ແລະ ການບໍລິການທີ່ທ່ານຕ້ອງການ ໃນເວລາຍື່ນຄຳຮ້ອງສາກົນ. MGS ຊ່ວຍໃຫ້ທ່ານເຂົ້າເຖິງຖານຂໍ້ມູນຄຳສັບມາດຕະຖານຂອງ ລາຍການສິນຄ້າ ແລະ ການບໍລິການ ເປັນພາສາອັງກິດຫຼາຍກວ່າ 52.000 ຄຳສັບ ທີ່ໄດ້ຮັບການຈັດໝວດຢ່າງຖືກຕ້ອງຕາມຂັ້ນຕອນຂອງລະບົບມາດຣິດ ແລະ ໄດ້ຮັບການຍອມຮັບໂດຍ WIPO ໂດຍອີງຕາມຫຼັກການສາກົນຂອງການຈັດໝວດ (Nice Classification) ສະບັບລ່າສຸດ. ນອກຈາກນີ້, ທ່ານຍັງສາມາດກວດສອບວ່າ ຄຳສັບທີ່ທ່ານຕ້ອງການນຳໃຊ້ນັ້ນ ໄດ້ຮັບການຍອມຮັບ ຫຼືບໍ່ ໂດຍສຳນັກງານຂອງປະເທດສະມາຊິກສະຫະພາບມາດຣິດ 39 ແຫ່ງ, ລວມທັງ ສປ. ຈີນ, ສະຫະລັດອາເມລິກາ, ສະຫະພາບເອີຣົບ, ແລະ ປະເທດ ອື່ນໆ.

ເຖິງແມ່ນວ່າກ່ອນໜ້ານີ້, ເມື່ອທ່ານກະກຽມຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າພາຍໃນ ຢູ່ ສປປ ລາວ (ເຄື່ອງໝາຍເບື້ອງຕົ້ນ) ທີ່ຈະນຳໃຊ້ເປັນຖານຂອງການຈົດທະບຽນສາກົນຂອງທ່ານ, ທ່ານກໍ່ສາມາດນຳໃຊ້ TMclass , ASEAN TMclass ແລະ MGS. ຖານຂໍ້ມູນເຫຼົ່ານີ້ຈະຊ່ວຍໃຫ້ທ່ານກະກຽມລາຍການສິນຄ້າ ແລະ ການບໍລິການຂອງທ່ານ ສຳລັບຄຳຮ້ອງພາຍໃນປະເທດ ແລະ ສາກົນ. ທ່ານຄວນຄຳນຶງອີກວ່າລາຍການສິນຄ້າ ແລະ ການບໍລິການ ໃນຄຳຮ້ອງສາກົນຂອງທ່ານນັ້ນ ຕ້ອງກວມເອົາ ລາຍການສິນຄ້າ ແລະ ການບໍລິການທັງໝົດທີ່ໄດ້ລະບຸໄວ້ໃນເຄື່ອງໝາຍເບື້ອງຕົ້ນຂອງທ່ານ.

## 4.5. ການລະບຸຂໍການປົກປ້ອງຢູ່ແຕ່ລະປະເທດ

ໃນຄຳຮ້ອງສາກົນ ທ່ານຕ້ອງລະບຸລາຍຊື່ປະເທດສະມາຊິກສະຫະພາບມາດຣິດ (ປະເທດພາຄີຂອງອານຸສັນຍາມາດຣິດ) ທັງໝົດທີ່ທ່ານຕ້ອງການໃຫ້ເຄື່ອງໝາຍການຄ້າຂອງທ່ານໄດ້ຮັບການປົກປ້ອງ ໂດຍການໝາຍໃສ່ຫ້ອງຖັດຈາກຊື່ປະເທດ ຢູ່ໃນຄຳຮ້ອງ (MM2), ທ່ານສາມາດເລືອກເອົາປະເທດສະຫະພາບມາດຣິດໃດກໍໄດ້ ຍົກເວັ້ນ ສປປ ລາວ. ເຄື່ອງໝາຍການຄ້າຂອງທ່ານ ຢູ່ໃນ ສປປ ລາວ (ເຄື່ອງໝາຍເບື້ອງຕົ້ນ) ທີ່ໄດ້ຈົດທະບຽນຢູ່ກົມຊັບສິນທາງປັນຍານັ້ນ ຈະໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍຂອງ ສປປ ລາວ.

ໃນປະຈຸບັນ (ເດືອນມັງກອນ 2021), ທ່ານສາມາດລະບຸເອົາເຖິງ 106 ປະເທດທີ່ເປັນພາຄີຂອງອານຸສັນຍາມາດຣິດ, ລວມມີ 104 ປະເທດ ແລະ 2 ອົງການຈັດຕັ້ງລະຫວ່າງລັດຖະບານ ເຊັ່ນ: ສະຫະພາບເອີຣົບ ແລະ ອົງການຊັບສິນທາງປັນຍາອາຟຣິກາ (OAPI). ໃນການເລືອກເອົາສະຫະພາບເອີຣົບ, ເຄື່ອງໝາຍການຄ້າຂອງທ່ານ ອາດໄດ້ຮັບການປົກປ້ອງຢູ່ໃນ 27 ປະເທດ ສະມາຊິກ EU. ຖ້າຫາກເລືອກເອົາ OAPI, ເຄື່ອງໝາຍການຄ້າຂອງທ່ານ ອາດໄດ້ຮັບການປົກປ້ອງຢູ່ໃນ 17 ປະເທດ ສະມາຊິກຂອງອົງການດັ່ງກ່າວ.



ແຕ່ລະປະເທດພາຄີລ້ວນແຕ່ມີເງື່ອນໄຂສະເພາະ ທີ່ທ່ານຕ້ອງພິຈາລະນາ ເມື່ອທ່ານເລືອກຈະລະບຸປະເທດດັ່ງກ່າວ ຢູ່ໃນຄຳຮ້ອງສາກົນຂອງທ່ານ. ຫາກທ່ານເລືອກເອົາ ສະຫະພາບເອີຣົບ (ລະຫັດ EM ໃນແບບພິມ MM2), ທ່ານຕ້ອງໄດ້ລະບຸເລືອກເອົາພາສາທີສອງສຳລັບຂັ້ນຕອນກ່ອນຈະຍື່ນຄຳຮ້ອງ MM2 ເຖິງ EUIPO ແລະ ຫາກທ່ານຕ້ອງການຮຽກຮ້ອງສິດກ່ຽວກັບອາຍຸຂອງວັນບູລິມະສິດຂອງເຄື່ອງໝາຍ ໃນສະຫະພາບເອີຣົບ, ທ່ານຕ້ອງຄັດຕິດແບບພິມ MM17 (ສຳລັບລາຍລະອຽດ ໃຫ້ເບິ່ງ ຂໍ້ 6.2 ກ່ຽວກັບການຂໍຮັບການປົກປ້ອງໃນສະຫະພາບເອີຣົບ).



ຖ້າຫາກທ່ານລະບຸເອົາສະຫະລັດອາເມລິກາ (US), ທ່ານຕ້ອງຄັດຕິດແບບພິມ (MM18) ກັບຄຳຮ້ອງສາກົນ (MM2) ເພື່ອແຈ້ງເຈດຈຳນົງໃນການນຳໃຊ້ເຄື່ອງໝາຍ ໃນສະຫະລັດອາເມລິກາ. ຖ້າເປັນບຸກຄົນທົ່ວໄປ, ທ່ານຕ້ອງລະບຸສັນຊາດຂອງທ່ານໃສ່ໃນຄຳຮ້ອງສາກົນ (MM2), ຖ້າເປັນນິຕິບຸກຄົນ, ທ່ານຄວນລະບຸສະຖານະທາງດ້ານກົດໝາຍ ແລະ ກົດໝາຍຂອງປະເທດທີ່ທ່ານໄດ້ສ້າງຕັ້ງທຸລະກິດ ເປັນນິບຸກຄົນ.

ສຸດທ້າຍ, ຖ້າທ່ານລະບຸເອົາ ປະເທດ ບຣູໄນ ດາຣູຊາຣຳ, ອິນເດຍ, ໄອແລນ, ເລໂຊໂທ, ມາລາວີ, ມາເລເຊຍ ໂມຊຳບິກ, ນິວຊີແລນ, ສິງກະໂປ ຫຼື ສະຫະຣາຊະອານາຈັກ ໃຫ້ໝາຍໃສ່ຫ້ອງຖັດຈາກຊື່ປະເທດ ໃນຄຳຮ້ອງສາກົນ (MM2) ເພື່ອແຈ້ງເຈດຈຳນົງໃນການນຳໃຊ້ເຄື່ອງໝາຍໃນປະເທດເຫຼົ່ານັ້ນ.

ARISE+
ASEAN Intellectual Property Rights

## ອະນຸສັນຍາມາດຣິດ

**ຈຸດໝາຍປາຍທາງຂອງການຍື່ນຄຳຮ້ອງຈາກປະເທດລາວ (2016-2020)**
**(# ຈຸດໝາຍປາຍທາງໃນຄຳຮ້ອງສາກົນ + ການລະບຸເພີ່ມປະເທດພາຄີ)**

| ປະເທດພາຄີ | # ຈຸດໝາຍປາຍທາງ (IA+SD) | ປະເທດພາຄີ | # ຈຸດໝາຍປາຍທາງ (IA+SD) |
|---|---|---|---|
| ຫວຽດນາມ | 5 | ສະຫະພັນລັດເຊຍ | 3 |
| ອິດສະຕາລີ | 4 | ສະວິດສ໌ | 3 |
| ກຳປູເຈຍ | 4 | ສະຫະລັດອາເມລິກາ | 3 |
| ຈີນ | 4 | ບຣູໄນ ດາຣຸສສະລຳ | 2 |
| ຍີ່ປຸ່ນ | 4 | ເຢຍລະມັນ | 2 |
| ຟີລິບປິນ | 4 | ໄທ | 2 |
| ສາທາລະນະລັດເກົາຫຼີ | 4 | ສະຫະພາບເອີຣົບ | 1 |
| ສິງກະໂປ | 4 | ນິວຊີແລນ | 1 |
| ອິນເດຍ | 3 | ນອກແວຣ໌ | 1 |
| ອິນໂດເນເຊຍ | 3 | | |

ແຫຼ່ງຂໍ້ມູນ: ຖານຂໍ້ມູນສະຖິຕິຂອງ WIPO - ມັງກອນ 2021.

## 4.6. ການປະເມີນຄ່າໃຊ້ຈ່າຍ ແລະ ຈ່າຍຄ່າທຳນຽມ ເຄື່ອງມືຄິດໄລ່ຄ່າທຳນຽມມາດຣິດ, ວິທີການຊຳລະ

ຄຳຮ້ອງສາກົນຂອງທ່ານ ຕ້ອງຄັດຕິດຫຼັກຖານການຊຳລະເງິນຄ່າທຳນຽມ ເປັນເງິນສະກຸນ ສະວິດຟຣັ່ງ (CHF) ທີ່ຊຳລະໃຫ້ອົງການ WIPO ຊຶ່ງອາດປະກອບດ້ວຍ:

(i) ຄ່າທຳນຽມເບື້ອງຕົ້ນ 65 ສະວິດຟຣັ່ງ ສຳລັບເຄື່ອງໝາຍທີ່ບໍ່ເປັນສີ ຫຼື 90 ສະວິດຟຣັ່ງ ສຳລັບເຄື່ອງໝາຍທີ່ເປັນສີ[2];

(ii) ຄ່າທຳນຽມສະເພາະປະເທດ ຂອງແຕ່ລະປະເທດພາຄີທີ່ຖືກລະບຸ (DCP) ທີ່ໄດ້ກຳນົດໂດຍແຕ່ລະປະເທດ (ດັ່ງລຸ່ມນີ້);

(iii) ຄ່າທຳນຽມເພີ່ມປະເທດ 100 ສະວິດຟຣັ່ງ ສຳລັບແຕ່ລະປະເທດພາຄີທີ່ຖືກລະບຸ (DCP) ທີ່ບໍ່ໄດ້ກຳນົດຄ່າທຳນຽມສະເພາະປະເທດ,

(iv) ຄ່າທຳນຽມເພີ່ມໝວດ 100 ສະວິດຟຣັ່ງ ສຳລັບແຕ່ລະໝວດຂອງລາຍການສິນຄ້າ ແລະ ການບໍລິການ ເກີນ 3 ໝວດ, ຍົກເວັ້ນ ທ່ານລະບຸເອົາພາຄີທີ່ໄດ້ກຳນົດຄ່າທຳນຽມສະເພາະປະເທດແລ້ວ .

ປັດຈຸບັນ ມີສຳນັກງານເຄື່ອງຫມາຍການຄ້າ 63 ແຫ່ງ ທີ່ເປັນພາຄີຂອງອານຸສັນຍາມາດຣິດ ທີ່ເກັບຄ່າທຳນຽມສະເພາະປະເທດ (individual fee). ທ່ານສາມາດກວດເບິ່ງລາຍຊື່ຂອງສຳນັກງານເຫຼົ່ານີ້ ແລະ ຈຳນວນຄ່າທຳນຽມທີ່ຈະຕ້ອງຈ່າຍໃຫ້ແຕ່ລະປະເທດ ຕາມເວັບໄຊທ໌ລຸ່ມນີ້: http://www.wipo.int/madrid/en/fees/ind_taxes.html.

ເພື່ອອຳນວຍຄວາມສະດວກໃນການຄິດໄລ່ຄ່າທຳນຽມ ສຳລັບຄຳຮ້ອງສາກົນ, ອົງການ WIPO ໄດ້ສ້າງເຄື່ອງມືຄິດໄລ່ ຄ່າທຳນຽມແບບອອນລາຍ ຊຶ່ງທ່ານສາມາດເຂົ້າເຖິງຕາມເວັບໄຊທ໌ລຸ່ມນີ້: http://www.wipo.int/madrid/en/fees/calculator.jsp.

[2] *ຈຳນວນຄ່າທຳນຽມເບື້ອງຕົ້ນທີ່ມີສ່ວນຫຼຸດສຳລັບຜູ້ຍື່ນຄຳຮ້ອງຢູ່ໃນປະເທດຕົ້ນກຳເນີດ ທີ່ເປັນປະເທດດ້ອຍພັດທະນາ ອີງຕາມການກຳນົດໂດຍອົງການສະຫະປະຊາຊາດ.*

ສຳລັບວິທີການຊຳລະ, ທ່ານສາມາດຊຳລະຄ່າທຳນຽມຂອງທ່ານໃຫ້ອົງການ WIPO ໂດຍ: (i) ໂອນເງິນຜ່ານທະນາຄານ; ຫຼື (ii) ບັນຊີກະແສລາຍວັນຂອງອົງການ WIPO. ສຳລັບລາຍລະອຽດ ກາລຸນາເບິ່ງຂໍ້ມູນຕາມເວັບໄຊທ໌ນີ້: http://www.wipo.int/about-wipo/en/finance/madrid.html.

**ຄຳແນະນຳ**

*ໃຫ້ກວດເບິ່ງລ່ວງໜ້າໄວ້ວ່າ ທ່ານຈະຕ້ອງຈ່າຍເທົ່າໃດ ໂດຍໃຊ້ເຄື່ອງມືຄຳນວນຄ່າທຳນຽມ*
***http://www.wipo.int/madrid/en/fees/calculator.jsp.***

## 4.7. ການຢັ້ງຢືນ ແລະ ຮັບຮອງຄຳຮ້ອງສາກົນ ຈາກກົມຊັບສິນທາງປັນຍາ ແລະ ການດັດແກ້ ຂໍ້ມູນທີ່ຜິດພາດ

ກ່ອນຈະສົ່ງຄຳຮ້ອງສາກົນຂອງທ່ານ ເຖິງອົງການ WIPO, ກົມຊັບສິນທາງປັນຍາ ຈະກວດເບິ່ງວ່າ: (i) ທ່ານແມ່ນຜູ້ຍື່ນຄຳຮ້ອງຄົນດຽວກັນກັບ ເຈົ້າຂອງເຄື່ອງໝາຍເບື້ອງຕົ້ນ ຢູ່ໃນ ສປປ ລາວ ; (ii) ເຄື່ອງໝາຍໃນຄຳຮ້ອງສາກົນຄືກັບເຄື່ອງໝາຍເບື້ອງຕົ້ນ; (iii) ລາຍການສິນຄ້າ ແລະ ການບໍລິການ ໃນຄຳຮ້ອງສາກົນ ກວມເອົາລາຍການທີ່ລະບຸໄວ້ໃນເຄື່ອງໝາຍເບື້ອງຕົ້ນ. ຖ້າຫາກ ຄົບຖ້ວນຕາມສາມເງື່ອນໄຂເຫຼົ່ານີ້ ກົມຊັບສິນທາງປັນຍາ ຈະຢັ້ງຢືນຄຳຮ້ອງສາກົນຂອງທ່ານ ແລະ ສົ່ງຕໍ່ໃຫ້ອົງການ WIPO ພ້ອມທັງລະບຸວັນທີຮັບຄຳຮ້ອງສາກົນຂອງທ່ານ.

ໃນກໍລະນີ ທ່ານຈັດໝວດລາຍການສິນຄ້າ ຫຼື ການບໍລິການຜິດ ຫຼື ອົງການ WIPO ພິຈາລະນາວ່າ ລາຍການສິນຄ້າ ຫຼື ການບໍລິການທີ່ລະບຸຢູ່ໃນຄຳຮ້ອງສາກົນຂອງທ່ານ ກວ້າງເກີນໄປ, ບໍ່ຖືກຕ້ອງໃນການໃຊ້ພາສາ ຫຼື ບໍ່ຄົບຖ້ວນ, ອົງການ WIPO ຈະແຈ້ງໃຫ້ກົມຊັບສິນທາງປັນຍາ ເພື່ອດັດແກ້ຂໍ້ມູນທີ່ຜິດພາດໃຫ້ຖືກຕ້ອງ ພາຍໃນກຳນົດເວລາ ສາມເດືອນ.

ໃນກໍລະນີ ທີ່ຍັງມີຂໍ້ມູນບໍ່ຄົບຖ້ວນ ໃນຄຳຮ້ອງສາກົນຂອງທ່ານ (ເຊັ່ນ: ທ່ານບໍ່ມີສິດໃນການຍື່ນຄຳຮ້ອງຜ່ານກົມຊັບສິນທາງປັນຍາ ໃນຖານະທີ່ເປັນສຳນັກງານຕົ້ນທາງ ຫຼື ຄຳຮ້ອງຂອງທ່ານບໍ່ໄດ້ປະກອບຂໍ້ມູນຕາມແບບພິມ MM2 ຫຼື ບໍ່ໄດ້ຮັບການເຊັນຢັ້ງຢືນໂດຍ ກົມຊັບສິນທາງປັນຍາ), ອົງການ WIPO ຈະອອກໜັງສືແຈ້ງໃຫ້ກົມຊັບສິນທາງປັນຍາ ເພື່ອດັດແກ້ຂໍ້ມູນທີ່ຜິດພາດເຫຼົ່ານັ້ນ ໃຫ້ຖືກຕ້ອງພາຍໃນກຳນົດເວລາ ສາມເດືອນ, ຖ້າຫາກບໍ່ປະຕິບັດຕາມແຈ້ງການພາຍໃນກຳນົດເວລາດັ່ງກ່າວ ຈະຖືວ່າຄຳຮ້ອງສາກົນນັ້ນ ສະຫຼະສິດ.

ຖ້າຫາກຂາດໜຶ່ງ ຫຼື ຫຼາຍອົງປະກອບຂອງຄຳຮ້ອງສາກົນ (ອົງປະກອບທີ່ເຮັດໃຫ້ WIPO ສາມາດລະບຸຕົວຕົນຂອງທ່ານ ແລະ ພຽງພໍທີ່ຈະຕິດຕໍ່ຫາທ່ານ ຫຼື ຕົວແທນຂອງທ່ານໄດ້, ສິດຂອງທ່ານໃນການຍື່ນຄຳຮ້ອງຕໍ່ກົມຊັບສິນທາງປັນຍາ, ວັນທີ ແລະ ເລກທີ ຂອງເຄື່ອງໝາຍເບື້ອງຕົ້ນ, ການສຳເນົາເຄື່ອງໝາຍ, ລາຍການສິນຄ້າ ແລະ ການບໍລິການ, ການລະບຸຊື່ປະເທດທີ່ຂໍການປົກປ້ອງ, ການເຊັນຢັ້ງຢືນໂດຍກົມຊັບສິນທາງປັນຍາ), ອົງການ WIPO ຈະອອກໜັງສືແຈ້ງໃຫ້ກົມຊັບສິນທາງປັນຍາ ເພື່ອດັດແກ້ຂໍ້ມູນທີ່ຜິດພາດເຫຼົ່ານັ້ນ ໃຫ້ຖືກຕ້ອງພາຍໃນກຳນົດເວລາ ສາມເດືອນ, ຖ້າຫາກບໍ່ປະຕິບັດຕາມແຈ້ງການພາຍໃນກຳນົດເວລາດັ່ງກ່າວ ຈະຖືວ່າຄຳຮ້ອງສາກົນນັ້ນ ສະຫຼະສິດ.

ຖ້າຫາກມີຂໍ້ມູນອື່ນອີກທີ່ຍັງບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ (ເຊັ່ນ: ທີ່ຢູ່ຂອງທ່ານບໍ່ຄົບຖ້ວນ, ທີ່ຢູ່ອີເມວຂອງທ່ານບໍ່ມີ, ການສຳເນົາເຄື່ອງໝາຍບໍ່ຈະແຈ້ງ, ດ ບໍ່ໄດ້ຈ່າຍຄ່າທຳນຽມ ຫຼື ຈ່າຍບໍ່ຄົບຕາມຈຳນວນທີ່ກຳນົດໄວ້ໃນລະບຽບການ), WIPO ຈະແຈ້ງໃຫ້ທ່ານຊາບໂດຍກົງ ກ່ຽວກັບ ຂໍ້ມູນທີ່ຜິດພາດ ຫຼື ບໍ່ຄົບຖ້ວນ ເພື່ອໃຫ້ທ່ານດັດແກ້ພາຍໃນກຳນົດເວລາສາມເດືອນ. ຖ້າຫາກບໍ່ປະຕິບັດຕາມແຈ້ງການພາຍໃນກຳນົດເວລາດັ່ງກ່າວ ຈະຖືວ່າຄຳຮ້ອງສາກົນຂອງທ່ານສະຫຼະສິດ.

ສຸດທ້າຍ, ຖ້າຫາກທ່ານລະບຸຂໍການປົກປ້ອງໃນສະຫະລັດອາເມລິກາ ແລະ ທ່ານບໍ່ໄດ້ຄັດຕິດແບບພິມ MM18 ເພື່ອແຈ້ງເຈດນຳນົງໃນການນຳໃຊ້ເຄື່ອງໝາຍ ຢູ່ໃນສະຫະລັດອາເມລິກາ, ອົງການ WIPO ຈະອອກໜັງສືແຈ້ງເຊີນເຖິງທ່ານ ຜ່ານກົມຊັບສິນທາງປັນຍາ ເພື່ອຄັດຕິດແບບພິມດັ່ງກ່າວນັ້ນ ພາຍໃນກຳນົດເວລາສອງເດືອນ ນັບແຕ່ວັນທີ ທີ່ກົມຊັບສິນທາງປັນຍາ ໄດ້ຮັບຄຳຮ້ອງສາກົນ. ຖ້າຫາກທ່ານບໍ່ປະຕິບັດຕາມເງື່ອນໄຂ ພາຍໃນກຳນົດເວລາ ທີ່ກ່າວມາຂ້າງເທິງນັ້ນ, ການລະບຸຂໍການປົກປ້ອງໃນສະຫະລັດອາເມລິກາ ຈະຖືກເພີກຖອນ.

## 5. ການຈົດທະບຽນສາກົນຂອງເຄື່ອງໝາຍການຄ້າ (IR)

ຖ້າຫາກ ຄຳຮ້ອງສາກົນຂອງທ່ານຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂທີ່ຕ້ອງການ, ອົງການ WIPO ຈະຈົດທະບຽນ ເຄື່ອງໝາຍຂອງທ່ານໃນລະບົບການຈົດທະບຽນສາກົນ (IR), ພິມເຜີຍແຜ່ການຈົດທະບຽນສາກົນ ໃນຈົດໝາຍເຫດຂອງອົງການ WIPO ກ່ຽວກັບການຈົດທະບຽນເຄື່ອງໝາຍ ແລະ ແຈ້ງໃຫ້ສຳນັກງານພາຄີທີ່ໄດ້ຖືກລະບຸຂໍການປົກປ້ອງ (DCPs) ພ້ອມທັງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ ແລະ ສົ່ງໃບຢັ້ງຢືນການຈົດທະບຽນສາກົນ ໃຫ້ທ່ານ.

### 5.1. ວັນທີ ແລະ ຜົນສັກສິດຂອງການຈົດທະບຽນສາກົນ

#### 5.1.1. ວັນທີຂອງການຈົດທະບຽນສາກົນ

ຕາມຫຼັກການແລ້ວ, ການຈົດທະບຽນສາກົນຂອງທ່ານ ຈະມີວັນທີຮັບຄຳຮ້ອງສາກົນ ໂດຍກົມຊັບສິນທາງປັນຍາ, ຍົກເວັ້ນໃນກໍລະນີ ຄຳຮ້ອງຂອງທ່ານຖືກສົ່ງໄປເຖິງອົງການ WIPO ໃຊ້ເວລາເກີນສອງເດືອນ ຫຼັງຈາກວັນທີ ທີ່ກ່າວມານັ້ນ (ໃນກໍລະນີນີ້, ວັນທີຂອງການຈົດທະບຽນສາກົນຂອງທ່ານ ຈະແມ່ນວັນທີ ທີ່ອົງການ WIPO ໄດ້ຮັບຄຳຮ້ອງຕົວຈິງ).

ວັນທີຂອງການຈົດທະບຽນສາກົນຂອງທ່ານ ຈະໄດ້ຮັບຜົນກະທົບ ຖ້າຫາກຂາດອົງປະກອບລຸ່ມນີ້: ຊື່ ແລະ ທີ່ຢູ່ຂອງທ່ານ, ຫລື ຊື່ສຳນັກງານພາຄີທີ່ໄດ້ຖືກລະບຸຂໍການປົກປ້ອງ ການສຳເນົາເຄື່ອງໝາຍ, ການລະບຸລາຍການສິນຄ້າ ແລະ ການບໍລິການ ທີ່ເຄື່ອງໝາຍຕ້ອງໄດ້ຮັບການປົກປ້ອງ . ກົມຊັບສິນທາງປັນຍາ ຈະໄດ້ຮັບແຈ້ງການກ່ຽວກັບຄວາມຜິດພາດຂອງຂໍ້ມູນຕ່າງທີ່ກ່າວມາ ຊຶ່ງຂໍ້ມູນທີ່ຜິດພາດນັ້ນ ຈະຕ້ອງໄດ້ຮັບການແກ້ໄຂໃຫ້ຖືກຕອງ ພາຍໃນເວລາສາມເດືອນ (ສູງສຸດ). ວັນທີຂອງການຈົດທະບຽນສາກົນຂອງທ່ານ ຈະຂຶ້ນກັບວັນທີ ທີ່ອົງການ WIPO ໄດ້ຮັບຂໍ້ມູນຫຼ້າສຸດທີ່ບໍ່ຖ້ວນ.

#### 5.1.2. ຜົນສັກສິດຂອງການຈົດທະບຽນສາກົນ

ຈາກວັນທີຂອງການຈົດທະບຽນສາກົນ ເຄື່ອງໝາຍຂອງທ່ານຈະໄດ້ຮັບການປົກປ້ອງຢູ່ໃນແຕ່ລະປະເທດພາຄີທີ່ຖືກລະບຸຂໍການປົກປ້ອງ (DCP) ເຊັ່ນດຽວກັນກັບເຄື່ອງໝາຍຂອງທ່ານໄດ້ຖືກຍື່ນ ຫຼື ຂໍການປົກປ້ອງໂດຍກົງຢູ່ໃນປະເທດພາຄີທີຖືກລະບຸຂໍການປົກປ້ອງນັ້ນ.

ປະເທດພາຄີທີຖືກລະບຸ ອາດຈະປະຕິເສດການປົກປ້ອງເຄື່ອງໝາຍຂອງທ່ານທີ່ໄດ້ຍື່ນໂດຍກົງກັບສຳນັກງານຂອຕົນ ດ້ວຍເຫດຜົນທີ່ອີງຕາມກົດໝາຍພາຍໃນປະເທດຂອງຕົນ (ຕົວຢ່າງ: ຍ້ອນເຄື່ອງໝາຍດັ່ງກ່າວໄດ້ຮັບການຈົດທະບຽນໃນປະເທດພາຄີທີ່ລະບຸນັ້ນ ໂດຍບຸກຄົນອື່ນແລ້ວ). ການປະຕິເສດດັ່ງກ່າວ ອາດຈະໄດ້ຮັບການທົບທວນ ຫຼື ອຸທອນ ຕາມກົດໝາຍ ແລະ ແນວທາງການປະຕິບັດຂອງປະເທດພາຄີທີ່ຖືກລະບຸທີ່ກ່ຽວຂ້ອງ. ທ່ານຈະໄດ້ຮັບຂໍ້ມູນກ່ຽວກັບແນວທາງການປະຕິບັດ ແລະ ຂັ້ນຕອນຕ່າງໆ ຂອງປະເທດ ສະມາຊິກສະຫະພາບມາດຣິດຢູ່ໃນຖານຂໍ້ມູນ ຂອງສະມາຊິກອົງການ WIPO ທີ່ເວັບໄຊທ໌: http://www.wipo.int/madrid/memberprofiles/#/

ໃນກໍລະນີ ພາຄີທີຖືກລະບຸ ບໍ່ໄດ້ປະຕິເສດການປົກປ້ອງເຄື່ອງໝາຍຂອງທ່ານ ພາຍໃນກຳນົດເວລາ (12 ເດືອນ, 18 ເດືອນ, ຫຼືຫຼາຍກວ່າ 18 ເດືອນ ກໍລະນີມີການຄັດຄ້ານ), ຫຼື ການປະຕິເສດດັ່ງກ່າວນັ້ນ ຖືກເພີກຖອນໃນເວລາຕໍ່ມາ, ເຄື່ອງໝາຍການຄ້າຂອງທ່ານກໍຍັງໄດ້ຮັບການປົກປ້ອງຢູ່ໃນພາຄີທີ່ຖືກລະບຸນັ້ນ, ຖ້າຫາກເຄື່ອງໝາຍຂອງທ່ານໄດ້ຮັບການຈົດທະບຽນໂດຍສຳນັກງານຂອງພາຄີທີ່ຖືກລະບຸນັ້ນ ນັບແຕ່ວັນທີຂອງການຈົດທະບຽນສາກົນຂອງທ່ານ.

ຢູ່ໃນພາຄີທັງໝົດທີ່ຖືກລະບຸ ຫາກບໍ່ໄດ້ປະຕິເສດການປົກປ້ອງ, ເຄື່ອງໝາຍຂອງທ່ານຈະມີຜົນໃນໄລຍະເວລາ 10 ປີ ນັບແຕ່ວັນທີການຈົດທະບຽນສາກົນ, ຊຶ່ງມີຄວາມເປັນໄປໄດ້ທີ່ຈະຕໍ່ອາຍຸໄດ້ ອີກ 10 ປີ ຕະຫຼອດໄປ.

**ຄຳແນະນຳ**

***ຄົ້ນຫາ ກ່ຽວກັບ ຂັ້ນຕອນ ແລະ ການປະຕິບັດຂອງປະເທດ ສະມາຊິກ ສະຫະພາບມາດຣິດ ໃນຖານຂໍ້ມູນທີ່ http://www.wipo.int/madrid/memberprofiles/#/***

## 5.2. ການຄຸ້ມຄອງການຈົດທະບຽນສາກົນ ການປະຕິບັດທີ່ໄດ້ຮັບຜົນດີ

ລະບົບມາດຣິດ ມີຂໍ້ດີຫຼາຍຢ່າງ ທີ່ເຮັດໃຫ້ເຄື່ອງໝາຍການຄ້າຂອງທ່ານໄດ້ຮັບການປົກປ້ອງ ຢູ່ໃນຕະຫຼາດຫຼາຍປະເທດ, ທ່ານຍັງຈະໄດ້ຮັບຜົນປະໂຫຍດອີກຫຼາຍຢ່າງ ໃນການບໍລິຫານຈັດການເຄື່ອງໝາຍຂອງທ່ານ ຫຼັງຈາກການຈົດທະບຽນ. ການຂະຫຍາຍການປົກປ້ອງເຄື່ອງໝາຍການຄ້າຂອງທ່ານໄປສູ່ອານາເຂດ (ປະເທດ)ໃໝ່, ຕໍ່ອາຍຸການປົກປ້ອງເຄື່ອງໝາຍການຄ້າຂອງທ່ານ ເພີ່ມອີກ 10 ປີ ຕະຫຼອດໄປ, ຫຼື ປ່ຽນແປງການຈົດທະບຽນຂອງທ່ານທີ່ບັນທຶກໄວ້ໃນລະບົບທະບຽນສາກົນ ໂດຍມີຜົນຂະຫຍາຍໄປສູ່ປະເທດສະມາຊິກສະຫະພາບ ມາດຣິດ ທີ່ທ່ານຕ້ອງການດ້ວຍຂັ້ນຕອນທີ່ງ່າຍດາຍ ແລະ ຄຸ້ມຄ່າ.

### 5.2.1. ການຂະຫຍາຍການປົກປ້ອງໃນອານາເຂດໃໝ່ (ການລະບຸເພີ່ມປະເທດທີ່ຕ້ອງການປົກປ້ອງ)

ຫາກທ່ານເປັນຜູ້ຖືສິດຂອງການຈົດທະບຽນສາກົນ ທີ່ຂະຫຍາຍຜົນເຖິງບາງປະເທດ (ພາຄີ) ສະມາຊິກສະຫະພາບມາດຣິດ, ທ່ານອາດຈະຂະຫຍາຍການປົກປ້ອງເຄື່ອງໝາຍການຄ້າຂອງທ່ານໄປສູ່ປະເທດສະມາຊິກສະຫະພາບມາດຣິດທີ່ບໍ່ທັນໄດ້ລະບຸຢູ່ໃນຄຳຮ້ອງສາກົນຂອງທ່ານໄດ້ຕະຫຼອດເວລາ ໂດຍການຍື່ນຄຳຮ້ອງຂໍເພີ່ມປະເທດ ເຖິງ WIPO ໂດຍກົງ ຫຼື ຜ່ານ DIP.

ຄຳຮ້ອງຂໍເພີ່ມປະເທດ ຕ້ອງປະກອບຕາມແບບຟອມທາງການ MM4, ທີ່ສາມາດດາວນ໌ໂຫລດໄດ້ຈາກເວັບໄຊຕ໌ (http://www.wipo.int/madrid/en/forms/),ອາດຈະຕື່ມຂໍ້ມູນໃສ່ ແລະ ຍື່ນໃຫ້ WIPO ຜ່ານທາງເອເລັກໂຕຣນິກ ຂອງອົງການ WIPO ທີ່ເວັບໄຊທ໌: (https://www3.wipo.int/osd/). ຖ້າຫາກມີຂໍ້ສົງໄສໃດໆ ກໍສາມາດຕິດຕໍ່ ພົວພັນກັບອົງການ WIPO ໄດ້ຕາມທີ່ຢູ່ນີ້: (https://www3.wipo.int/contact/en/madrid/).

ໃນແບບພິມທາງການ MM4, ທ່ານຕ້ອງລະບຸເລກທີຈົດທະບຽນສາກົນ, ຊື່ ແລະ ທີ່ຢູ່ຂອງທ່ານ (ຕາມທີ່ໄດ້ບັນທຶກໄວ້ໃນລະບົບການຈົດທະບຽນສາກົນ), ສາມາດລະບຸໄດ້ ໜຶ່ງພາຄີ ຫຼື ຫຼາຍພາຄີທີ່ຕ້ອງການຂະຫຍາຍການປົກປ້ອງ ແລະ ລະບຸລາຍການສິນຄ້າ ແລະການບໍລິການ ທີ່ຕ້ອງການປົກປ້ອງ (ຊຶ່ງອາດຈະກວມເອົາທັງໝົດ ຫຼື ບາງສ່ວນຕາມທີ່ໄດ້ລະບຸໄວ້ໃນການຈົດທະບຽນສາກົນ).ສຳລັບບາງພາຄີ ເຊັ່ນ:(ສະຫະພາບເອີຣົບ, ສະຫະລັດອາເມລິກາ) ທ່ານອາດຈຳເປັນຕ້ອງສະໜອງຂໍ້ມູນເພີ່ມ (ຄືດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 4.5).

**ການຂໍຮັບການຄຸ້ມຄອງເພີ້ມເຕີມຂອງບັນດາຄູ່ສັນຍາເພີ່ມເຕີມ**



ARISE+
ASEAN Intellectual Property Rights

ຄ່າທຳນຽມທີ່ຕ້ອງຈ່າຍສຳລັບການລະບຸຂໍເພີ່ມປະເທດ ລວມທັງຄ່າທຳນຽມເບື້ອງຕົ້ນ (300 ສະວິດຟຣັ່ງ), ຄ່າທຳນຽມສະເພາະປະເທດ ສຳລັບແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງ ທີ່ໄດ້ກຳນົດຄ່າທຳນຽມສະເພາະປະເທດ ຕາມເວັບໄຊທຸລຸ່ມນີ້: (http://www.wipo.int/madrid/en/fee/ind_taxes.html), ແລະ ຄ່າທຳນຽມເພີ່ມປະເທດ (100 ສະວິດຟຣັ່ງ) ສຳລັບແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງ ທີ່ບໍ່ໄດ້ກຳນົດຄ່າທຳນຽມສະເພາະປະເທດ. ໃຊ້ເຄື່ອງຄິດໄລ່ຄ່າທຳນຽມ ຈາກເວັບໄຊທຸລຸ່ມນີ້ ເພື່ອຄຳນວນຄ່າທຳນຽມທີ່ຕ້ອງຈ່າຍ:(http://www.wipo.int/madrid/en/fee/calculator.jsp).

ຖ້າຫາກຍື່ນຄຳຮ້ອງຂໍເພີ່ມປະເທດ ໂດຍກົງເຖິງ WIPO, ການລະບຸຂໍເພີ່ມປະເທດ ຈະມີຜົນນັບຈາກວັນທີ ທີ່ອົງການ WIPO ໄດ້ຮັບຄຳຮ້ອງ. ຖ້າຫາກຍື່ນຄຳຮ້ອງຂໍເພີ່ມປະເທດນຳ DIP, ກໍ່ຈະມີຜົນນັບຈາກວັນທີ ທີ່ DIP ໄດ້ຮັບຄຳຮ້ອງ, ເວັ້ນເສຍແຕ່ ຄຳຮ້ອງດັ່ງກ່າວຈະຖືກສົ່ງເຖິງ WIPO ຊ້າກວ່າສອງເດືອນນັບຈາກວັນທີ ທີ່ DIP ໄດ້ຮັບເອກະສານ, ໃນກໍລະນີນີ້ ການລະບຸຂໍເພີ່ມປະເທດ ຈະມີຜົນນັບຈາກວັນທີ ທີ່WIPO ໄດ້ຮັບຄຳຮ້ອງ.

ຖ້າຫາກພາຄີທີ່ຖືກລະບຸຂໍການປົກປ້ອງ ບໍ່ໄດ້ປະຕິເສດການປົກປ້ອງເຄື່ອງໝາຍຂອງທ່ານ ພາຍໃນໄລຍະເວລາທີ່ກຳນົດໄວ້ (12 ເດືອນ, 18 ເດືອນ ຫຼື ຫຼາຍກວ່າ 18 ເດືອນ ກໍລະນີມີການຄັດຄ້ານ), ການປະຕິເສດດັ່ງກ່າວນັ້ນຖືກເພີກຖອນໃນເວລາຕໍ່ມາ, ເຄື່ອງໝາຍການຄ້າຂອງທ່ານກໍຍັງໄດ້ຮັບການປົກປ້ອງ ຢູ່ໃນພາຄີທີ່ຖືກລະບຸນັ້ນ ຄືກັບເຄື່ອງໝາຍຂອງທ່ານໄດ້ຮັບການຈົດທະບຽນແລ້ວ ນັບຈາກວັນທີຂອງການລະບຸຂໍເພີ່ມປະເທດ.

ໃນພາຄີທັງໝົດທີ່ຖືກລະບຸຂໍການປົກປ້ອງ ທີ່ບໍ່ມີການປະຕິເສດການປົກປ້ອງ, ເຄື່ອງໝາຍຂອງທ່ານຈະມີຜົນຕະຫຼອດໄລຍະຂອງ ການຈົດທະບຽນສາກົນ, ຊຶ່ງມີຄວາມເປັນໄປໄດ້ທີ່ຈະຕໍ່ອາຍຸໄດ້ ອີກ 10 ປີ ຕະຫຼອດໄປ.

**ຄຳແນະນຳ**

***ສາມາດຂະຫຍາຍການປົກປ້ອງໄປສູ່ປະເທດໃໝ່ຂອງສະມາຊິກລະບົບ ມາດຣິດ ໂດຍໃຊ້ ການລະບຸເພີ່ມປະເທດ ຜ່ານລະບົບເອເລັກໂຕຣນິກ ໄດ້ທີ່ https://www3.wipo.int/osd/***

### 5.2.2. ການບັນທຶກການດັດແກ້ຂໍ້ມູນແບບລວມສູນຂອງການຈົດທະບຽນສາກົນຂອງທ່ານ

ຕະຫຼອດອາຍຸຂອງການຈົດທະບຽນສາກົນຂອງທ່ານ, ທ່ານສາມາດຮ້ອງຂໍໃຫ້ອົງການ WIPO ບັນທຶກການປ່ຽນແປງຊື່ ຫຼື ທີ່ຢູ່, ຜູ້ຕາງໜ້າຂອງທ່ານເວລາໃດກໍໄດ້, ຂໍ້ຈຳກັດໂດຍສະໝັກໃຈໃນການປົກປ້ອງການຈົດທະບຽນສາກົນຂອງທ່ານ (ການຈຳກັດ, ການສະຫຼະສິດ, ການຍົກເລີກ), ການປ່ຽນແປງກຳມະສິດໃນເຄື່ອງໝາຍຂອງທ່ານ ຫຼື ການອະນຸຍາດໃຫ້ນຳໃຊ້ສິດ ທີ່ມີຜົນຢູ່ໃນທັງໝົດ ຫຼື ບາງພາຄີທີ່ຖືກລະບຸຂໍການປົກປ້ອງ. ຖ້າຫາກຕ້ອງການບັນທຶກການດັດແກ້ຂໍ້ມູນໃດໆກໍຕາມ, ທ່ານຕ້ອງນຳໃຊ້ແບບພິມທາງການທີ່ມີໃຫ້ໃນເວັບໄຊທ໌ຂອງອົງການ WIPO (http://www.wipo.int/madrid/en/forms/). ການບັນທຶກການດັດແກ້ຂໍ້ມູນແບບລວມສູນ ໃນລະບົບການຈົດທະບຽນສາກົນນັ້ນ ຊ່ວຍໃຫ້ທ່ານປະຢັດຄ່າໃຊ້ຈ່າຍໄດ້ຫຼາຍ ຈາກການຮ້ອງຂໍດັດແກ້ຂໍ້ມູນດັ່ງກ່າວ ຢູ່ໃນແຕ່ລະສຳນັກງານຂອງພາຄີທີ່ຖືກລະບຸຂໍການປົກປ້ອງ .

ໃນການຮ້ອງຂໍເພື່ອບັນທຶກ**ການປ່ຽນແປງຊື່ ຫຼື ທີ່ຢູ່ຂອງຜູ້ຖືສິດ**ຂອງການຈົດທະບຽນສາກົນ (ໂດຍບໍ່ຕ້ອງປ່ຽນກຳມະສິດ) ທ່ານຕ້ອງນຳໃຊ້ແບບພິມ MM9, ຊຶ່ງສາມາດໃຊ້ໄດ້ກັບຫຼາຍຄຳຮ້ອງຂອງການຈົດທະບຽນສາກົນ ໂດຍຈ່າຍຄ່າທຳນຽມພຽງແຕ່ 150 ສະວິດຟຣັ່ງ ໃຫ້ ອົງການ WIPO. ຖ້າຫາກຈະບັນທຶກການປ່ຽນແປງຂໍ້ມູນບາງຢ່າງກ່ຽວກັບລາຍລະອຽດຂອງທີ່ຢູ່ຕິດຕໍ່ຂອງທ່ານ (ທີ່ຢູ່ສຳລັບຮັບ-ສົ່ງຂໍ້ມູນ, ທີ່ຢູ່ອີເມລ໌, ຫຼື ເບີໂທລະສັບ) ແມ່ນບໍ່ມີຄ່າທຳນຽມ. ການປ່ຽນແປງຊື່ ຫຼື ທີ່ຢູ່ທີ່ໄດ້ບັນທຶກໃນລະບົບການຈົດທະບຽນສາກົນ ຈະມີຜົນທັນທີຢູ່ໃນພາຄີທັງໝົດທີ່ກ່ຽວຂ້ອງກັບການຈົດທະບຽນສາກົນ ໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມ.

ຖ້າຫາກທ່ານເປັນຜູ້ຖືສິດໃນການຈົດທະບຽນສາກົນ ແລະ ໄດ້ໂອນສິດຕໍ່ເຄື່ອງໝາຍຂອງທ່ານໃຫ້ຜູ້ອື່ນສຳລັບ ທັງໝົດ ຫຼື ບາງລາຍການສິນຄ້າ ແລະ ການບໍລິການທີ່ໄດ້ຮັບການປົກປ້ອງ ໃນທັງໝົດ ຫຼື ບາງພາຄີທີ່ຖືກລະບຸຂໍການປົກປ້ອງ, ທ່ານກໍສາມາດຮ້ອງຂໍບັນທຶກ**ການປ່ຽນແປງກຳມະສິດ** ໃນລະບົບການຈົດທະບຽນສາກົນ. ການບັນທຶກດັ່ງກ່າວຈະເກີດຂຶ້ນໄດ້ກໍຕໍ່ເມື່ອຜູ້ຖືສິດໃໝ່ແມ່ນບຸກຄົນທີ່ມີສິດນຳໃຊ້ລະບົບມາດຣິດ (ໂດຍສັນຊາດ ຫຼື ການສ້າງຕັ້ງທຸລະກິດ ຫຼື ມີພູມລຳເນົາຢູ່ໃນພາຄີຂອງອານຸສັນຍາມາດຣິດ). ການປ່ຽນກຳມະສິດ ແມ່ນສາມາດໃຊ້ໄດ້ກັບຫຼາຍຄຳຮ້ອງຂອງການຈົດທະບຽນສາກົນ ສຳລັບທັງໝົດ ຫຼື ບາງພາຄີທີ່ຖືກລະບຸຂໍການປົກປ້ອງ ແລະ ກ່ຽວຂ້ອງກັບທັງໝົດ ຫຼື ບາງລາຍການສິນຄ້າ ແລະ ການບໍລິການທີ່ໄດ້ຮັບການປົກປ້ອງ. ການຮ້ອງຂໍໂດຍນຳໃຊ້ແບບພິມທາງການ MM5 ຕ້ອງຖືກຍື່ນເຖິງອົງການ WIPO ແລະ ຊຳລະຄ່າທຳນຽມ (177 ສະວິດຟຣັ່ງ). ການປ່ຽນກຳມະສິດ ທີ່ໄດ້ບັນທຶກໃນລະບົບການຈົດທະບຽນສາກົນ ຈະມີຜົນທັນທີຢູ່ໃນພາຄີທັງໝົດທີ່ກ່ຽວຂ້ອງ ໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມ.

ການຮ້ອງຂໍບັນທຶກ**ການປ່ຽນແປງຊື່ ຫຼື ທີ່ຢູ່ຂອງຜູ້ຕາງໜ້າ** ແມ່ນບໍ່ມີຄ່າໃຊ້ຈ່າຍໃດໆ, ຊຶ່ງທ່ານຕ້ອງນຳໃຊ້ແບບພິມທາງການ MM10.

## ການຕໍ່ອາຍຸ / ການແກ້ໄຂການຂຶ້ນທະບຽນສາກົນ




**ການຂໍຈຳກັດ** ລາຍການສິນຄ້າ ແລະ ການບໍລິການ ອາດຈະສົ່ງຜົນຕໍ່ທັງໝົດ ຫຼື ບາງພາຄີທີ່ຖືກລະບຸຂໍການປົກປ້ອງ ຊຶ່ງທ່ານຕ້ອງນໍາໃຊ້ແບບພິມທາງການ MM6 ແລະ ຊໍາລະຄ່າທໍານຽມ (177 ສະວິດຟຣັ່ງ) ໃຫ້ອົງການ WIPO ແລະ ບໍ່ມີຄ່າທໍານຽມເພີ່ມເຕີມອີກຈາກພາຄີທີ່ຖືກລະບຸຂໍການປົກປ້ອງ ທີ່ກ່ຽວຂ້ອງ.

ຖ້າຫາກທ່ານຕ້ອງການບັນທຶກ **ການສະຫຼະສິດ**ການປົກປ້ອງ ສໍາລັບທັງໝົດລາຍການສິນຄ້າ ແລະ ການບໍລິການ ໃນບາງພາຄີ(ບໍ່ແມ່ນທັງໝົດ) ທີ່ຖືກລະບຸຂໍການປົກປ້ອງ, ທ່ານຕ້ອງນໍາໃຊ້ແບບພິມທາງການ MM7. ຖ້າຫາກທ່ານຕ້ອງການ**ຍົກເລີກ**ການຈົດທະບຽນສາກົນ ສໍາລັບທັງໝົດລາຍການສິນຄ້າ ແລະ ການບໍລິການ ໃນພາຄີທັງໝົດທີ່ຖືກລະບຸຂໍການປົກປ້ອງ, ທ່ານຕ້ອງນໍາໃຊ້ແບບພິມທາງການ MM8. ການຂໍສະຫຼະສິດ ແລະ ການຍົກເລີກ ແມ່ນບໍ່ມີຄ່າທໍານຽມ.

ຖ້າຫາກທ່ານອະນຸຍາດໃຫ້ສິດນໍາໃຊ້ເຄື່ອງໝາຍຂອງທ່ານ, ທ່ານອາດຈະສະເໜີຂໍ**ບັນທຶກການອະນຸຍາດໃຫ້ສິດນໍາໃຊ້**ໃນລະບົບການຈົດທະບຽນສາກົນ ໂດຍການລະບຸ ຊື່ ແລະ ທີ່ຢູ່ ຂອງຜູ້ທີ່ໄດ້ຮັບອະນຸຍາດໃຫ້ໃຊ້ສິດ, ບັນດາພາຄີທີ່ຖືກລະບຸຂໍການປົກປ້ອງ, ລາຍການສິນຄ້າ ແລະ ການບໍລິການ ທີ່ກ່ຽວຂ້ອງກັບການອະນຸຍາດໃຫ້ສິດນໍາໃຊ້. ທ່ານຕ້ອງນໍາໃຊ້ແບບພິມທາງການ MM13 ແລະ ຈ່າຍຄ່າທໍານຽມ 177 ສະວິດຟຣັ່ງ. ການບັນທຶກການອະນຸຍາດໃຫ້ສິດນໍາໃຊ້ ໃນລະບົບການຈົດທະບຽນສາກົນ ຈະມີຜົນສະເພາະໃນປະເທດທີ່ມີກົດໝາຍພາຍໃນປະເທດໄດ້ກໍານົດໄວ້ສໍາລັບການບັນທຶກການອະນຸຍາດໃຫ້ສິດນໍາໃຊ້ ແລະ ບໍ່ໄດ້ອອກແຈ້ງການທີ່ລະບຸວ່າປະເທດຂອງຕົນບໍ່ຮັບຮູ້ຜົນຂອງການບັນທຶກການອະນຸຍາດໃຫ້ສິດນໍາໃຊ້ໃນລະບົບການຈົດທະບຽນສາກົນ .

### 5.2.3. ການຕໍ່ອາຍຸຂອງການຈົດທະບຽນສາກົນຂອງທ່ານ

ເພື່ອຮັບປະກັນວ່າ ຫຼັງຈາກໄລຍະເວລາ 10 ປີ ຈາກການຈົດທະບຽນ ເຄື່ອງໝາຍຂອງທ່ານຍັງຈະໄດ້ຮັບການປົກປ້ອງ ເພີ່ມຕື່ມອີກ ເປັນເວລາ 10 ປີ ໃນອານາເຂດທີ່ທ່ານຕ້ອງການ; ທ່ານພຽງແຕ່ຕໍ່ອາຍຸການຈົດທະບຽນສາກົນຂອງທ່ານ ໂດຍຈ່າຍຄ່າທໍານຽມທີ່ຈໍາເປັນ ໃຫ້ອົງການ WIPO. ຄ່າທໍານຽມສໍາລັບການຕໍ່ອາຍຸ ລວມທັງ ຄ່າທໍານຽມເບື້ອງຕົ້ນ (653 ສະວິດຟຣັ່ງ), ຄ່າທໍານຽມສະເພາະປະເທດ ສໍາລັບແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງທີ່ໄດ້ກໍານົດ (http://www.wipo.int/madrid/en/fees/ind_taxes.html), ຄ່າທໍານຽມເພີ່ມປະເທດ (100 ສະວິດຟຣັ່ງ) ສໍາລັບແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງທີ່ບໍ່ໄດ້ຮັບຮອງເອົາລະບົບຄ່າທໍານຽມສະເພາະປະເທດ ແລະ ຄ່າທໍານຽມເພີ່ມໝວດ (100 ສະວິດຟຣັ່ງ) ສໍາລັບແຕ່ລະລາຍການສິນຄ້າ ແລະ ການບໍລິການ ທີ່ເກີນສາມໝວດ, ຍົກເວັ້ນກໍລະນີທີ່ທ່ານຕໍ່ອາຍຸການປົກປ້ອງຢູ່ໃນບັນດາພາຄີທີ່ຖືກລະບຸຂໍການປົກປ້ອງ ທີ່ໄດ້ກໍານົດຄ່າທໍານຽມສະເພາະປະເທດ.

---

*[3] 23 ສະມາຊິກສະຫະພັນມາດຣິດທີ່ໄດ້ປະກາດຕົນວ່າ ບໍ່ຮັບຮູ້ຜົນຂອງການບັນທຶກ ການອະນຸຍາດນໍາໃຊ້ໃນລະບົບການຈົດທະບຽນສາກົນ ລວມມີ: ອັຟການິສະຖານ, ອົງການຊັບສິນທາງປັນຍາອາຟຣິກາ (OAPI), ບຣາຊິນລ໌, ກໍາປູເຈຍ, ການາດາ, ຈີນ, ໂກລົມເບຍ, ກໍາເບຍ, ຈໍເຈຍ, ອິນເດຍ, ອິນໂດເນເຊຍ, ຍີ່ປຸ່ນ, ກີຣ໌ກີສຖານ, ສປປ. ລາວ, ມາລາວີ, ມາເລເຊຍ, ເມັກຊິໂກ, ສາທາລະນະລັດເກົາຫຼີ, ສາທາລະນະລັດມອນໂດວາ, ສະຫະພັນລັດເຊຍ, ຊາມົວ, ສິງກະໂປ ແລະ ໄທ. ໃນພາຄີເຫຼົ່ານັ້ນ, ການບັນທຶກການອະນຸຍາດນໍາໃຊ້ ຕ້ອງດໍາເນີນໂດຍກົງກັບສໍານັກງານເຄື່ອງໝາຍການຄ້າໂດຍອີງຕາມກົດໝາຍພາຍໃນປະເທດ.. ປະເທດອິດສະຕາລີ ແລະ ນິວຊີແລນໄດ້ປະກາດຕົນວ່າ ບໍ່ໄດ້ກໍານົດໃຫ້ມີການບັນທຶກການອະນຸຍາດນໍາໃຊ້ ພາຍໃຕ້ກົດໝາຍພາຍໃນປະເທດ, ດັ່ງນັ້ນການບັນທຶກການອະນຸຍາດນໍາໃຊ້ໃນລະບົບການຈົດທະບຽນສາກົນ ແມ່ນບໍ່ມີຜົນໃນອານາເຂດຂອງພວກເຂົາ.*

ARISE+
ASEAN Intellectual Property Rights

ການບໍລິການຕໍ່ອາຍຸແບບເອເລັກໂຕຣນິກຂອງການຈົດທະບຽນສາກົນ ແມ່ນສາມາດເຮັດໄດ້ໃນເວັບໄຊທ໌ຂອງອົງການ WIPO ແລະ ທ່ານສາມາດເຂົ້າເຖິງໄດ້ຜ່ານທາງເວັບໄຊຕ໌ WIPO IP Portal (https://webaccess.wipo.int/trademarks_ren/?lang=EN). ທ່ານສາມາດຄໍານວນຄ່າທໍານຽມທີ່ຈະຕ້ອງຈ່າຍສໍາລັບການຕໍ່ອາຍຸການຈົດທະບຽນສາກົນຂອງທ່ານ ໂດຍນໍາໃຊ້ເຄື່ອງມືຄໍານວນຄ່າທໍານຽມ (Fee Calculator) ຂອງອົງການ WIPO (http://www.wipo.int/madrid/en/fees/calculator.jsp).

ທ່ານສາມາດຈ່າຍຄ່າທໍານຽມການຕໍ່ອາຍຸ ໂດຍນໍາໃຊ້ບັດເຄຣດິດ ຫຼື ບັນຊີກະແສລາຍວັນຂອງອົງການ WIPO ຖ້າມີ.

ຄ່າທໍານຽມການຕໍ່ອາຍຸ ທີ່ຄວນຈ່າຍໃຫ້ອົງການ WIPO ຢ່າງຊ້າສຸດແມ່ນໃນວັນທີໝົດອາຍຸຂອງການຈົດທະບຽນສາກົນ. ການຊໍາລະຄ່າທໍານຽມສາມາດຊໍາລະພາຍໃນເວລາຫົກເດືອນ ຫຼັງຈາກວັນໝົດອາຍຸ (ໄລຍະຜ່ອນຜັນ) ແຕ່ໃນເວລາດຽວກັນ ຕ້ອງໄດ້ຈ່າຍຄ່າປັບໄໝ. ອົງການ WIPO ບັນທຶກການຕໍ່ອາຍຸ ວັນຄົບກໍານົດ ເຖິງວ່າໄດ້ຈ່າຍຄ່າທໍານຽມພາຍໃນໄລຍະຜ່ອນຜັນແລ້ວກໍຕາມ.

ວັນທີຂອງການຕໍ່ອາຍຸການຈົດທະບຽນສາກົນຂອງທ່ານ ຈະມີຜົນສັກສິດຄືກັນສໍາລັບທັງໝົດພາຄີທີ່ຖືກລະບຸຂໍການປົກປ້ອງ. ນີ້ແມ່ນຂໍ້ໄດ້ປຽບທີ່ຊັດເຈນ ຂອງລະບົບມາດຣິດ ເມື່ອປຽບທຽບກັບການຈົດທະບຽນພາຍໃນປະເທດ ຊຶ່ງທ່ານມີເຄື່ອງໝາຍການຄ້າທີ່ຕ້ອງການຕໍ່ອາຍຸຢູ່ໃນບັນດາສໍານັກງານເຄື່ອງໝາຍການຄ້າແຍກຕ່າງຫາກ ໃນວັນທີຕ່າງກັນ.

**ຄໍາແນະນໍາ**

***ເພື່ອຕໍ່ອາຍຸການຂຶ້ນທະບຽນສາກົນຂອງທ່ານ, ໃຫ້ໃຊ້ບໍລິການລະບົບການຕໍ່ອາຍຸແບບເອເລັກໂຕຣນິກໄດ້ທີ່ເວັບໄຊຕ໌ WIPO IP Portal https://ipportal.wipo.int/***

## 5.3. ການເພິ່ງພາເຄື່ອງໝາຍເບື້ອງຕົ້ນ ແລະ ການປ່ຽນສະຖານະພາບ ພາຍໃນຫ້າປີ - ຄວາມເປັນເອກະລາດ

ສິ່ງສໍາຄັນທີ່ຄວນພິຈາລະນາ ກໍຄືໃນລະຫວ່າງໄລຍະເວລາ 5 ປີ (ໄລຍະເພິ່ງພາ), ຜົນຂອງການຈົດທະບຽນສາກົນຂອງທ່ານ ຍັງຈະຂຶ້ນກັບຜົນສຸດທ້າຍຂອງເຄື່ອງໝາຍເບື້ອງຕົ້ນຂອງທ່ານ (ຄໍາຮ້ອງ ຫຼື ການຈົດທະບຽນ) ຢູ່ໃນ ສປປ ລາວ. ດ້ວຍເຫດຜົນໃດກໍຕາມ, ເຄື່ອງໝາຍເບື້ອງຕົ້ນຂອງທ່ານໃນ ສປປ ລາວ ສິ້ນສຸດຜົນຢູ່ໃນທັງໝົດ ຫຼື ບາງສ່ວນ (ການປະຕິເສດ ຫຼື ການເພີກຖອນຄໍາຮ້ອງເບື້ອງຕົ້ນຂອງທ່ານ, ຫຼື ການຍົກເລີກ, ການສະຫຼະສິດ, ການລຶບລ້າງ, ການເປັນໂມຄະ ຫຼື ການໝົດອາຍຸ ຂອງການຈົດທະບຽນເບື້ອງຕົ້ນຂອງທ່ານ) ພາຍໃນຫ້າປີ ນັບຈາກວັນທີຂອງການຈົດທະບຽນສາກົນຂອງທ່ານ), ການຈົດທະບຽນສາກົນຂອງທ່ານຈະຖືກຍົກເລີກ ທັງໝົດ ຫຼື ບາງສ່ວນ (ສະເພາະບາງລາຍການສິນຄ້າ ຫຼື ການບໍລິການ).

ເພື່ອຫຼຸດຜ່ອນຜົນກະທົບທີ່ຕາມມາຂອງໄລຍະເພິ່ງພານີ້, ອານຸສັນຍາມາດຣິດ ໄດ້ເຮັດໃຫ້ມີຄວາມເປັນໄປໄດ້ຂອງການປ່ຽນແປງສະຖານະຂອງການຈົດທະບຽນສາກົນຂອງທ່ານ ມາເປັນຄໍາຮ້ອງຂໍຈົດທະບຽນພາຍໃນປະເທດ ຫຼື ພາກພື້ນ ໃນແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງ ພາຍໃນເວລາສາມເດືອນ ຫຼັງຈາກການຈົດທະບຽນສາກົນຂອງທ່ານ, ທ່ານອາດຈະຂໍຈົດທະບຽນເຄື່ອງໝາຍດຽວກັນນັ້ນ ຢູ່ໃນບັນດາພາຄີທີ່ຖືກລະບຸຂໍການປົກປ້ອງແລະຄໍາຮ້ອງຂໍຈົດທະບຽນເຫຼົ່ານັ້ນ(ອີງຕາມການປ່ຽນແປງສະຖານະຂອງການຈົດທະບຽນສາກົນຂອງທ່ານ)ຈະໄດ້ຮັບການປະຕິບັດຄືກັບຄໍາຮ້ອງທີ່ໄດ້ຍື່ນໃນວັນທີຂອງການຈົດທະບຽນສາກົນດັ້ງເດີມ (ຈຶ່ງເປັນການຮັກສາສິດທີ່ທ່ານມີມາແຕ່ເບື້ອງຕົ້ນ).

ໃນຕອນທ້າຍຂອງໄລຍະເວລາຫ້າປີແຫ່ງການເພິ່ງພາ, ການຈົດທະບຽນສາກົນຂອງທ່ານ ຈະບໍ່ຂຶ້ນກັບເຄື່ອງໝາຍເບື້ອງຕົ້ນຂອງທ່ານອີກ ແລະບໍ່ສາມາດຖືກຍົກເລີກໄດ້ອີກຕໍ່ໄປ.

## 5.4. ເຄື່ອງມືອອນລາຍເພື່ອການຕິດຕາມ ແລະ ຄຸ້ມຄອງເຄື່ອງໝາຍການຄ້າພາຍຫຼັງການຈົດທະບຽນສາກົນ

ນອກຈາກການບໍລິການອອນລາຍທີ່ໄດ້ກ່າວມາຂ້າງເທິງ ທີ່ອໍານວຍຄວາມສະດວກ ໃນການປະກອບຄໍາຮ້ອງສາກົນ (ຕົວຊ່ວຍໃນການປະກອບຄໍາຮ້ອງພາຍໃຕ້ອານຸສັນຍາມາດຣິດ) ຫຼື Madrid Application Assistant), ການຈັດລາຍການສິນຄ້າ ແລະ ການບໍລິການ (MGS), ການຍື່ນຄໍາຮ້ອງຂໍເພີ່ມປະເທດ (ການລະບຸເພື່ອຂໍເພີ່ມປະເທດແບບເອເລັກໂຕຣນິກ ຫຼື e - Subsequent Designation), ການຍື່ນຄໍາຮ້ອງຂໍຕໍ່ອາຍຸ (ການບໍລິການຕໍ່ອາຍຸແບບເອເລັກໂຕຣນິກ ຫລື e-Renewal service ທີ່ WIPO IP Portal), ແລະຄໍານວນຄ່າທໍານຽມ (ເຄື່ອງມືຄໍານວນຄ່າທໍານຽມ), ອົງການ WIPO ໃຫ້ບໍລິການອອນລາຍອີກສອງຢ່າງ ທີ່ເຮັດໃຫ້ມີຄວາມສະດວກສະບາຍຫຼາຍຂຶ້ນ ໃນການຕິດຕາມການຈົດທະບຽນສາກົນຂອງທ່ານ ແລະ ຕິດຕາມຄູ່ແຂ່ງຂອງທ່ານ ແລະ ສາມາດບໍລິຫານການຈົດທະບຽນສາກົນຂອງທ່ານໄດ້ງ່າຍຂຶ້ນ. ລຸ່ມນີ້ແມ່ນຄໍາອະທິບາຍໂດຍຫຍໍ້ຂອງການບໍລິການສອງຢ່າງນີ້.

### 5.4.1. ລະບົບຕິດຕາມການຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ

ລະບົບຕິດຕາມການຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ (http://www.wipo.int/madrid/monitor/en/) ແມ່ນການບໍລິການອອນລາຍຂອງອົງການ WIPO ທີ່ຊ່ວຍໃຫ້ທ່ານເຂົ້າເຖິງຂໍ້ມູນທັງໝົດຂອງເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນພາຍໃຕ້ລະບົບມາດຣິດ ຊຶ່ງມີການເຊື່ອມຕໍ່ສຳລັບການຄົ້ນຫາຂໍ້ມູນດ້ວຍຫຼາຍທາງເລືອກ (ການຄົ້ນຫາແບບງ່າຍດາຍ, ການຄົ້ນຫາໃນລະດັບສູງ, ການຄົ້ນຫາຂໍ້ມູນຕາມເວລາຕົວຈິງ ແລະ ການຄົ້ນຫາຮູບພາບ).

ການນຳໃຊ້ Madrid Monitor ເພື່ອການຄົ້ນຫາຂໍ້ມູນຕາມເວລາຕົວຈິງ, ທ່ານສາມາດຕິດຕາມສະຖານະຂອງຄຳຮ້ອງສາກົນຂອງທ່ານ ໃນຂະນະທີ່ຜ່ານຂະບວນການກວດສອບໂດຍ ອົງການ WIPO ແລະ ທ່ານຍັງສາມາດຕິດຕາມຄວາມຄືບໜ້າຂອງການຈົດທະບຽນສາກົນຂອງທ່ານ ໃນແຕ່ລະພາຄີທີ່ຖືກລະບຸຂໍການປົກປ້ອງ ແລະ ກວດເບິ່ງວ່າ ເຄື່ອງໝາຍຂອງທ່ານ ໄດ້ຮັບການປົກປ້ອງ ຫຼື ຖືກປະຕິເສດ.

ການຄົ້ນຫາແບບງ່າຍດາຍ ແລະ ການຄົ້ນຫາລະດັບສູງ ຊ່ວຍໃຫ້ທ່ານຄົ້ນຫາຂໍ້ມູນທັງໝົດຂອງເຄື່ອງໝາຍໃນຖານຂໍ້ມູນຂອງລະບົບມາດຣິດ ດ້ວຍຄຳສັບ (ເຄື່ອງໝາຍ, ສິນຄ້າ ຫຼື ການບໍລິການ, ຊື່ຂອງຜູ້ຖືສິດ, ຜູ້ຕາງໜ້າ, ສຳນັກງານຕົ້ນກຳເນີດ, ພາຄີທີ່ຖືກລະບຸຂໍການປົກປ້ອງ, ແລະ ອື່ນໆ), ດ້ວຍເລກທີ (ເລກທີການຈົດທະບຽນ, ຄຳຮ້ອງຂໍຈົດທະບຽນເບື້ອງຕົ້ນ, ການຈັດໝວດສາກົນ, ລະຫັດວຽນນາ, ແລະ ອື່ນໆ) ຫຼື ການລວມກັນຂອງສິ່ງທີ່ກ່າວມານັ້ນ. ການຄົ້ນຫາຮູບພາບ ຊ່ວຍໃຫ້ທ່ານຄົ້ນຫາ ໂດຍການເລືອກເອົາຮູບພາບ, ປະເພດຮູບພາບ ຫຼື ຍຸດທະສາດໃນການຄົ້ນຫາຮູບພາບ.

Madrid Monitor ຍັງອະນຸຍາດໃຫ້ທ່ານເຂົ້າເຖິງຂໍ້ມູນຢູ່ໃນຈົດໝາຍເຫດ (Gazette) ຂອງອົງການ WIPO ກ່ຽວກັບເຄື່ອງໝາຍສາກົນ (http://www.wipo.int/madrid/monitor/en/#gazettnd/), ການພິມເຜີຍແຜ່ຂໍ້ມູນທາງການເປັນລາຍສັບປະດາຂອງລະບົບມາດຣິດ ທີ່ປະກອບດ້ວຍຂໍ້ມູນຫຼ້າສຸດຂອງການຈົດທະບຽນສາກົນ, ການຕໍ່ອາຍຸ, ການລະບຸຂໍເພີ່ມປະເທດ ແລະ ການດັດແກ້ການຈົດທະບຽນ.

ເພື່ອອຳນວຍຄວາມສະດວກໃນການຕິດຕາມເຄື່ອງໝາຍການຄ້າຂອງທ່ານ ແລະ/ຫຼື ເຄື່ອງໝາຍຂອງຄູ່ແຂ່ງຂອງທ່ານ, Madrid Monitor ອະນຸຍາດໃຫ້ທ່ານລົງທະບຽນເພື່ອຮັບຂໍ້ມູນແຈ້ງເຕືອນຜ່ານທາງອີເມລ ກ່ຽວກັບການປ່ຽນແປງຕ່າງໆທີ່ກ່ຽວຂ້ອງກັບເຄື່ອງໝາຍການຄ້າທີ່ທ່ານສົນໃຈ. ຖ້າຫາກຕ້ອງການສະໝັກລົງທະບຽນເພື່ອຮັບຂໍ້ມູນແຈ້ງເຕືອນຜ່ານທາງອີເມລ, ທ່ານຕ້ອງມີບັນຊີຜູ້ໃຊ້ ຂອງອົງການ WIPO ຊຶ່ງສາມາດສ້າງໄດ້ທີ່ເວັບໄຊຕ໌ https://www3.wipo.int/wipoaccounts/generic/public/register.xhtml



### 5.4.2. ເຄື່ອງມືຄຸ້ມຄອງເອກະສານການຈົດທະບຽນເຄື່ອງໝາຍການຄ້າຜ່ານລະບົບມາດຣິດ (MPM)

Madrid Portfolio Manager (MPM) ຫຼື ລະບົບຄຸ້ມຄອງເອກະສານຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ ແມ່ນບໍລິການອອນລາຍຂອງ WIPO ຢູ່ທີ່ເວັບໄຊຕ໌ WIPO IP Portal (https://ipportal.wipo.int/) ທີ່ຊ່ວຍໃຫ້ທ່ານຄຸ້ມຄອງເອກະສານການຈົດທະບຽນເຄື່ອງຫມາຍການຄ້າສາກົນຂອງທ່ານ ດ້ວຍການເຂົ້າເຖິງຂໍ້ມູນຈາກບັນຊີດຽວ ທີ່ມີຄວາມປອດໄພ. ໃນການເຂົ້າໃຊ້ເວັບໄຊຕ໌ WIPO IP Portal ແລະ ໃຊ້ MPM ນັ້ນ, ທ່ານຕ້ອງມີບັນຊີຜູ້ໃຊ້ຂອງອົງການWIPO (https://www3.wipo.int/wipoaccounts/generic/public/register.xhtml). ຊຶ່ງເຊື່ອມຕໍ່ກັບທີ່ຢູ່ອີເມລ. ທ່ານສາມາດສ້າງລາຍການເອກະສານຂອງທ່ານເອງໂດຍການຮວບຮວມຂໍ້ມູນທັງໝົດກ່ຽວກັບການຈົດທະບຽນສາກົນທີ່ເຊື່ອມໂຍງກັບທີ່ຢູ່ອີເມລດຽວ.

ການໃຊ້ MPM, ທ່ານສາມາດຍື່ນຄໍາຮ້ອງຂໍປ່ຽນແປງຂໍ້ມູນການຕໍ່ອາຍຸ ແລະ ການລະບຸຂໍເພີ່ມປະເທດ; ຕິດຕາມສະຖານະຂອງຄໍາຮ້ອງຂອງທ່ານ, ຊໍາລະຄ່າທໍານຽມ; ມອບຄວາມຮັບຜິດຊອບໃຫ້ຕົວແທນໃນການຄຸ້ມຄອງເອກະສານທັງໝົດ ຫຼື ບາງສ່ວນ; ກວດເບິ່ງ ແລະ ດາວໂຫຼດຂໍ້ມູນກ່ຽວກັບການຕິດຕໍ່ພົວພັນຈາກສໍານັກງານ ເຄື່ອງໝາຍການຄ້າ ແລະ ອົງການ WIPO ທີ່ກ່ຽວຂ້ອງກັບການຈົດທະບຽນຂອງທ່ານ ແລະ ສະເໜີຂໍ້ມູນຈາກລະບົບການຈົດທະບຽນສາກົນ.



## 6. ການປົກປ້ອງເຄື່ອງໝາຍການຄ້າຂອງທ່ານ ຢູ່ໃນສະຫະພາບ ເອີຣົບ



ໃນສະຫະພາບ ເອີຣົບ (EU) ມີລະບົບສໍາລັບການຈົດທະບຽນເຄື່ອງໝາຍການຄ້າ ສີ່ລະດັບ. ສິ່ງທີ່ທ່ານເລືອກ ຂຶ້ນກັບຄວາມຕ້ອງການຂອງທຸລະກິດຂອງທ່ານ.



ຫາກທ່ານຕ້ອງການປົກປ້ອງຢູ່ໃນປະເທດສະມາຊິກດຽວ ຂອງ EU, ທ່ານສາມາດຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ໂດຍກົງກັບສໍານັກງານຊັບສິນທາງປັນຍາທີ່ກ່ຽວຂ້ອງ. ນີ້ແມ່ນ **ເສັ້ນທາງການປົກປ້ອງພາຍໃນປະເທດ** ຢູ່ໃນ 24 ປະເທດ ສະມາຊິກ EU (ອ໊ອດສະເຕຣຍ, ບຸນກາເຣຍ, ໂຄຣເອເຊຍ, ໄຊປຣັດ, ສາທາລະນະລັດເຊັກ, ເດັນມາກ, ເອັດສະໂຕເນຍ, ຟິນແລນ, ຝຣັ່ງ, ເຢຍລະມັນ, ກຣີດສ໌, ຮັງກາຣີ, ໄອແລນ, ອີຕາລີ, ລັດເວຍ, ລີທົວເນຍ, ມອລຕາ, ໂປແລນ, ໂປຕຸຍການ, ໂຣມາເນຍ, ສະໂລວາເກຍ, ສະໂລວີເນຍ, ແອັດສະປາຍ, ແລະ ສະວີເດັນ).

ຫາກທ່ານຕ້ອງການການປົກປ້ອງຢູ່ໃນປະເທດ ເບວຢຽມ, ລັກເຊມເບີກ ແລະ ເນເທີແລນ, ທ່ານສາມາດຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ທີ່ສໍານັກງານຊັບສິນທາງປັນຍາເບັນນາລັກ (BOIP), ສໍານັກງານຊັບສິນທາງປັນຍາໃນລະດັບພາກພື້ນສໍາລັບການປົກປ້ອງເຄື່ອງໝາຍການຄ້າ ໃນສາມປະເທດສະມາຊິກເຫຼົ່ານັ້ນ. ນີ້ແມ່ນ**ເສັ້ນທາງການປົກປ້ອງໃນພາກພື້ນເບັນນາລັກ**.

ຫາກທ່ານຕ້ອງການປົກປ້ອງຢູ່ໃນຫຼາຍປະເທດສະມາຊິກຂອງ EU, ທ່ານສາມາດຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າສະຫະພາບເອີຣົບ (EUTM) ຈາກສໍານັກງານຊັບສິນທາງປັນຍາສະຫະພາບເອີຣົບ (EUIPO) - ນີ້ແມ່ນ**ເສັ້ນທາງການປົກປ້ອງໃນສະຫະພາບເອີຣົບ**. EUTM ແມ່ນໃຊ້ໄດ້ໃນອານາເຂດທັງໝົດ 27 ປະເທດ ສະມາຊິກຂອງ EU.

ເສັ້ນທາງທີສີ່ສໍາລັບການປົກປ້ອງເຄື່ອງໝາຍການຄ້າ ໃນ EU ແມ່ນ**ເສັ້ນທາງການປົກປ້ອງສາກົນ** ຫຼື ລະບົບມາດຣິດ, ຊຶ່ງສາມາດໃຊ້ຮ່ວມກັບເສັ້ນທາງໃດໜຶ່ງໃນສາມເສັ້ນທາງທີ່ກ່າວມານັ້ນ. ບຸກຄົນທີ່ຍື່ນຄໍາຮ້ອງສາກົນ ພາຍໃຕ້ລະບົບມາດຣິດ ສາມາດລະບຸຂໍການປົກປ້ອງ ຢູ່ໃນສະເພາະປະເທດສະມາຊິກຂອງ EU ປະເທດດຽວທີ່ເປັນພາຄີຂອງອານຸສັນຍາມາດຣິດ ຫຼື ລະບຸເອົາ ເບັນນາລັກ (ສໍາລັບການປົກປ້ອງ ປະເທດ ເບວຢຽມ, ລັກເຊມເບີກ ແລະ ເນເທີແລນ), ຫຼື ສາມາດລະບຸເອົາສະຫະພາບເອີຣົບ (ສໍາລັບການປົກປ້ອງ ໃນ 27 ປະເທດ ສະມາຊິກຂອງ EU ໂດຍຜ່ານການລະບຸພຽງຄັ້ງດຽວ).[4]

ໃນພາກນີ້ຈະວິເຄາະຜົນປະໂຫຍດຂອງການໄດ້ຮັບສິດຕໍ່ເຄື່ອງໝາຍການຄ້າ ທີ່ມີຜົນໃນທັງໝົດ 27 ປະເທດ ສະມາຊິກຂອງ EU ໂດຍການໃຊ້ເສັ້ນທາງເອີຣົບ (ຍື່ນຄໍາຮ້ອງໂດຍກົງກັບສໍານັກງານ EUIPO) ຫຼື ໃຊ້ເສັ້ນທາງສາກົນ (ຍື່ນຄໍາຮ້ອງຜ່ານລະບົບມາດຣິດໂດຍລະບຸເອົາEU).

### 6.1. ການຍື່ນຄໍາຮ້ອງໂດຍກົງທີ່ສໍານັກງານຊັບສິນທາງປັນຍາສະຫະພາບ ເອີຣົບ (EUIPO)

EUIPO
EUROPEAN UNION
INTELLECTUAL PROPERTY OFFICE

ການຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າສະຫະພາບເອີຣົບ (EUTM) ໂດຍກົງທີ່ສໍານັກງານ EUIPO ແທນທີ່ຈະຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າແຍກຕ່າງຫາກ ແລະ ໄດ້ຮັບສິດແຍກຕ່າງຫາກ ພາຍໃຕ້ລະບົບພາຍໃນແຕ່ລະປະເທດ + ເບັນນາລັກທີ່ມີຢູ່ໃນສະຫະພາບ ເອີຣົບ (EU) ເປັນເສັ້ນທາງທີ່ໜ້າສົນໃຈ ຫາກທ່ານຕ້ອງການໄດ້ຮັບສິດຕໍ່ເຄື່ອງໝາຍການຄ້າດຽວທີ່ມີຜົນຢູ່ໃນທັງໝົດ 27 ປະເທດ ສະມາຊິກ.

ທ່ານສາມາດຍື່ນຄໍາຮ້ອງຂໍຈົດທະບຽນແບບອອນລາຍທີ່ເວັບໄຊທ໌ຂອງສໍານັກງານ EUIPO ດັ່ງລຸ່ມນີ້: (https://euipo.europa.eu/ohimportal/en/apply-now). EUTM ໃຫ້ສິດແກ່ທ່ານແຕ່ພຽງຜູ້ດຽວ ທີ່ມີຜົນຢູ່ໃນທຸກປະເທດ ສະມາຊິກຂອງ EU (ໃນປັດຈຸບັນ ແລະ ອານາຄົດ) ດ້ວຍລາຄາທີ່ສົມເຫດສົມຜົນ (ຄ່າທໍານຽມເບື້ອງຕົ້ນ 850 ເອີໂຣ ໃນເດືອນມັງກອນ 2021, ສໍາລັບການຍື່ນຄໍາຮ້ອງຂໍຈົດທະບຽນ

*[4] ຫຼັງຈາກການຖອນຕົວອອກຈາກສະຫະພາບເອີຣົບຂອງອັງກິດ(Brexit), ແລະພາຍຫຼັງສິ້ນສຸດໄລຍະຂ້າມຜ່ານ(31ທັນວາ2020), ການຈົດທະບຽນສາກົນຜ່ານລະບົບມາດຣິດ(IR)ທີ່ມີຜົນບັງຄັບໃຊ້ໃນສະຫະພາບເອີຣົບນັ້ນ ແມ່ນບໍ່ມີຜົນບັງຄັບໃຊ້ໃນອັງກິດ. ອັງກິດໄດ້ ສືບຕໍ່ໃຫ້ການປົກປ້ອງເຄື່ອງໝາຍໃນ IR ໂດຍການບັນທຶກ ລົງໃນລະບົບການຈົດທະບຽນເຄື່ອງໝາຍການຄ້າຂອງອັງກິດເອງ ໂດຍປຽບທຽບກັບທຸກໆIRທີ່ໄດ້ຮັບການປົກປ້ອງໃນສະຫະພາບເອີຣົບກ່ອນວັນທີ1ມັງກອນ2021. ເຄື່ອງໝາຍການຄ້າອັງກິດທີ່ສ້າງຂື້ນໃໝ່ເຫຼົ່ານີ້ແມ່ນບໍ່ຂື້ນກັບIRແລະ ຖືກປົກປ້ອງພາຍໃຕ້ກົດໝາຍອັງກິດ. ເຈົ້າຂອງເຄື່ອງໝາຍ ທີ່ຄໍາຮ້ອງສາກົນ ຍັງຢູ່ຂັ້ນຕອນພິຈາລະນາຈອງສະຫະພາບເອີຣົບ ພາຍຫຼັງສິ້ນສຸດໄລຍະຂ້າມຜ່ານ ສາມາດຍື່ນຄໍາຮ້ອງການຈົດທະບຽນເຄື່ອງໝາຍການຄ້າຢູ່ສໍານັກງານຊັບສິນທາງປັນຍາອັງກິດພາຍໃນ9ເດືອນຫຼັງຈາກວັນທີ1ມັງກອນ2021, ແລະສາມາດຮັກສາວັນທີທີ່ຍື່ນຄໍາຮ້ອງລະບຸຂໍການປົກປ້ອງໃນສະຫະພາບເອີຣົບ. ສໍາລັບລາຍລະອຽດເພີ່ມເຕີມ, ກະລຸນາເບິ່ງຄໍາແນະນໍາຂອງລັດຖະບານອັງກິດ, ໄດ້ທີ່ເວັບໄຊດ໌: https://www.gov.uk/guidance/changes-to-international-trade-mark-registrations-after-the-transition-period*

ເຄື່ອງໝາຍການຄ້າສະຫະພາບເອີຣົບ ແບບອອນລາຍ ໜຶ່ງຄຳຮ້ອງທີ່ປະກອບມີໜຶ່ງໝວດ; ສຳລັບຂໍ້ມູນຫຼ້າສຸດກ່ຽວກັບຄ່າທຳນຽມ, ລວມທັງຄ່າທຳນຽມສຳລັບໝວດເພີ່ມ ແລະ ເຄື່ອງໝາຍລວມໝູ່ EU ຫຼື ເຄື່ອງໝາຍຮັບຮອງ, ກາລຸນາເບິ່ງຂໍ້ມູນໃນເວັບໄຊທ໌: (https://euipo.europa.eu/ohimportal/en/fees-payable-direct-to-euipo). EUTM ມີອາຍຸການປົກປ້ອງ 10 ປີ ແລະ ສາມາດຕໍ່ອາຍຸໄດ້ທຸກໆ 10 ປີ ຕະຫຼອດໄປ. ທ່ານຈະສາມາດບັງຄັບໃຊ້ສິດຕໍ່ເຄື່ອງໝາຍການຄ້າສະຫະພາບເອີຣົບຂອງທ່ານ ໃນຕະຫຼາດທີ່ມີຜູ້ຊົມໃຊ້ເກືອບ 450 ລ້ານຄົນ.

ໃນເວັບໄຊທ໌ຂອງ EUIPO (https://euipo.europa.eu/ohimportal/en/trade-marks), ທ່ານຈະໄດ້ຮັບລາຍລະອຽດກ່ຽວກັບວິທີຍື່ນຄຳຮ້ອງ EUTM, ວິທີຕິດຕາມຂັ້ນຕອນການຈົດທະບຽນ ແລະ ວິທີຈັດການກັບ EUTM ຂອງທ່ານ ເມື່ອໄດ້ຮັບຈົດທະບຽນແລ້ວ.

## 6.2. ການລະບຸ ສະຫະພາບ ເອີຣົບ (EU) ຜ່ານລະບົບມາດຣິດ (ເສັ້ນທາງສາກົນ) ການປະຕິບັດທີ່ໄດ້ຮັບຜົນດີ

ຜົນປະໂຫຍດທີ່ທ່ານຈະໄດ້ຮັບຈາກເສັ້ນທາງສາກົນ ກໍຄ້າຍຄືກັບເສັ້ນທາງເອີຣົບ ລວມທັງຜົນປະໂຫຍດເພີ່ມເຕີມທີ່ເປັນເອກະລັກຂອງລະບົບມາດຣິດ. ນັບແຕ່ປີ 2004 ເປັນຕົ້ນມາ ເມື່ອສະຫະພາບເອີຣົບໄດ້ເຂົ້າເປັນພາຄີຂອງອານຸສັນຍາມາດຣິດ, ຜູ້ໃຊ້ລະບົບມາດຣິດ ຈະໄດ້ຮັບສິດໃນເຄື່ອງໝາຍການຄ້າທີ່ມີຜົນຄືກັບເຄື່ອງໝາຍການຄ້າເອີຣົບ (ມີຜົນຢູ່ໃນທຸກປະເທດ ສະມາ ຊິກຂອງ EU) ໂດຍການລະບຸເອົາສະຫະພາບເອີຣົບພາຍໃຕ້ຂັ້ນຕອນສາກົນ (ທັງຄຳຮ້ອງສາກົນ ຫຼື ຄຳຮ້ອງສຳລັບການລະບຸຂໍເພີ່ມປະເທດ).

ຄຳຮ້ອງສາກົນ ທີ່ລະບຸເອົາສະຫະພາບເອີຣົບ ແລະ ຖືກຍອມຮັບໂດຍສຳນັກງານ EUIPO ຈະມີຜົນຄືກັນກັບ ເຄື່ອງໝາຍການຄ້າເອີຣົບທີ່ໄດ້ຮັບການຈົດທະບຽນໂດຍສຳນັກງານ EUIPO. ສ່ວນນີ້ອະທິບາຍເຖິງການປະຕິບັດທີ່ໄດ້ຮັບຜົນດີ ທີ່ຄວນປະຕິບັດເພື່ອໃຫ້ຮັບ ແລະ ຄຸ້ມຄອງການຈົດທະບຽນສາກົນ ທີ່ມີຜົນຢູ່ໃນສະຫະພາບເອີຣົບ.

### 6.2.1. ການລະບຸ ສະຫະພາບເອີຣົບ (EU) ເງື່ອນໄຂສະເພາະ

ທ່ານສາມາດລະບຸເອົາສະຫະພາບເອີຣົບ ສຳລັບການປົກປ້ອງດັ່ງນີ້:

(i) ເມື່ອຍື່ນຄຳຮ້ອງສາກົນ ທີ່ກົມຊັບສິນທາງປັນຍາ ໂດຍການເລືອເອົາສະຫະພາບເອີຣົບ (ລະຫັດປະເທດ EM) ຢູ່ໃນຄຳຮ້ອງຂໍຈົດທະບຽນ (ແບບພິມ MM2); ຫຼື

(ii) ເມື່ອທ່ານໄດ້ຮັບການຈົດທະບຽນສາກົນແລ້ວ, ທ່ານຍັງສາມາດລະບຸຂໍເພີ່ມປະເທດ ໂດຍໃຊ້ແບບພິມ (MM4) ເລືອກເອົາສະຫະພາບເອີຣົບ (ລະຫັດປະເທດ EM) ແລ້ວຍື່ນໄປຍັງອົງການ WIPO ອາດຍື່ນທາງໄປສະນີ ຫຼື ຜ່ານທາງອອນລາຍກໍໄດ້ (https://www3.wipo.int/osd/).

ນອກຈາກເງື່ອນໄຂທົ່ວໄປສຳລັບຄຳຮ້ອງສາກົນ ແລະ ການລະບຸຂໍເພີ່ມປະເທດ, ເມື່ອທ່ານລະບຸເອົາສະຫະພາບ ເອີຣົບ ທ່ານຄວນພິຈາລະນາ ດັ່ງນີ້.

(a) ພາສາທີ່ນຳໃຊ້ດຳເນີນການກັບສຳນັກງານ EUIPO ຈະແມ່ນພາສາທີ່ໃຊ້ໃນຄຳຮ້ອງສາກົນຂອງທ່ານ (ພາສາອັງກິດ). ແຕ່ເຖິງຢ່າງໃດກໍຕາມ, ເມື່ອເລືອກເອົາສະຫະພາບ ເອີຣົບ ທ່ານຕ້ອງລະບຸພາສາທີ່ສອງຂອງສຳນັກງານ EUIPO ເຊັ່ນ: (ພາສາຝຣັ່ງ, ພາສາເຢຍລະມັນ, ພາສາອິຕາລີ ຫຼື ສະເປນ), ການນຳໃຊ້ທີ່ທ່ານຍອມຮັບວ່າເປັນພາສາທີ່ເປັນໄປໄດ້ສຳລັບການດຳເນີນການຄັດຄ້ານ, ການລົບລ້າງ ຫຼື ການເປັນໂມຄະ.

(b) ນອກຈາກນີ້, ຖ້າຫາກທີ່ຕ້ອງການຮຽກຮ້ອງເອົາບູລິມະສິດ[5] ຂອງເຄື່ອງໝາຍທີ່ໄດ້ຮັບການຈົດທະບຽນແລ້ວຢູ່ໃນ ຫຼື ສຳລັບສະມາຊິກສະຫະພາບເອີຣົບ, ຊຶ່ງທ່ານສາມາດຮຽກຮ້ອງໃນເວລາຍື່ນຄຳຮ້ອງສາກົນ ຫຼື ການລະບຸຂໍເພີ່ມປະເທດ ໂດຍການຄັດຕິດແບບພິມທາງການ MM17 (ທ່ານອາດຮຽກຮ້ອງເອົາບູລິມະສິດໂດຍກົງດ້ວຍການຍື່ນຄຳຮ້ອງກັບສຳນັກງານ EUIPO ພາຍຫຼັງ).

ຄ່າທຳນຽມເບື້ອງຕົ້ນສຳລັບການລະບຸເອົາ EU ສຳລັບໜຶ່ງໝວດຂອງລາຍການສິນຄ້າ ຫຼື ການບໍລິການ ທີ່ໄດ້ກຳນົດໂດຍ EUIPO ແມ່ນ 897 ສະວິດຟຣັ່ງ (ສະຖານະໃນເດືອນມັງກອນ 2021). ສຳລັບຂໍ້ມູນຫຼ້າສຸດກ່ຽວກັບຄ່າທຳນຽມສະເພາະປະເທດ ທີ່ກຳນົດໂດຍ EUIPO ສຳລັບການລະບຸຂໍການປົກປ້ອງ ແລະ ການຕໍ່ອາຍຸ ກ່ຽວກັບເຄື່ອງໝາຍສ່ວນບຸກຄົນ ແລະ ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງພາຍໃຕ້ລະບົບມາດຣິດ, ກາລຸນາເຂົ້າເບິ່ງໄດ້ທີ່: http://www.wipo.int/madrid/en/fees/ind_taxes.html.

---

*[5] ການຮຽກຮ້ອງເອົາບູລິມະສິດ ເປັນລະບົບໜຶ່ງ ຊຶ່ງເຈົ້າຂອງຄຳຮ້ອງ/ການຈົດທະບຽນເຄື່ອງໝາຍການຄ້າເອີຣົບ ຫຼື ການລະບຸຂໍການປົກປ້ອງໃນ EU ສາມາດຮຽກຮ້ອງເອົາບູລິມະສິດຂອງການຈົດທະບຽນຢູ່ພາຍໃນປະເທດ ໃນສະຫະພາບເອີຣົບ (ຫຼື ການລະບຸຂໍການປົກປ້ອງຢູ່ພາຍໃນປະເທດ ຫຼື ການຈົດທະບຽນສາກົນ), ເຖິງວ່າ ການຈົດທະບຽນຢູ່ພາຍໃນປະເທດໄດ້ສິ້ນສຸດຜົນແລ້ວກໍຕາມ.*


MM2 (E), page 9

**11. DESIGNATIONS[14]**

Check the corresponding boxes:

☐ AF Afghanistan
☐ AG Antigua and Barbuda
☐ AL Albania
☐ AM Armenia
☐ AT Austria
☐ AU Australia
☐ AZ Azerbaijan
☐ BA Bosnia and Herzegovina
☐ BG Bulgaria
☐ BH Bahrain
☐ BN Brunei Darussalam[b]
☐ DZ Algeria
☐ EE Estonia
☐ EG Egypt
☑ EM European Union[a]
☐ ES Spain
☐ FI Finland
☐ FR France
☐ GB United Kingdom[b,j]
☐ GE Georgia
☐ GG Guernsey[b,k]
☐ GH Ghana
☐ GM Gambia
☐ KZ Kazakhstan
☐ LA Lao People's Democratic Republic
☐ LI Liechtenstein
☐ LR Liberia
☐ LS Lesotho[b]
☐ LT Lithuania
☐ LV Latvia
☐ MA Morocco
☐ MC Monaco
☐ MD Republic of Moldova
☐ ME Montenegro
☐ RO Romania
☐ RS Serbia
☐ RU Russian Federation
☐ RW Rwanda
☐ SD Sudan
☐ SE Sweden
☐ SG Singapore[b]
☐ SI Slovenia
☐ SK Slovakia
☐ SL Sierra Leone
☐ SM San Marino
☐ ST Sao Tome and Principe

### 6.2.2. ການແຕ່ງຕັ້ງຜູ້ຕາງໜ້າເພື່ອຕິດຕໍ່ພົວພັນກັບສໍານັກງານ EUIPO

ຕາມຫຼັກການແລ້ວ, ທ່ານບໍ່ຈໍາເປັນຕ້ອງແຕ່ງຕັ້ງຜູ້ຕາງໜ້າກ່ອນສໍານັກງານ EUIPO. ແຕ່ເຖິງຢ່າງໃດກໍຕາມ, ຖ້າຫາກທ່ານອາໄສຢູ່ນອກເຂດເສດຖະກິດເອີຣົບ, ທ່ານຕ້ອງໄດ້ແຕ່ງຕັ້ງຜູ້ຕາງໜ້າ (a) ຖ້າຫາກ EUIPO ແຈ້ງປະຕິເສດໃນເບື້ອງຕົ້ນຂອງການຈົດທະບຽນສາກົນຂອງທ່ານ; (b) ສໍາລັບການຍື່ນຄໍາຮ້ອງຂໍຮັບເອົາບູລິມະສິດ ໂດຍກົງກ່ອນ EUIPO; ຫຼື (c) ກໍລະນີ EUIPO ມີການຄັດຄ້ານກ່ຽວກັບການຮຽກຮ້ອງເອົາບູລິມະສິດ. ໃນກໍລະນີເຊັ່ນນີ້, ຜູ້ຕາງໜ້າຂອງທ່ານຄວນມີຢູ່ໃນຖານຂໍ້ມູນຂອງຜູ້ຕາງໜ້າທີ່ຄຸ້ມຄອງໂດຍ EUIPO (https://euipo.europa.eu/eSearch/#advanced/representatives).



### 6.2.3. ການພິມເຜີຍແຜ່ຄັ້ງທຳອິດ, ການກວດຄົ້ນຂໍ້ມູນ ແລະ ການກວດສອບເບື້ອງຕົ້ນ

ເມື່ອໄດ້ຮັບແຈ້ງການຈາກອົງການ WIPO ກ່ຽວກັບການລະບຸເອົາ EU ໃນການຈົດທະບຽນສາກົນ, EUIPO ຈະພິມເຜີຍແຜ່ການຈົດທະບຽນສາກົນທັນທີ ຢູ່ໃນຈົດໝາຍເຫດ EUTM (ພາກ M.1). (https://euipo.europa.eu/eSearch/#advanced/bulletins). ການພິມເຜີຍແຜ່ແມ່ນຈຳກັດສະເພາະຂໍ້ມູນບັນນານຸກົມ, ການສຳເນົາເຄື່ອງໝາຍ, ໝາຍເລກໝວດ (ບໍ່ແມ່ນ ລາຍການສິນຄ້າ ແລະ ການບໍລິການຕົວຈິງ). ການຈົດທະບຽນສາກົນ ມີຜົນຄືກັນກັບຄຳຮ້ອງຂໍຈົດທະບຽນ EUTM ທີ່ໄດ້ພິມເຜີຍແຜ່ ຈາກວັນທີຂອງການພິມເຜີຍແຜ່ຄັ້ງທຳອິດ.




ຫາກທ່ານຕ້ອງການໄດ້ຮັບແຈ້ງການຈາກອົງການ WIPO ພາຍໃນໜຶ່ງເດືອນ, ທ່ານອາດຂໍໃຫ້ EUIPO ເຮັດລາຍງານການຄົ້ນຫາຂໍ້ມູນຂອງສະຫະພາບເອີຣົບ ທີ່ຈະອ້າງອີງເຖິງເຄື່ອງໝາຍການຄ້າເອີຣົບທີ່ຄ້າຍຄືກັນ ແລະ ການຈົດທະບຽນສາກົນທີ່ລະບຸເອົາ EU. ທ່ານອາດຈະຮ້ອງຂໍໃຫ້ EUIPO ເພື່ອສົ່ງຂໍ້ມູນກ່ຽວກັບການຈົດທະບຽນສາກົນ ເຖິງສຳນັກງານພາຍໃນປະເທດຂອງສະມາຊິກ EU ເພື່ອດຳເນີນການກວດຄົ້ນຂໍ້ມູນຢູ່ພາຍໃນປະເທດ (ທ່ານຕ້ອງຈ່າຍຄ່າທຳນຽມທີ່ກ່ຽວຂ້ອງ).

EUIPO ດຳເນີນການກວດສອບເບື້ອງຕົ້ນກ່ຽວກັບການຈົດທະບຽນສາກົນ ແມ່ນຈຳກັດສະເພາະ (a) ໄດ້ລະບຸພາສາທີສອງ ຫຼື ບໍ; (b) ຄຳຮ້ອງຂໍຈົດທະບຽນ ສຳລັບເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ; (c) ມີການຮຽກຮ້ອງຂໍຮັບເອົາບູລິມະສິດບໍ; (d) ລາຍການສິນຄ້າ ແລະ/ຫຼື ການບໍລິການ ທີ່ມີການລະບຸເອົາ EU ນັ້ນ ຢູ່ໃນຂອບເຂດຂອງລາຍການຫຼັກຂອງການຈົດທະບຽນສາກົນ ຫຼືບໍ; (e) ຄຳສັບທີ່ໃຊ້ລະບຸລາຍການສິນຄ້າ ແລະ/ຫຼື ການບໍລິການ ຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂກ່ຽວກັບຄວາມຊັດເຈນ ແລະ ຄວາມຖືກຕ້ອງ. ດັ່ງທີ່ໄດ້ອະທິບາຍຢູ່ໃນຄູ່ມືຂອງ EUIPO ກ່ຽວກັບເຄື່ອງໝາຍການຄ້າ, ພາກ B, ໝວດ 3 (https://euipo.europa.eu/ohimportal/en/trade-mark-guidelines).



ຫາກທ່ານບໍ່ໄດ້ກຳນົດພາສາທີສອງຂອງ EUIPO ໃຫ້ເປັນພາສາທີ່ມີຄວາມເປັນໄປໄດ້ໃນດຳເນີນການຄັດຄ້ານ, ການລຶບລ້າງ ຫຼື ການເປັນໂມຄະ ກ່ອນ EUIPO, EUIPO ຈະອອກໜັງສືແຈ້ງປະຕິເສດເບື້ອງຕົ້ນ ແລະ ໃຫ້ເວລາສອງເດືອນໃນການແກ້ໄຂຂໍ້ມູນທີ່ບໍ່ຄົບຖ້ວນ.

ຖ້າຫາກການຈົດທະບຽນສາກົນຂອງທ່ານ ລະບຸເອົາ EU ເປັນເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງ ໂດຍອີງຕາມປະເພດເຄື່ອງໝາຍ ຢູ່ໃນ ສປປ ລາວ, ຈະມີການຈັດການກັບເຄື່ອງໝາຍລວມໝູ່ຂອງ EU ຫຼື ເຄື່ອງໝາຍຮັບຮອງຂອງ EU, ຕາມແຕ່ລະກໍລະນີ. ໃນກໍລະນີເຊັ່ນນີ້: ທ່ານຕ້ອງໄດ້ຍື່ນລະບຽບການໃນການຄຸ້ມຄອງການນຳໃຊ້ເຄື່ອງໝາຍໄປຍັງ EUIPO ພາຍໃນສອງເດືອນ ນັບຈາກວັນທີອີງການ WIPO ແຈ້ງໃຫ້ EUIPO ກ່ຽວກັບການລະບຸຂໍການປົກປ້ອງ.

ຫາກທ່ານໄດ້ຮຽກຮ້ອງເອົາບູລິມະສິດຂອງເຄື່ອງໝາຍທີ່ໄດ້ຈົດທະບຽນແລ້ວ ໃນປະເທດສະມາຊິກຂອງ EU (ດ້ວຍແບບພິມ MM17), EUIPO ຈະກວດເບິ່ງວ່າ ທ່ານໄດ້ລະບຸຊື່ຂອງປະເທດສະມາຊິກຂອງ EU ທີ່ໄດ້ປົກປ້ອງສິດໃນເບື້ອງຕົ້ນ, ເລກທີທະບຽນ ແລະ ວັນທີຍື່ນຄຳຮ້ອງຂອງການຈົດທະບຽນທີ່ກ່ຽວຂ້ອງ.

ຫາກທ່ານໄດ້ແນະນຳການຈຳກັດສິດໃນລາຍການສິນຄ້າ ແລະ ການບໍລິການຂອງການຈົດທະບຽນສາກົນ ໃນການລະບຸເອົາສະຫະພາບເອີຣົບ EUIPO ຈະກວດເບິ່ງວ່າ ລາຍການສິນຄ້າ ແລະ ການບໍລິການ ທີ່ຢູ່ໃນລາຍການທີ່ຈຳກັດສິດສຳລັບ EU ນັ້ນ ຢູ່ໃນຂອບເຂດຂອງລາຍການຫຼັກຂອງການຈົດທະບຽນສາກົນຫຼືບໍ, ຖ້າບໍ່ໄດ້ຢູ່ໃນຂອບເຂດດັ່ງກ່າວ ກໍຈະຖືກປະຕິເສດເບື້ອງຕົ້ນ.

ຫາກການຈົດທະບຽນສາກົນຂອງທ່ານ ປະກອບດ້ວຍຄຳສັບສຳລັບລາຍການສິນຄ້າ ຫຼື ການບໍລິການທີ່ບໍ່ມີ ຄວາມຊັດເຈນ ຫຼື ຄວາມຖືກຕ້ອງ. EUIPO ຈະອອກໜັງສືແຈ້ງການປະຕິເສດເບື້ອງຕົ້ນ ແລະ ໃຫ້ເວລາສອງເດືອນ ເພື່ອແກ້ໄຂຂໍ້ມູນທີ່ບໍ່ຖືກຕ້ອງນັ້ນ. ເພື່ອຫຼີກລ່ຽງການນຳໃຊ້ຄຳສັບໃນລາຍການຂອງທ່ານທີ່ຈະບໍ່ຖືກຍອມຮັບໂດຍ EUIPO, ຂໍແນະນຳໃຫ້ທ່ານຄົ້ນຫາເນື້ອໃນຂອງຄຳສັບໃນຖານຂໍ້ມູນທີ່ມີການເຊື່ອມໂຍງກັນຂອງ EU (HDB) ກ່ອນການຍື່ນຄຳຮ້ອງຂໍຈົດທະບຽນສາກົນທີ່ລະບຸເອົາ EU, ຊຶ່ງສາມາດດຳເນີນດ້ວຍລະບົບອອນລາຍ ແລະ ບໍ່ເສຍຄ່າ ຕາມເວັບໄຊທ໌ລຸ່ມນີ້: http://tmclass.tmdn.org/ec2/. ຖານຂໍ້ມູນ HDB ປະກອບດ້ວຍຄຳສັບລາຍການສິນຄ້າ ແລະ ການບໍລິການທີ່ຖືກຍອມຮັບໂດຍສຳນັກງານ ເຄື່ອງໝາຍການຄ້າທັງໝົດ ຢູ່ໃນ EU. ຄຳສັບທັງໝົດທີ່ຢູ່ໃນຖານຂໍ້ມູນ HDB ຈະຖືກຍອມຮັບຈາກ EUIPO ໂດຍອັດຕະໂນມັດ. ອັນນີ້ຈະຊ່ວຍໃຫ້ຂະບວນການຈົດທະບຽນຂອງທ່ານໄດ້ຮັບຄວາມສະດວກຫຼາຍຂຶ້ນ.



### 6.2.4. ການກວດສອບຕາມຫຼັກການປະຕິເສດບົນພື້ນຖານຂອງກົດໝາຍ

ການຈົດທະບຽນສາກົນ ທີ່ລະບຸ EU ແມ່ນຈະໄດ້ຮັບການກວດສອບຕາມຫຼັກການປະຕິເສດບົນພື້ນຖານຂອງກົດໝາຍສໍາລັບການປະຕິເສດ ດ້ວຍວິທີທີ່ຄືກັນກັບຄໍາຮ້ອງຂໍຈົດທະບຽນໂດຍກົງຂອງເຄື່ອງໝາຍການຄ້າເອີຣົບ.

ເຄື່ອງໝາຍຂອງທ່ານຈະບໍ່ໄດ້ຮັບສິດໃນການປົກປ້ອງ ຖ້າຫາກເຄື່ອງໝາຍປະກອບດ້ວຍສັນຍາລັກດັ່ງນີ້: (a) ບໍ່ສອດຄ່ອງຕາມນິຍາມຂອງເຄື່ອງໝາຍການຄ້າເອີຣົບ (ສາມາດຈໍາແນກຄວາມແຕກຕ່າງລາຍການສິນຄ້າ ຫຼື ການບໍລິການຂອງກິດຈະການໜຶ່ງຈາກກິດຈະການອື່ນ ແລະ ເປັນຕົວແທນໃນລັກສະນະທີ່ຊ່ວຍໃນການກໍານົດຄວາມຊັດເຈນ ແລະ ຖືກຕ້ອງຂອງການປົກປ້ອງ); (b) ບໍ່ມີຄວາມໂດດເດັ່ນ; (c) ເປັນຄໍາອະທິບາຍ; (d) ປະກອບດ້ວຍຄໍາສັບ ຫຼື ການລະບຸທີ່ກາຍເປັນທໍານຽມໃນພາສາທີ່ໃຊ້ໃນປັດຈຸບັນ ຫຼື ເປັນຄໍາຮັບຮອງ ແລະ ການປະຕິບັດທີ່ເປັນທີ່ຍອມຮັບໃນທຸລະກິດໃນເວລາໃດໜຶ່ງທີ່ກ່ຽວຂ້ອງ; (e) ປະກອບດ້ວຍຮູບຮ່າງ ຫຼື ລັກສະນະສະເພາະອື່ນໆ ທີ່ເປັນຜົນມາຈາກລັກສະນະເຕັກນິກຂອງສິນຄ້າ ຫຼື ມູນຄ່າທີ່ສໍາຄັນ; (f) ຂັດກັບນະໂຍບາຍ ຫຼື ຫຼັກການທາງດ້ານສິນລະທໍາ; (g) ມີລັກສະນະເປັນການຫຼອກລວງຕໍ່ສາທາລະນະ ເຊັ່ນ: ລັກສະນະຄຸນນະພາບ ຫຼື ຖິ່ນກໍາເນີດຂອງສິນຄ້າ ຫຼື ການບໍລິການ; (h) ຂັດກັບກາໝາຍປະຈໍາຕະກຸນ, ທຸງຊາດ, ກາໝາຍແຫ່ງຊາດ ແລະ ສັນຍາລັກຂອງລັດ ແລະ ອົງການຈັດຕັ້ງລະຫວ່າງລັດຖະບານ ທີ່ໄດ້ຮັບການປົກປ້ອງພາຍໃຕ້ ມາດຕາ 6ter ຂອງສົນທິສັນຍາປາຣີ; (i) ຂັດກັບເຄື່ອງໝາຍ ແລະ ກາສັນຍາລັກອື່ນໆທີ່ເປັນຜົນປະໂຫຍດຂອງສາທາລະນະ; (j) ຂັດກັບຊື່ຂອງແຫຼ່ງກໍາເນີດ ແລະ ຖິ່ນກໍາເນີດທີ່ໄດ້ຮັບການປົກປ້ອງໃນປະເທດ (ສະມາຊິກສະຫະພາບເອີຣົບ) ຫຼື ກົດໝາຍຂອງ EU ຫຼື ສົນທິສັນຍາສາກົນ ທີ່ EU ຫຼື ສະມາຊິກ ໄດ້ເຂົ້າເປັນພາຄີ; (k) ຂັດກັບຂໍ້ກໍານົດດັ້ງເດີມສໍາລັບເຫຼົ້າແວ່ງທີ່ໄດ້ຮັບການປົກປ້ອງໂດຍ ກົດໝາຍຂອງ EU ຫຼື ສົນທິສັນຍາສາກົນທີ່ EU ໄດ້ເຂົ້າເປັນພາຄີ; (l) ຂັດກັບເງື່ອນໄຂການຮັບປະກັນແບບພິເສດດັ້ງເດີມທີ່ຖືກປົກປ້ອງໂດຍກົດໝາຍຂອງ EU ຫຼື ສົນທິສັນຍາສາກົນ ທີ່ EU ໄດ້ເຂົ້າເປັນພາຄີ; (m) ຂັດກັບພັນພືດທີ່ໄດ້ຮັບການປົກປ້ອງມາກ່ອນໃນ EU ກ່ຽວກັບພັນພືດສາຍພັນດຽວກັນ ຫຼື ໃກ້ຄຽງ.

ຖ້າຫາກ EUIPO ພົບວ່າ ເຄື່ອງໝາຍຂອງທ່ານບໍ່ສາມາດໄດ້ຮັບສິດໃນການປົກປ້ອງ, EUIPO ຈະອອກໜັງສືແຈ້ງປະຕິເສດເບື້ອງຕົ້ນ ແລະ ໃຫ້ເວລາສອງເດືອນ ສໍາລັບການສັງເກດການ ຫຼື ຍື່ນຄໍາຮ້ອງຂໍຄັດຄ້ານ. ຄໍາຕອບຂອງທ່ານຕ້ອງຖືກສົ່ງໂດຍກົງໄປຍັງ EUIPO, ຫຼັງຈາກການກວດສອບຄືນໃໝ່ແລ້ວ, ນັກກວດສອບອາດຈະຕັດສິນໃຈຢືນຢັນການປະຕິເສດ ຫຼື ຍົກເວັ້ນການຄັດຄ້ານ.

ຖ້າຫາກ EUIPO ພົບວ່າ ເຄື່ອງໝາຍຂອງທ່ານສາມາດໄດ້ຮັບສິດໃນການປົກປ້ອງ ແລະ ບໍ່ມີການປະຕິເສດເບື້ອງຕົ້ນ, EUIPO ຈະສົ່ງລາຍງານກ່ຽວກັບສະຖານະຂອງເຄື່ອງໝາຍ ເຖິງອົງການ WIPO ແລະ ລະບຸວ່າ ການກວດສອບໂດຍໜ້າທີ່ຂອງນັກກວດສອບໄດ້ສໍາເລັດແລ້ວ ແຕ່ການຈົດທະບຽນສາກົນ ແມ່ນຍັງເປີດໃຫ້ມີການຄັດຄ້ານ ຫຼື ການສັງເກດການຂອງບຸກຄົນທີ່ສາມ.



### 6.2.5. ການຄັດຄ້ານການຈົດທະບຽນ

ບຸກຄົນທີ່ອ້າງສິດວ່າຕົນໄດ້ຮັບສິດກ່ອນ ທີ່ຂັດກັບເຄື່ອງໝາຍຂອງທ່ານ ອາດຈະຍື່ນຄໍາຮ້ອງຂໍຄັດຄ້ານການຈົດທະບຽນສາກົນຂອງທ່ານໄດ້ ໃນລະຫວ່າງ ເດືອນທໍາອິດຫາເດືອນທີສີ່ ຕາມວັນທີຂອງການພິມເຜີຍແຜ່ຄັ້ງທໍາອິດ.

ຖ້າຫາກມີຄົນຄັດຄ້ານການຈົດທະບຽນສາກົນຂອງທ່ານ ພາຍໃນໄລຍະເວລາດັ່ງກ່າວ, EUIPO ຈະສົ່ງໜັງສືແຈ້ງການໃຫ້ອົງການ WIPO ກ່ຽວກັບການປະຕິເສດເບື້ອງຕົ້ນ (ອີງຕາມການແຈ້ງປະຕິເສດບົນພື້ນຖານຄວາມຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍທີ່ໄດ້ຈົດທະບຽນແລ້ວ) ແລະ ຈະສົ່ງສະບັບສໍາເນົາຂອງໜັງສືແຈ້ງການຄັດຄ້ານດັ່ງກ່າວໃຫ້ທ່ານ.

ນອກຈາກນີ້ ຍັງຈະໄດ້ແຈ້ງໃຫ້ທ່ານຊາບກ່ຽວກັບກໍານົດເວລາສໍາລັບການເລີ່ມຕົ້ນການດໍາເນີນການຕາມກົດໝາຍ. ໃນການຕິດຕໍ່ພົວພັນທັງໝົດກັບ EUIPO ແລະ ອົງການ WIPO ແມ່ນຈະໃຊ້ພາສາສໍາລັບການຈົດທະບຽນສາກົນ (ພາສາອັງກິດໃນກໍລະນີຂອງທ່ານ). ໃນການຕິດຕໍ່ພົວພັນທັງໝົດທີ່ EUIPO ສົ່ງໂດຍກົງເຖິງທ່ານ ແມ່ນຈະໃຊ້ພາສາສໍາລັບການດໍາເນີນການຄັດຄ້ານ ທີ່ຜູ້ຂໍຄັດຄ້ານເລືອກ (ຊຶ່ງອາດເປັນພາສາອັງກິດ ຫຼື ພາສາທີ່ສອງ ທີ່ເລືອກໂດຍທ່ານເອງເມື່ອລະບຸຂໍການປົກປ້ອງໃນ EU).

ການປະຕິເສດເບື້ອງຕົ້ນ ອາດປະຕິເສດບາງສ່ວນ ຫຼື ທັງໝົດ ຊຶ່ງຈະລວມທັງການອຸທອນເພື່ອຮຽກຮ້ອງສິດທີ່ມີມາກ່ອນແລ້ວ, ລາຍການສິນຄ້າ ແລະ ການບໍລິການທີ່ກ່ຽວຂ້ອງກັບການຄັດຄ້ານ ແລະ ໃນກໍລະນີຂອງການປະຕິເສດບາງສ່ວນ, ລາຍການສິນຄ້າ ແລະ ການບໍລິການທີ່ຂໍຄັດຄ້ານ ແມ່ນຂຶ້ນກັບຜູ້ຂໍຄັດຄ້ານກໍານົດ. ສໍາລັບພາສາຂອງລາຍການສິນຄ້າ ແລະ ການບໍລິການ ແມ່ນຈະໃຊ້ພາສາສໍາລັບການດໍາເນີນການຄັດຄ້ານ.

### 6.2.6. ການຕັດສິນຂັ້ນສຸດທ້າຍ

ເມື່ອຂັ້ນຕອນທັງໝົດສໍາເລັດແລ້ວ ແລະ ການຕັດສິນທັງໝົດຂອງ EUIPO ຢູ່ໃນຂັ້ນສຸດທ້າຍແລ້ວ, EUIPO ຕ້ອງຢືນຢັນການປະຕິເສດເບື້ອງຕົ້ນ ເຖິງອົງການ WIPO ຫຼື ສົ່ງໜັງແຈ້ງໃຫ້ການປົກປ້ອງ ເຖິງອົງການ WIPO ໂດຍລະບຸວ່າ ລາຍການສິນຄ້າ ແລະ ການບໍລິການໃດຂອງເຄື່ອງໝາຍ ຂອງທ່ານຖືກຍອມຮັບ.

### 6.2.7. ການພິມເຜີຍແຜ່ການຈົດທະບຽນສາກົນຄັ້ງທີສອງ ແລະ ການປົກປ້ອງຢູ່ໃນ ສະຫະພາບ ເອີຣົບ (EU)

ຖ້າຫາກ EUIPO ຕັດສິນໃຈວ່າ ເຄື່ອງໝາຍຂອງທ່ານ ໄດ້ຮັບການປົກປ້ອງ (ຢ່າງໜ້ອຍບາງສ່ວນ) ໃນ EU, EUIPO ຈະພິມເຜີຍແຜ່ການ ຈົດທະບຽນສາກົນຂອງທ່ານ ເປັນຄັ້ງທີສອງ ໃນຈົດໝາຍເຫດ EUTM Bulletin (ຄັ້ງນີ້ແມ່ນຢູ່ໃນພາກ M.3). EUIPO ຈະບໍ່ອອກໃບຢັ້ງຢືນ ການຈົດທະບຽນໃດໆອີກ.

ນັບຈາກວັນທີຂອງການພິມເຜີຍແຜ່ເປັນຄັ້ງທີສອງນີ້, ການຈົດທະບຽນສາກົນ ມີຜົນເຊັ່ນດຽວກັບ EUTM ທີ່ໄດ້ຈົດທະບຽນແລ້ວ ແລະ ອາດຈະຖືກຮຽກຮ້ອງຕໍ່ຜູ້ລະເມີດສິດ. ວັນທີຂອງການພິມເຜີຍແຜ່ຄັ້ງທີສອງນີ້ ຈະກາຍເປັນຈຸດເລີ່ມຕົ້ນສໍາລັບໄລຍະເວລາຂອງການນໍາໃຊ້ ຫ້າປີ. ຫາກເຄື່ອງໝາຍຂອງທ່ານບໍ່ໄດ້ຖືກນໍາໄປໃຊ້ຢ່າງແທ້ຈິງ ຢູ່ໃນສະຫະພາບເອີຣົບ ໃນໄລຍະເວລາດັ່ງກ່າວ, ຜົນຂອງການຈົດທະບຽນສາກົນຂອງທ່ານ ຢູ່ໃນ EU ຈະຖືກປະກາດວ່າເປັນໂມຄະ.

### 6.2.8. ການປ່ຽນສະຖານະພາບເປັນການຈົດທະບຽນເຄື່ອງໝາຍການຄ້າຂອງ ສະຫະພາບ ເອີຣົບ (EUTM)

ຖ້າຫາກການຈົດທະບຽນສາກົນຂອງທ່ານ ຖືກຍົກເລີກທັງໝົດ ຫຼື ບາງສ່ວນ ເນື່ອງຈາກວ່າ ເຄື່ອງໝາຍເບື້ອງຕົ້ນຂອງທ່ານ ຢູ່ໃນ ສປປ ລາວ ໄດ້ສິ້ນ ສຸດຜົນພາຍໃນເວລາຫ້າປີຂອງໄລຍະເພິ່ງພາ ແລະ ການລະບຸຂໍການປົກປ້ອງໃນ EU ແມ່ນຍັງມີຜົນ, ທ່ານອາດຈະຍື່ນຄໍາຮ້ອງຂໍຈົດທະບຽນເຄື່ອງ ໝາຍການຄ້າຂອງ EU ໂດຍກົງກັບ EUIPO ສໍາລັບເຄື່ອງໝາຍ ແລະ ລາຍການສິນຄ້າ ແລະ ການບໍລິການ ດຽວກັນກັບ ເຄື່ອງໝາຍທີ່ຖືກຍົກເລີກ. ຕາມບົດບັນຍັດຂອງອານຸສັນຍາມາດຣິດ ກ່ຽວກັບ 'ການປ່ຽນແປງສະຖານະ', ຄໍາຮ້ອງຂໍຈົດທະບຽນນີ້ ຈະໄດ້ຮັບການປະຕິບັດໂດຍ EUIPO ຄືກັບວ່າ ເຄື່ອງໝາຍດັ່ງກ່າວໄດ້ຖືກຍື່ນໃນວັນທີຂອງການລະບຸເອົາ EU ດັ້ງເດີມ ແລະ ຈະໄດ້ຮັບບູລິມະສິດເຊັ່ນກັນ, ຖ້າມີ.

ໃນການປ່ຽນແປງສະຖານະຂອງຄຳຮ້ອງຂໍຈົດທະບຽນ, ທ່ານຕ້ອງຍື່ນຄຳຮ້ອງພາຍໃນເວລາສາມເດືອນ ນັບຈາກວັນທີທີ່ການຈົດທະບຽນສາກົນຂອງທ່ານ ຖືກຍົກເລີກ ທັງໝົດ ຫຼື ບາງສ່ວນ ແລະ ລາຍການສິນຄ້າ ແລະ ການບໍລິການຂອງຄຳຮ້ອງຂໍຈົດທະບຽນ ຄວນຈະກວມເອົາບັນດາລາຍການສິນຄ້າ ແລະ ການບໍລິການ ຂອງການລະບຸເອົາ EU. ເມື່ອຄຳຮ້ອງຂໍປ່ຽນແປງສະຖານະຈົດທະບຽນ ທີ່ກ່ຽວຂ້ອງກັບການຈົດທະບຽນສາກົນ ທີ່ໄດ້ລະບຸເອົາ EU ຊຶ່ງຖືກຍອມຮັບ ແລະ ໄດ້ພິມເຜີຍແຜ່ໂດຍ EUIPO ແລ້ວ, ຂັ້ນຕອນ ການກວດສອບ ແລະການຄັດຄ້ານຈະຖືກຍົກເວັ້ນ. ເຄື່ອງໝາຍການຄ້າ EU ຈະຖືກພິມເຜີຍແຜ່ເປັນທຸກພາສາຂອງ EU ແລະ ຈະອອກໃບຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ EU.

### 6.2.9. ການປ່ຽນແປງການຈົດທະບຽນສາກົນເປັນການຈົດທະບຽນພາຍໃນປະເທດ

ຖ້າຫາກລະບົບມາດຣິດທີ່ມີການລະບຸຂອງການປົກປ້ອງໃນ EU ຖືກເພີກຖອນ, ປະຕິເສດ ຫຼື ສິ້ນສຸດຜົນ ດ້ວຍເຫດຜົນໃດກໍຕາມ, ທ່ານສາມາດຮ້ອງຂໍປ່ຽນແປງມາເປັນຄຳຮ້ອງຂໍຈົດທະບຽນພາຍໃນປະເທດ ໂດຍຍື່ນຄຳຮ້ອງໂດຍກົງກັບ ໜຶ່ງ ຫຼື ຫລາຍສຳນັກງານທີ່ເປັນສະມາຊິກ EU ຫຼື ປ່ຽນເປັນການລະບຸຂໍເພີ່ມປະເທດ ໃນບັນດາປະເທດສະມາຊິກຂອງລະບົບມາດຣິດ. ຜົນຂອງການປ່ຽນແປງດັ່ງກ່າວກໍຄື ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ການລະບຸຂໍເພີ່ມປະເທດທີ່ມີຜົນມາຈາກການປ່ຽນແປງ ຈະຖືກຈັດສັນໃຫ້ມີວັນທີຍື່ນຄຳຮ້ອງດຽວກັນຄືກັບການລະບຸຂໍການປົກປ້ອງຢູ່ໃນ EU ຕາມທີ່ໄດ້ບັນທຶກໄວ້ໃນລະບົບການຈົດທະບຽນສາກົນ (ແລະ ຍັງສາມາດນຳໃຊ້ວັນບູລິມະສິດດຽວກັນ, ຖ້າມີ).

ການລະບຸຂໍເພີ່ມປະເທດທີ່ມີຜົນມາຈາກການປ່ຽນແປງທີ່ກ່າວມານັ້ນ ຈະຖືກສົ່ງໄປຍັງ ອົງການ WIPO ໂດຍຜ່ານ EUIPO ດ້ວຍແບບພິມທາງການ (MM16) ພາຍໃນໄລຍະເວລາ ສາມເດືອນ ນັບຈາກວັນທີ ທີ່ການລະບຸຂໍປົກປ້ອງຢູ່ໃນ EU ຖືກປະຕິເສດ ຫຼື ຖືກເພີກຖອນ ຫຼື ສິ້ນສຸດຜົນ. ສຳລັບລາຍລະອຽດກ່ຽວກັບການປ່ຽນແປງນີ້, ກາລຸນາສຶກສາຂໍ້ມູນເພີ່ມເຕີມຈາກຄູ່ມືຂອງ EUIPO, ພາກ E, ໝວດ 2 ຕາມເວັບໄຊທ໌ https://euipo.europa.eu/ohimportal/en/ trade-mark-guidelines

### 6.2.10. ການປ່ຽນແທນການຈົດທະບຽນໃນສະຫະພາບເອີຣົບ (EU)

ຖ້າຫາເຄື່ອງໝາຍຂອງທ່ານໄດ້ຮັບການຈົດທະບຽນຢູ່ທີ່ EUIPO ແລ້ວ, ໃນຖານະທີເປັນເຄື່ອງໝາຍການຄ້າ EU ແລະ ທ່ານລະບຸເອົາ EU ພາຍໃຕ້ລະບົບມາດຣິດ ສຳລັບເຄື່ອງໝາຍດຽວກັນ, ທ່ານຈະໄດ້ຮັບຜົນປະໂຫຍດຈາກການປ່ຽນແທນຂອງອານຸສັນຍາມາດຣິດ (ສິດໃນການຈົດທະບຽນສາກົນຂອງທ່ານ ຢູ່ໃນ EU ຈະເລີ່ມຈາກວັນທີຂອງການຈົດທະບຽນ ເຄື່ອງໝາຍການຄ້າ EU ທີ່ມີຢູ່ແລ້ວ). ການປ່ຽນແທນ ແມ່ນເກີດຂຶ້ນໂດຍອັດຕະໂນມັດ ແລະ ບໍ່ຈຳເປັນຕ້ອງຮ້ອງຂໍບັນທຶກຂໍ້ມູນໃດໆ. ແຕ່ເຖິງຢ່າງໃນກໍຕາມ, ທ່ານສາມາດຂໍໃຫ້ EUIPO ບັນທຶກການປ່ຽນແທນດັ່ງກ່າວລົງໃນລະບົບການຈົດທະບຽນຂອງຕົນ. ຫລັງຈາກມີການປ່ຽນແທນແລ້ວ, ເຄື່ອງໝາຍການຄ້າ EU ຈະຖືກເກັບຮັກສາຢ່າງເປັນປົກກະຕິໃນລະບົບການຈົດທະບຽນ ຈົນກວ່າທ່ານຈະຕໍ່ອາຍຸຂອງການຈົດທະບຽນ. ຖ້າຫາກທ່ານຕໍ່ອາຍຸ, ຈະມີຂໍ້ມູນລວມກັນລະຫວ່າງ ເຄື່ອງໝາຍການຄ້າ EU ທີ່ຖືກປ່ຽນແທນ ແລະ ການຈົດທະບຽນສາກົນ ທີ່ລະບຸຂໍການປົກປ້ອງໃນ EU.

## 7. ສະຫຼຸບ

ອານຸສັນຍາມາດຣິດ ສະເໜີທາງເລືອກທີ່ໜ້າດຶງດູດໃຈ ໃນການປົກປ້ອງຫຍີ່ຫໍ້ຂອງທ່ານຢູ່ໃນ 122 ປະເທດໃນທົ່ວໂລກ ດ້ວຍວິທີການທີ່ປະຢັດຕົ້ນທຶນ ແລະ ມີຂັ້ນຕອນທີ່ງ່າຍດາຍສຳລັບຜູ້ໃຊ້ ເພື່ອຮັບ ແລະ ຄຸ້ມຄອງສິດໃນເຄື່ອງໝາຍການຄ້າຂອງທ່ານຢູ່ຕ່າງປະເທດ. ໃນຖານະທີ່ເປັນຄົນລາວ ຫຼື ບຸກຄົນທີ່ມີພູມລຳເນົາ ຫຼື ມີທຸລະກິດ ຢູ່ໃນ ສປປ ລາວ, ທ່ານສາມາດໄດ້ຮັບສິດໃນການນຳໃຊ້ອານຸສັນຍານີ້ ຊຶ່ງ ສປປ ລາວ ໄດ້ເຂົ້າເປັນພາຄີໃນປີ 2016. ປັດຈຸບັນນີ້, ການນຳໃຊ້ອານຸສັນຍາມາດຣິດ ຖືເປັນອົງປະກອບທີ່ສຳຄັນຢ່າງໜຶ່ງໃນຍຸດທະສາດການສ້າງຍີ່ຫໍ້ ໃຫ້ປະສົບຜົນສຳເລັດ. ອານຸສັນຍານີ້ ສະເໜີທາງເລືອກໃນການມີຍີ່ຫໍ້ ຂອງທ່ານໃນລະດັບໂລກ ແລະ ຊ່ວຍໃຫ້ທ່ານໄດ້ຮັບຊື່ສຽງໃນເວທີສາກົນ ແລະ ສ້າງພາກພົດທີ່ດີສຳລັບເຄື່ອງໝາຍການຄ້າຂອງທ່ານຢູ່ຕ່າງປະເທດໄດ້ຢ່າງວ່ອງໄວ. ອານຸສັນຍາມາດຣິດ ຮັບປະກັນການປົກປ້ອງທາງດ້ານກົດໝາຍໃຫ້ແກ່ຍີ່ຫໍ້ ຂອງທ່ານເພື່ອແຂ່ງຂັນກັບຄູ່ແຂ່ງໃນຕະຫຼາດສົ່ງອອກ, ເພີ່ມໂອກາດໃນການອະນຸຍາດໃຫ້ສິດນຳໃຊ້, ສ້າງຄວາມເປັນໄປໄດ້ໃນການເປັນຫຸ້ນສ່ວນ ແລະ ອຳນວຍຄວາມສະດວກໃນການເຊື່ອມໂຍງເຂົ້າກັບຕ່ອງໂສ້ການສະໜອງທົ່ວໂລກ. ໂດຍລວມແລ້ວ, ອານຸສັນຍານີ້ ຈະໃຫ້ການສະໜັບສະໜູນຜົນສຳເລັດຂອງທຸລະກິດ ແລະ ຍຸດທະສາດການສ້າງຫຍີ່ຫໍ້ຂອງທ່ານໃຫ້ມີປະສິດທິຜົນທີ່ສຸດ.

## ສະມາຊິກສະຫະພາບ ມາດຣິດ

107 ສະມາຊິກ (ລວມທັງສະຫະພາບເອີຣົບ ແລະ OAPI) ກວມເອົາ 123 ປະເທດ ໃນວັນທີ 12 ມັງກອນ 2021



ອັບການິສະຖານ, ອົງການຊັບສິນທາງປັນຍາອາຟຣິກກາ (OAPI)[6], ອານບາເນຍ, ອານຈີເຣຍ, ອັນຕີກົວ ແລະ ບາບູດາ, ອາເມເນຍ, ອົດສະຕຣາລີ, ອົດສະເຕຣຍ, ອາເຊີໄບຈັນ, ບາເຣນ, ເບລາຣຸດ, ເບລຢຽມ, ບູຖານ, ບອດສະເນຍ ແລະ ເຮີເຊໂກວີນາ, ບອດສະວານາ, ບຣາຊິນລ໌, ບຣູໄນ ດາຣາຊາລຳ, ບູນກາຣີ, ກຳປູເຈຍ, ການາດາ, ຈີນ, ໂຄລົມເບຍ, ໂຄຣເອເຊຍ, ກຸຍບາ, ໄຊປຣັດ, ສາທາລະນະລັດເຊັກ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນເກົາຫຼີ, ເດັນມາກ, ອີຢິບ, ເອັດສະໂຕເນຍ, ເອັສວາຕີນີ, ສະຫະພາບເອີຣົບ[7], ຟິນແລນ, ຝຣັ່ງ, ກຳເບຍ, ຈໍເຈຍ, ເຢຍລະມັນ, ການາ, ເກຣັກ, ຮັງກາຣີ, ໄອແລນ, ອິນເດຍ, ອິນໂດເນເຊຍ, ອີຣານ (ສາທາລະນະລັດອິສະລາມິກ), ໄອແລນ, ອິສະຣາແອລ, ອີຕາລີ, ຍີ່ປຸ່ນ, ກາສັກສະຖານ, ເຄນຢາ, ກີຈີສະຖານ, ສປປ ລາວ, ລັດເວຍ, ເລໂຊໂທ, ລີເບີເຣຍ, ລີກເທນສະໄຕ, ລິທົວເນຍ, ລັກເຊມເບີກ, ມາດາກາສະກາ, ມາລາວີ, ມາເລເຊຍ, ເມັກຊິກໂກ, ໂມນາໂຄ, ມົງໂກເລຍ, ມອນເຕເນໂກຣ, ໂມຣັອກໂຄ, ໂມຊຳບິກ, ນາມິເບຍ, ເນເທີແລນ, ນິວຊີແລນ, ມາເຊໂດນີເໜືອ,ນໍເວ, ໂອມານ, ຟີລິບປິນ, ໂປແລນ, ປັອກຕຸຍການ, ສ.ເກົາຫຼີ, ສ.ມອນໂດວາ, ໂຣມາເນຍ, ສະຫະພັນລັດເຊຍ, ຣາວັນດາ, ຊາມົວ, ຊານມາຣີໂນ, ຊາວໂຕເມ ແລະ ປຣິນຊິປີ, ເຊີເບຍ, ເຊຣາ ລີໂອນ, ສິງກະໂປ, ສະໂລວາເກຍ, ສະໂລວາເນຍ, ສະເປນ, ຊູດານ, ສະວີເດັນ, ສະວິດເຊີແລນ, ສາທາລະນະລັດອາຣັບຊີເຣຍ, ຕາຈິກິສະຖານ, ໄທ, ຕຣີນິດາດ ແລະ ໂຕບາໂກ, ຕູນີເຊຍ, ຕູຣາກີ, ເຕີກເມນິສະຖານ, ຢູເຄຣນ, ຣາຊະອານາຈັກ, ສະຫະລັດອາເມລິກາ, ອູສະເບກິສະຖານ, ຫວຽດນາມ, ຊຳເບຍ, ຊິມບາເວ (107)

---

*[6] ການລະບຸຂໍການປົກປ້ອງໃນ OAPI ກວມເອົາປະເທດສະມາຊິກທັງໝົດ, ເຊັ່ນ: ເບນິນ, ເບີກິນາຟາໂຊ, ແຄມເມີຣູນ, ສ.ອາຟຣິກາກາງ, ຈາດ, ໂຄໂມໂຣສ, ຄອງໂກ, ໂຄດິວວາ, ອີກວາທໍເຣຍ ກີນີ, ກາບອງ, ກີນີ-ບີເຊົາ, ກີນີ, ມາລີ, ມໍຣິເຕເນຍ, ໄນເຈີ, ເຊເນການ, ໂຕໂກ (17)*

*[7] ການລະບຸຂໍການປົກປ້ອງໃນ ສະຫະພາບເອີຣົບ ກວມເອົາປະເທດສະມາຊິກທັງໝົດ ຄື: ອອສເຕຣຍ, ແບນຊິກ, ບຸນກາລີ, ໂຄຣເອເຊຍ, ໄຊປຣັສ, ສາທາລະນະລັດເຊັກ, ເດນມາຣ໌ກ, ເອັສໂຕເນຍ, ຟິນແລນ, ຝຣັ່ງ, ເຢຍລະມັນ, ເກຣັກ, ຮົງກາຣີ, ອຽກລັງ, ອີຕາລີ, ລັດເວຍ, ລິດຕົວເນຍ, ລຸກຊໍາບວກ, ມານລ໌ຕາ, ຮອນລັງ, ໂປໂລຍ, ປອກຕຸຍການລ໌, ຣູມານີ, ສະໂລວາກີ, ສະໂລວານີ, ແອັດສະປາຍ, ສະວີເດັນ (27)*

ARISE+
ASEAN Intellectual Property Rights

## ຄຳສັບຫຍໍ້

| | |
|---|---|
| **ASEAN** | ປະຊາຄົມອາຊີຕາເວັນອອກສ່ຽງໃຕ້ |
| **BOIP** | ສຳນັກງານຊັບສິນທາງປັນຍາເບັນນາລັກ |
| **CHF** | ສະວິດຟຣັ່ງ |
| **DCP** | ພາຄີທີ່ຖືກລະບຸຂໍການປົກປ້ອງ |
| **DIP** | ກົມຊັບສິນທາງປັນຍາ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ສປປ ລາວ |
| **EM** | ລະຫັດສອງຕົວອັກສອນ ໃຊ້ເພື່ອກຳນົດ ສະຫະພາບເອີຣົບ ໃນແບບພິມຂອງອານຸສັນຍາມາດຣິດ |
| **EU** | ສະຫະພາບ ເອີຣົບ |
| **EUIPO** | ສຳນັກງານຊັບສິນທາງສະຫະພາບ ເອີຣົບ |
| **EUTM** | ເຄື່ອງໝາຍການຄ້າສະຫະພາບ ເອີຣົບ |
| **IA** | ຄຳຮ້ອງສາກົນພາຍໃຕ້ຂັ້ນຕອນຂອງອານຸສັນຍາມາດຣິດ |
| **IR** | ການຈົດທະບຽນສາກົນ ພາຍໃຕ້ຂັ້ນຕອນຂອງອານຸສັນຍາມາດຣິດ |
| **MGS** | ເຄື່ອງມືຈັດໝວດລາຍການສິນຄ້າ ແລະ ການບໍລິການຂອງລະບົບມາດຣິດ |
| **OAPI** | ອົງການຊັບສິນທາງປັນຍາອາຟຣິກກາ |
| **WIPO** | ອົງການຊັບສິນທາງປັນຍາໂລກ |

## ການອະທິບາຍຄຳສັບ

ເຄື່ອງໝາຍເບື້ອງຕົ້ນ ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ຫຼື ການຈົດທະບຽນຢູ່ໃນສະມາຊິກສະຫະພາບມາດຣິດ ທີ່ໃຊ້ເປັນຖານຂອງຄຳຮ້ອງສາກົນ

| | |
|---|---|
| **ພາຄີ** | ລັດ ແລະ ອົງການຈັດຕັ້ງລະຫວ່າງລັດຖະບານທີ່ເປັນພາຄີຂອງອານຸສັນຍາມາດຣິດ |
| **ຄຳຮ້ອງສາກົນ** | ຄຳຮ້ອງຂໍຈົດທະບຽນເພື່ອການຈົດທະບຽນເຄື່ອງໝາຍການຄ້າພາຍໃຕ້ຂັ້ນຕອນຂອງອານຸສັນຍາມາດຣິດ |
| **ການຈົດທະບຽນສາກົນ** | ການຈົດທະບຽນເຄື່ອງໝາຍການຄ້າສາກົນ ພາຍໃຕ້ຂັ້ນຕອນຂອງອານຸສັນຍາມາດຣິດ |
| **ສະຫະພາບມາດຣິດ** | ສະຫະພັນຖະລັດ ແລະ ອົງການຈັດຕັ້ງລະຫວ່າງລັດຖະບານທີ່ເປັນພາຄີຂອງອານຸສັນຍາມາດຣິດ |
| **ອານຸສັນຍາມາດຣິດ** | ອານຸສັນຍາ ປີ 1989 ກ່ຽວກັບສິນທິສັນຍາມາດຣິດທີ່ຕິດພັນກັບການຈົດທະບຽນສາກົນຂອງເຄື່ອງໝາຍ |
| **ລະບົບມາດຣິດ** | ລະບົບການຈົດທະບຽນສາກົນຂອງເຄື່ອງໝາຍການຄ້າພາຍໃຕ້ອານຸສັນຍາມາດຣິດ ແລະ ຄຸ້ມຄອງໂດຍອົງການ WIPO |
| **ສະມາຊິກສະຫະພາບມາດຣິດ** | ພາຄີຂອງອານຸສັນຍາມາດຣິດ |
| **ການຈັດໝວດສາກົນ** | ແມ່ນການຈັດໝວດສາກົນຂອງລາຍການສິນຄ້າ ແລະ ການບໍລິການ ເພື່ອຈຸດປະສົງຂອງການຈົດທະບຽນເຄື່ອງໝາຍ, ສ້າງຂຶ້ນໂດຍ ສົນທິສັນຍານີສ (Nice) ປີ 1957 ປັບປຸງ ປີ 1979 |
| **ການລະບຸຂໍເພີ່ມປະເທດ** | ແມ່ນການສະເໜີຂໍຂະຫຍາຍການປົກປ້ອງການຈົດທະບຽນສາກົນ ໄປສູ່ ໜຶ່ງ ຫຼື ຫລາຍພາຄີ |

## ເຄື່ອງມືອອນລາຍ ແລະ ການບໍລິການແບບບໍ່ເສຍຄ່າ ສຳລັບຜູ້ນຳໃຊ້ລະບົບມາດຣິດ

**ASEAN TMclass** – http://www.asean-tmclass.org/ec2/
ເຄື່ອງມືທາງອອນລາຍທີ່ອຳນວຍຄວາມສະດວກໃຫ້ແກ່ການກຳນົດ ແລະ ການຈັດໝວດຂອງລາຍການສິນຄ້າ ແລະ ການບໍລິການ ສຳລັບການຈົດທະບຽນເຄື່ອງໝາຍ ຢູ່ໃນສຳນັກງານຊັບສິນທາງປັນຍາອາຊຽນ

**ASEAN TMview** – http://www.asean-tmview.org/tmview/welcome
ຖານຂໍ້ມູນທີ່ອຳນວຍຄວາມສະດວກໃນການກວດຄົ້ນຂໍ້ມູນກ່ຽວກັບເຄື່ອງໝາຍການຄ້າ ຢູ່ໃນ 9 ສຳນັກງານຊັບສິນທາງປັນຍາອາຊຽນ

**E-Subsequent Designation** – https://www3.wipo.int/osd/
ສິ່ງອຳນວຍຄວາມສະດວກແບບອີເລັກໂຕຣນິກ ສຳລັບການຍື່ນຄຳຮ້ອງລະບຸຂໍເພີ່ມປະເທດ ພາຍໃຕ້ອານຸສັນຍາມາດຣິດ

**EUIPO Representatives Database** – https://euipo.europa.eu/eSearch/#advanced/representatives
ຖານຂໍ້ມູນຂອງຜູ້ຕາງໜ້າ ທີ່ເກັບຮັກສາໂດຍ ສຳນັກງານຊັບສິນທາງປັນຍາຂອງສະຫະພາບ ເອີຣົບ

**EUIPO Trade Mark Guidelines** – https://euipo.europa.eu/ohimportal/en/trade-mark-guidelines
ບົດສະຫຼຸບກ່ຽວກັບການປະຕິບັດຂັ້ນຕອນການຈົດທະບຽນເຄື່ອງໝາຍການຄ້າ EU ຂອງ EUIPO

**EUIPO Trade Mark website** – https://euipo.europa.eu/ohimportal/en/trade-marks
ເວັບໄຊທ໌ ກ່ຽວກັບເຄື່ອງໝາຍການຄ້າ ຂອງສຳນັກງານຊັບສິນທາງປັນຍາຂອງສະຫະພາບເອີຣົບ

**EUTM Bulletin** – https://euipo.europa.eu/eSearch/#advanced/bulletins
ການພິມເຜີຍແຜ່ທາງການຂອງ EUIPO ປະກອບດ້ວຍຂໍ້ມູນຫຼ້າສຸດກ່ຽວກັບການຈົດທະບຽນເຄື່ອງໝາຍການຄ້າ EU

**EUTM Fee** – https://euipo.europa.eu/ohimportal/en/fees-payable-direct-to-euipo
ຄ່າທຳນຽມສຳລັບການຈົດທະບຽນເຄື່ອງໝາຍການຄ້າ EU ແລະ ຂັ້ນຕອນທີ່ກ່ຽວຂ້ອງ

**EUTM online filing** – https://euipo.europa.eu/ohimportal/en/apply-now
ສິ່ງອຳນວຍຄວາມສະດວກແບບອີເລັກໂຕຣນິກ ສຳລັບການຍື່ນຄຳຮ້ອງຈົດທະບຽນເຄື່ອງໝາຍການຄ້າ EU ຕາມເວັບໄຊທ໌ຂອງ EUIPO

**Fee Calculator** – http://www.wipo.int/madrid/en/fees/calculator.jsp
ເຄື່ອງມືອຳນວຍຄວາມສະດວກສຳລັບຄຳນວນຄ່າທຳນຽມໃນການຍື່ນຄຳຮ້ອງສາກົນ, ການລະບຸຂໍເພີ່ມປະເທດ ແລະ ການຕໍ່ອາຍຸພາຍໃຕ້ລະບົບມາດຣິດແບບອອນລາຍ ຊຶ່ງບໍລິຫານໂດຍອົງການ WIPO.

**Global Brand Database** – http://www.wipo.int/branddb/en/index.jsp
ຊຶ່ງເປັນຖານຂໍ້ມູນອອນລາຍ ທີ່ຄຸ້ມຄອງໂດຍອົງການ WIPO ທີ່ໄດ້ເກັບກຳ ແລະ ບັນທຶກຂໍ້ມູນຂອງສຳນວນຄຳຮ້ອງຫຼາຍກວ່າ 44 ລ້ານສະບັບຈາກ 67 ສຳນັກງານແຫ່ງຊາດ ແລະ ສາກົນ (ເຄື່ອງໝາຍການຄ້າ, ຖິ່ນກຳເນີດ, ກາໝາຍຂອງປະເທດ ແລະ ອື່ນໆ.)

**Madrid Application Assistant** – https://www.wipo.int/madrid/application-assistant/
ເຄື່ອງມືຂອງ WIPO ທີ່ຊ່ວຍໃນການປະກອບແບບພິມຄຳຮ້ອງສາກົນ (MM2)

**Madrid Forms** – http://www.wipo.int/madrid/en/forms/
ເວັບໄຊທ໌ຂອງອົງການ WIPO ທີ່ສາມາດດາວໂຫລດແບບພິມຂອງລະບົບມາດຣິດ.

**Madrid Goods and Services Manager (MGS)** – https://webaccess.wipo.int/mgs/
ເຄື່ອງມືອອນລາຍທີ່ຄຸ້ມຄອງໂດຍອົງການ WIPO ໃຊ້ສໍາລັບການຈັດໝວດລາຍການສິນຄ້າ ແລະ ການບໍລິການຂອງລະບົບມາດຣິດ ເມື່ອຍື່ນຄໍາຮ້ອງສາກົນ.

**Madrid Guide** – http://www.wipo.int/madrid/en/guide/
ຄູ່ມືການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍ ຂອງອົງການ WIPO

**Madrid Member Profiles Database** – http://www.wipo.int/madrid/memberprofiles/#/
ຖານຂໍ້ມູນທີ່ຄຸ້ມຄອງໂດຍອົງການ WIPO ທີ່ສະໜອງຂໍ້ມູນກ່ຽວກັບຂັ້ນຕອນຕ່າງໆ ແລະ ການປະຕິບັດທີ່ມີຜົນຕໍ່ການຈົດທະບຽນສາກົນຢູ່ໃນບັນດາສະມາຊິກສະຫະພາບມາດຣິດ

**Madrid Monitor** – http://www.wipo.int/madrid/monitor/en/
ການບໍລິການແບບອີເລັກໂຕຣນິກ ຂອງອົງການ WIPO ທີ່ຊ່ວຍໃຫ້ທ່ານເຂົ້າເຖິງຂໍ້ມູນທັງໝົດກ່ຽວກັບເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນພາຍໃຕ້ລະບົບມາດຣິດ

**TMclass** – http://euipo.europa.eu/ec2/
ເຄື່ອງມືອໍານວຍຄວາມສະດວກແບບອອນລາຍ ທີ່ຊ່ວຍໃນການກໍານົດ ແລະ ການຈັດໝວດຂອງລາຍການສິນຄ້າ ແລະ ການບໍລິການ ສໍາລັບການຈົດທະບຽນເຄື່ອງໝາຍ ຢູ່ໃນສໍານັກງານເຄື່ອງຫມາຍການຄ້າ 79 ແຫ່ງ

**TMview** – https://www.tmdn.org/tmview/welcome
ຖານຂໍ້ມູນທີ່ສາມາດເຂົ້າເຖິງຂໍ້ມູນຂອງເຄື່ອງໝາຍການຄ້າ 60 ລ້ານເຄື່ອງໝາຍ ຈາກຫຼາຍກວ່າ 100 ປະເທດ

**WIPO Gazette of International Marks** – http://www.wipo.int/madrid/monitor/en/#gazettnd/
ການພິມເຜີຍແຜ່ທາງການຂອງລະບົບມາດຣິດປະຈໍາສັບປະດາ ທີ່ບັນຈຸຂໍ້ມູນຫຼ້າສຸດກ່ຽວກັບ ການຈົດທະບຽນສາກົນ, ການຕໍ່ອາຍຸ, ການລະບຸຂໍເພີ່ມປະເທດ ແລະ ການດັດແກ້ຂໍ້ມູນທີ່ມີຜົນຕໍ່ການຈົດທະບຽນໃນປັດຈຸບັນ

**WIPO IP Portal** – https://ipportal.wipo.int/
ຖານຂໍ້ມູນອອນລາຍ ທີ່ໃຫ້ການເຂົ້າເຖິງການບໍລິການຕ່າງໆຂອງ WIPO, ລວມທັງການຕໍ່ອາຍຸແບບເອເລັກໂຕຣນິກ (Madrid e-Renewal) ແລະ ລະບົບຄຸ້ມຄອງເອກະສານເອກະສານການຈົດທະບຽນເຄື່ອງໝາຍການຄ້າ ຜ່ານລະບົບມາດຣິດ (Madrid Portfolio Manager) ທີ່ຊ່ວຍໃຫ້ທ່ານຄຸ້ມຄອງເອກະສານການຈົດທະບຽນເຄື່ອງໝາຍການຄ້າສາກົນຂອງທ່ານ.

**WIPO Lex** – http://www.wipo.int/wipolex/en/index.html
ຖານຂໍ້ມູນທີ່ສາມາດເຂົ້າເຖິງຂໍ້ມູນນິຕິກໍາກ່ຽວກັບຊັບສິນທາງປັນຍາໃນທົ່ວໂລກ (ສົນທິສັນຍາ, ກົດໝາຍ, ລະບຽບການ)

**WIPO User Account** – https://www3.wipo.int/wipoaccounts/generic/public/register.xhtml
ບັນຊີຜູ້ໃຊ້ ທີ່ມີຄວາມປອດໄພໃນການເຂົ້າເຖິງລະບົບ WIPO IP Portal ແລະ ການບໍລິການຕ່າງໆຂອງ WIPO ເຊັ່ນ: Madrid Portfolio Manager (MPM)

ARISE+
ASEAN Intellectual Property Rights



# ອານຸສັນຍາ
# ມາດຣິດ